# ການພັດທະນາແບບຍືນຍົງຕາມທິດສີຂຽວ ກໍລະນີສຶກສາ
# "ການຜະລິດກະສິກຳອິນຊີ ແລະ ການທ່ອງທ່ຽວອະນຸລັກນິເວດວິທະຍາແບບມີສ່ວນຮ່ວມ"



ກະຊວງແຜນການ ແລະ ການລົງທຶນ
ສະຖາບັນຄົ້ນຄວ້າວິໄຈການພັດທະນາ
ພະແນກຄົ້ນຄວ້ານະໂຍບາຍສັງຄົມ ແລະ ຫຼຸດຜ່ອນຄວາມທຸກຍາກ

**ຄະນະສ້າງບົດຄົ້ນຄວ້າການພັດທະນາແບບຍືນຍົງຕາມທິດສີຂຽວ ກໍລະນີສຶກສາ "ການຜະລິດກະສິກໍາ ອິນຊີ ແລະ ການທ່ອງທ່ຽວອະນຸລັກນິເວດວິທະຍາແບບມີສ່ວນຮ່ວມ"**

**ຄະນະຊີ້ນໍາລວມ**

**ທ່ານ ປອ ສິດທິຣິດ ຣາຊະພົນ**
ຫົວໜ້າສະຖາບັນຄົ້ນຄວ້າວິໄຈການພັດທະນາ

**ທ່ານ ນ. ສີສະຫວັນ ດີດາຣາວົງ**
ຮອງຫົວໜ້າສະຖາບັນຄົ້ນຄວ້າວິໄຈການພັດທະນາ

**ທ່ານ ປອ ທະນົງຊາຍ ສຸກຄໍາຫັດ**
ຮອງຫົວໜ້າສະຖາບັນຄົ້ນຄວ້າວິໄຈການພັດທະນາ

**ຜູ່ຂຽນບົດຄົ້ນຄວ້າ**

**ທ່ານ ວຽງຄອນ ບົວພະຈັນ**
ຫົວໜ້າພະແນກຄົ້ນຄວ້ານະໂຍບາຍສັງຄົມ ແລະ ຫຼຸດຜ່ອນຄວາມທຸກຍາກ

**ທ່ານ ພຸດທະຈັນ ຕົ້ນແພງ**
ຮອງຫົວໜ້າພະແນກຄົ້ນຄວ້ານະໂຍບາຍສັງຄົມ ແລະ ຫຼຸດຜ່ອນຄວາມທຸກຍາກ

**ທ່ານ ວົງພະຈັນ ໄຊຍະລາດ**
ຮອງຫົວໜ້າພະແນກຄົ້ນຄວ້ານະໂຍບາຍສັງຄົມ ແລະ ຫຼຸດຜ່ອນຄວາມທຸກຍາກ

**ທ່ານ ສົມຊາຍ ພົ້ງເວັນໄຊ**
ວິຊາການ, ພະແນກຄົ້ນຄວ້ານະໂຍບາຍສັງຄົມ ແລະ ຫຼຸດຜ່ອນຄວາມທຸກຍາກ

**ທ່ານ ຄໍາປະເສີດ ແກ້ວວົງສຸດທິ**
ວິຊາການ, ພະແນກຄົ້ນຄວ້ານະໂຍບາຍສັງຄົມ ແລະ ຫຼຸດຜ່ອນຄວາມທຸກຍາກ

**ອອກແບບໂດຍ:** **ພະແນກຄົ້ນຄວ້ານະໂຍບາຍສັງຄົມ ແລະ ຫຼຸດຜ່ອນຄວາມທຸກຍາກ**

## ຄຳນຳ

ສປປ ລາວ ເປັນປະເທດໜຶ່ງທີ່ມີຄວາມອຸດົມສົມບູນດ້ານຊັບພະຍາກອນທຳມະຊາດເໝາະສົມກັບການພັດທະນາກະສິກຳໃນຫຼາຍປະເພດ. ປະຊາຊົນລາວ ປະມານເກືອບ ສາມສ່ວນສີ່ ຂອງປະຊາກອນທັງໝົດຍັງດຳລົງຊີວິດຢູ່ກັບການຜະລິດກະສິກຳ ເປັນອາຊີບຕົ້ນຕໍ ໂດຍສະເພາະຢູ່ເຂດຊົນນະບົດ. ເຖິງແມ່ນວ່າ ຂະແໜງກະສິກຳຈະມີບົດບາດສຳຄັນຕໍ່ກັບການຂະຫຍາຍຕົວເສດຖະກິດ ແລະ ການດຳລົງຊີວິດຂອງປະຊາຊົນຢູ່ ສປປ ລາວກໍ່ຕາມ, ແຕ່ໃນໄລຍະທົດສະວັດ ຜ່ານມານີ້ ເຫັນໄດ້ວ່າ ການປະກອບສ່ວນຂອງຂະແໜງການກະສິກຳ ຢູ່ໃນໂຄງປະກອບເສດຖະກິດ ມີທ່າອ່ຽງທີ່ຫຼຸດລົງຈາກລະດັບ 42 ສ່ວນຮ້ອຍ ໃນປີ 2005-06 ມາເປັນ 23 ສ່ວນຮ້ອຍຂອງ GDPໃນປີ 2014-2015 ແລະ ປັດຈຸບັນ ໃນປີ 2020 ມາເປັນ 15,20 ສ່ວນຮ້ອຍ ຂອງ GDP ອີງໃສ່ຕົວເລກອ້າງອີງແລ້ວ ອັດຕາການຂະຫຍາຍຕົວຂອງຂະແໜງກະສິກຳ ສະເລ່ຍມີພຽງປະມານ 2,7 ສ່ວນຮ້ອຍຕໍ່ປີ.

ໃນໄລຍະຜ່ານມາ ລັດຖະບານແຫ່ງ ສປປ ລາວ ຍາມໃດກໍ່ໄດ້ເອົາໃຈໃສ່ພັດທະນາຂະແໜງການກະສິກຳໂດຍໄດ້ກຳນົດທິດເອົາສິນຄ້າກະສິກຳເປັນສິນຄ້າປາຍແຫຼມ. ພ້ອມດຽວກັນນັ້ນ, ກໍ່ໄດ້ສ້າງຍຸດທະສາດ ແລະນະໂຍບາຍການພັດທະນາກະສິກຳໃນແຕ່ລະໄລຍະ ແລະຈັດສັນທຶນຮອນຢ່າງມະຫາສານເຂົ້າສູ່ວຽກງານດັ່ງກ່າວ. ຊຶ່ງການຜະລິດກະສິກຳສະອາດ ແມ່ນລວມມີ: ການຜະລິດກະສິກຳທີ່ດີ (GAP=Good Agriculture Practice) ແລະການຜະລິດກະສິກຳອິນຊີກໍມີຮູບແບບການຜະລິດກະສິກຳສະອາດອື່ນໆ ເຊັ່ນ: ການຜະລິດທີ່ບໍ່ນຳໃຊ້ຢາປາບສັດຕູພືດ ແລະການຜະລິດກະສິກຳແບບອະນຸລັກ. ສຳລັບສິນຄ້າກະສິກຳອິນຊີ ແລະສະອາດນີ້ ເຫັນວ່າສາມາດສ້າງມູນຄ່າເພີ່ມທີ່ສູງ ແລະຍັງເປັນມິດຕໍ່ກັບສິ່ງແວດລ້ອມ, ສິ່ງດັ່ງກ່າວນີ້ຈະເຮັດໃຫ້ ສປປ ລາວ ກາຍເປັນປະເທດທີ່ມີຊັບພະຍາກອນທຳມະຊາດທີ່ອຸດົມ ສົມບູນຕາມທິດສີຂຽວ ແລະກາຍເປັນທ່າແຮງໃນການສົ່ງເສີມການທ່ອງທ່ຽວແບບນິເວດ ໂດຍການມີສ່ວນຮ່ວມຂອງປະຊາຊົນເພື່ອສ້າງລາຍຮັບໃຫ້ແກ່ປະຊາຊົນໃນທ້ອງຖິ່ນໃຫ້ເພີ່ມຂຶ້ນ ແລະມີຄວາມຍືນຍົງ, ອີກດ້ານໜຶ່ງເພື່ອຮອງຮັບໃຫ້ແກ່ການທ່ອງທ່ຽວ ແລະການບໍລິການອື່ນໆທີ່ມີການຂະຫຍາຍຕົວການທ່ອງທ່ຽວໄດ້ກາຍເປັນກຳລັງແຮງດຶງດູດການລົງທຶນຈາກພາກສ່ວນທຸລະກິດທັງພາຍໃນ ແລະຕ່າງປະເທດເພີ່ມຂຶ້ນໃນແຕ່ລະປີ ເປັນຕົ້ນແມ່ນການລົງທຶນໃສ່ການພັດທະນາແຫຼ່ງທ່ອງທ່ຽວ ແລະການສ້າງຜະລິດຕະພັນການທ່ອງທ່ຽວໃໝ່ຢູ່ບັນດາແຂວງໃນທົ່ວປະເທດ.

ເຖິງຢ່າງໃດກໍ່ຕາມ,ຂະບວນການສົ່ງເສີມດັ່ງກ່າວຍັງມີຄວາມຮຽກຮ້ອງຕ້ອງການໃຫ້ລັດຖະບານຕ້ອງໄດ້ລົງທຶນໃສ່ວຽກງານສ້າງຄວາມອາດສາມາດດ້ານການຜະລິດໃຫ້ແກ່ປະຊາຊົນ, ວຽກງານຢັ້ງຢືນມາດຕະຖານແລະຄຸນນະພາບຂອງສິນຄ້າ ແລະການເຂົ້າເຖິງຕະຫຼາດ ເພື່ອຊຸກຍູ້ໃຫ້ການຜະລິດດັ່ງກ່າວມີການຂະຫຍາຍຕົວໃນທົ່ວປະເທດ. ໃນປັດຈຸບັນມູນຄ່າການຜະລິດ ແລະສົ່ງອອກສິນຄ້າອິນຊີ ແລະສະອາດ ເຫັນວ່າຍັງມີຈຳນວນໜ້ອຍຫຼາຍ.

ຈາກເຫດຜົນດັ່ງກ່າວນີ້ຈຶ່ງມີຄວາມຈຳເປັນຢ່າງຍິ່ງຈະຕ້ອງໄດ້ກຳນົດເປົ້າໝາຍການລົງທຶນເພື່ອສົ່ງເສີມກະສິກຳອິນຊີທີ່ຕິດພັນກັບການທ່ອງທ່ຽວແບບມີສ່ວນຮ່ວມເພື່ອສ້າງຜົນປະໂຫຍດໃຫ້ແກ່ປະຊາຊົນ ແລະການເປັນຢູ່ທີ່ດີຂຶ້ນລັດຖະບານຈຳເປັນຕ້ອງໄດ້ສົ່ງເສີມ ແລະຊອກຫາຊ່ອງທາງຕະຫຼາດໃຫ້ກັບປະຊາຊົນໃນການສົ່ງອອກສິນຄ້າກະສິກຳອິນຊີໃຫ້ຫຼາຍຊ່ອງທາງກວ່າເກົ່າ.

ບົດລາຍງານສະບັບນີ້ ໄດ້ສະເໜີຜົນຂອງການຄົ້ນຄວ້າທີ່ເນັ້ນໃສ່ການປະເມີນຜົນກະທົບ ແລະຕີລາຄາຄືນຕໍ່ກັບສິ່ງກີດຂວາງ ແລະສິ່ງທ້າທາຍຂອງວຽກງານການຜະລິດກະສິກຳອິນຊີ ແລະການທ່ອງທ່ຽວແບບມີສ່ວນຮ່ວມໂດຍອີງຕາມຂໍ້ມູນປະຖົມພູມ (ຂໍ້ມູນມືໜຶ່ງ) ທີ່ໄດ້ຈາກການສຳຫຼວດ, ການສົນທະນາ-ປຶກສາຫາລືເປັນກຸ່ມກັບອຳນາດການປົກຄອງຕ່າງໆແຕ່ຂັ້ນສູນກາງໄປຈົນເຖິງຂັ້ນບ້ານ ແລະ ການສຳພາດຄົວເຮືອນຕົວແບບ,ພ້ອມທັງໃຊ້ຂໍ້ມູນທຸຕິຍະພູມ (ຂໍ້ມູນມືສອງ)ຈາກແຫຼ່ງຕ່າງໆລວມທັງບັນດາເອກະສານ ແລະບົດຄົ້ນຄວ້າຕ່າງໆ ທີ່ກ່ຽວຂ້ອງທັງພາຍໃນ ແລະຕ່າງປະເທດ. ເຊິ່ງຜົນຂອງການຄົ້ນຄວ້າຄັ້ງນີ້ໄດ້ຍົກໃຫ້ເຫັນເຖິງຄວາມສຳຄັນຕໍ່ກັບນະໂຍບາຍການສົ່ງເສີມການຜະລິດກະສິກຳອິນຊີ ທີ່ເປັນແບບດັ້ງເດີມ ແລະແບບທັນສະໄໝຕິດພັນກັບການທ່ອງທ່ຽວແບບອານຸລັກທຳມະຊາດ ເພື່ອໃຫ້ປະຊາຊົນມີສ່ວນຮ່ວມ ຕາມທິດການເຕີບໂຕສີຂຽວ ແລະເປັນຂໍ້ມູນຮັບໃຊ້ສຳລັບການວາງແຜນ ແລະ ການຕັດສິນໃຈໃນການແກ້ໄຂບັນຫາຕ່າງໆທີ່ເປັນສິ່ງກີດຂວາງຕໍ່ກັບການຜະລິດກະສິກຳອິນຊີ ແລະການທ່ອງທ່ຽວແບບມີສ່ວນຮ່ວມລະບົບນິເວດໃນ   ສ ປປ ລາວ.

ການຄົ້ນຄວ້າດັ່ງກ່າວຍັງໄດ້ລວມເອົາການສ້າງຄວາມອາດສາມາດໃຫ້ກັບບັນດາສະຖາບັນ ແລະການຈັດຕັ້ງທີ່ກ່ຽວຂ້ອງເພື່ອຮັບປະກັນໃຫ້ກິດຈະກຳການຄົ້ນຄວ້າກ່ຽວກັບວຽກງານນີ້ຈັດຕັ້ງປະຕິບັດດຳເນີນການໄປຢ່າງຍືນຍົງ. ນອກນັ້ນຍັງປະກອບສ່ວນສຳຄັນສຳລັບການເພີ່ມຄວາມຮູ້ຄວາມສາມາດໃຫ້ແກ່ຜູ້ວາງນະໂຍບາຍໃນລະດັບສູນກາງ ແລະ ທ້ອງຖິ່ນອີກດ້ວຍ.

ຂ້າພະເຈົ້າໃນນາມຫົວໜ້າສູນຄົ້ນຄວ້ານະໂຍບາຍການພັດທະນາ, ກະຊວງແຜນການ ແລະການລົງທຶນ ພ້ອມທັງເປັນຜູ້ບໍລິຫານໂຄງການລົງທຶນຂອງລັດ ພ້ອມດ້ວຍທີມງານສຶກສາ-ຄົ້ນຄວ້າ ຂອງສູນຄົ້ນຄວ້ານະໂຍບາຍການພັດທະນາ ຂໍສະແດງຄວາມຮູ້ບຸນຄຸນ ແລະຂໍຂອບໃຈເປັນຢ່າງສູງມາຍັງ ຄະນະພັກ, ຄະນະນຳກະຊວງແຜນການ ແລະການລົງທຶນ, ລັດຖະບານ ແຫ່ງ ສ ປປ ລາວ ທີ່ໃຫ້ຄວາມໄວ້ເນື້ອເຊື່ອໃຈໃນການສຶກສາ-ຄົ້ນຄວ້າຫົວຂໍ້ນີ້ ແລະໃຫ້ການສະໜັບສະ  ໜູນດ້ານທຶນຮອນໃຫ້ແກ່ພວກເຮົາຕາມຄວາມສາມາດຕົວຈິງ. ຂໍຂອບໃຈທີມງານຂັ້ນແຂວງ, ບັນດາເມືອງເປົ້າໝາຍ  ແລະຜູ້ປະສານງານທີ່ໄດ້ທຸ່ມເທຢ່າງເຕັມທີ່ເພື່ອເຮັດໃຫ້ການເກັບກຳຂໍ້ມູນໃນຄັ້ງນີ້ສຳເລັດຕາມເປົ້າໝາຍທີ່ວາງໄວ້.

ຂ້າພະເຈົ້າຫວັງຢ່າງຍິ່ງວ່າບົດສຶກສາ-ຄົ້ນຄວ້ານີ້ຈະເປັນເອກະສານອ້າງອີງທີ່ສຳຄັນ ແລະເປັນປະໂຫຍດໃຫ້ກັບຜູ້ວາງນະໂຍບາຍ, ຜູ້ໃຫ້ທຶນ, ນັກຄົ້ນຄວ້າ, ນັກສຶກສາ, ຜູ້ທີ່ຈັດຕັ້ງປະຕິບັດວຽກງານນີ້ໂດຍກົງ ແລະພາກສ່ວນທີ່ກ່ຽວຂ້ອງເພື່ອຮັບໃຊ້ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມຂອງຕົນພໍສົມຄວນ.

**ທ່ານ ປອ ສິດທິຣິດ ຣາຊະພົນ**

ຫົວໜ້າສະຖາບັນຄົ້ນຄວ້າວິໄຈການພັດທະນາ

## ສາລະບານ


I. **ພາກສະເໜີ** ........ 1

1.1 ສະພາບການຈັດຕັ້ງການຜະລິດກະສິກຳໃນ ສປປ ລາວ........ 2

1.2 ສະພາບການຈັດຕັ້ງປະຕິບັດການທ່ອງທ່ຽວໃນ ສປປ ລາວ ........ 3

1.3 ຈຸດປະສົງຂອງການສຶກສາ........ 5

1.4 ວິທີການສຶກສາ ແລະ ການເກັບກຳຂໍ້ມູນ ........ 5

II. **ທົບທວນການຈັດຕັ້ງປະຕິບັດກະສິກຳອິນຊີໃນ ສປປ ລາວ** ........ 7

2.1 ການຜະລິດກະສິກຳອິນຊີ ໃນ ສປປ ລາວ........ 7

2.2 ການຜະລິດກະສິກຳອິນຊີໃນພາກພື້ນ ແລະ ສາກົນ........ 9

2.3 ນະໂຍບາຍ, ລະບຽບ ແລະ ຂໍ້ກຳນົດໃນການພັດທະນາຂະແໜງກະສິກຳອິນຊີ........ 12

2.4 ການມີສ່ວນຮ່ວມພາກລັດ ແລະ ເອກະຊົນ ຕໍ່ກັບການຜະລິດກະສິກຳອິນຊີ........ 14

III. **ທົບທວນການຈັດຕັ້ງປະຕິບັດການທ່ອງທ່ຽວອະນຸລັກນິເວດວິທະຍາ**........ 16

3.1 ແນວຄວາມຄິດ ແລະ ຄວາມໝາຍ ຂອງການທ່ອງທ່ຽວອະນຸລັກນິເວດວິທະຍາ........ 16

3.2 ການທ່ອງທ່ຽວອະນຸລັກນິເວດວິທະຍາ ໃນພາກພື້ນ ແລະ ສາກົນ ........ 16

3.3 ແນວທາງການສົ່ງເສີມການທ່ອງທ່ຽວອະນຸລັກນິເວດວິທະຍາ ........ 18

3.4 ນະໂຍບາຍ, ລະບຽບ ແລະ ຂໍ້ກຳນົດໃນການພັດທະນາຂະແໜງທ່ອງທ່ຽວ ໃນ ສປປ ລາວ........ 19

3.5 ສະພາບການພັດທະນາການທ່ອງທ່ຽວໃນ ສປປ ລາວ ໄລຍະຜ່ານມາ ........ 19

3.6 ສະພາບນັກທ່ອງທ່ຽວເຂົ້າມາທ່ອງທ່ຽວໃນ ສປປ ລາວ........ 20

IV. **ຜົນການວິເຄາະ** ........ 22

4.1 ກໍລະນີສຶກສາສະພາບການຜະລິດກະສິກຳອິນຊີ........ 22

4.1.1 ລັກສະນະດ້ານຜົນຜະລິດ ........ 22

4.1.2 ຕະຫລາດການຜະລິດກະສິກຳອິນຊີເພື່ອສົ່ງອອກພາຍໃນ ແລະ ຕ່າງປະເທດ........ 28

4.1.3 ການວິເຄາະການຜະລິດທຸລະກິດກະສິກຳອິນຊີ ແລະ ການປ່ຽນແປງດິນຟ້າອາກາດ........ 29

4.2 ສະຫຼູບຜົນການຄົ້ນຄວ້າການຜະລິດກະສິກຳອິນຊີ ........ 33

**4.3 ກໍລະນີສຶກສາສະພາບການທ່ອງທ່ຽວອະນຸລັກນິເວດວິທະຍາ ແບບປະຊາຊົນມີສ່ວນຮ່ວມ**36

4.3.1 ສະພາບການທ່ອງທ່ຽວແຂວງຈຳປາສັກ........ 36

4.3.2 ສະພາບການທ່ອງທ່ຽວແຂວງສາລະວັນ ........ 38

4.3.3 ສະພາບການທ່ອງທ່ຽວແຂວງຫຼວງນ້ຳທາ........ 40

4.4 ສະຫຼູບຜົນການຄົ້ນຄວ້າການທ່ອງທ່ຽວແບບນິເວດວິທະຍາແບບປະຊາຊົນມີສ່ວນຮ່ວມ ........ 44

V. **ສະຫຼູບ ແລະ ຂໍ້ສະເໜີແນະ** ........ 48

5.1 ບົດສະຫຼູບຕໍ່ກັບການຜະລິກະສິກຳແບບຍືນຍົງ (ກະສິກຳອິນຊີ) ........ 48

5.2 ຂໍ້ສະເໜີແນະຕໍ່ກັບການຜະລິກະສິກຳແບບຍືນຍົງ (ກະສິກຳອິນຊີ)........ 50

5.3 ບົດສະຫຼູບຕໍ່ກັບການທ່ອງທ່ຽວອະນຸລັກນິເວດວິທະຍາແບບປະຊາຊົນມີສ່ວນຮ່ວມ........ 51

5.4 ຂໍ້ສະເໜີແນະຕໍ່ກັບການທ່ອງທ່ຽວອະນຸລັກນິເວດວິທະຍາແບບປະຊາຊົນມີສ່ວນຮ່ວມ ........ 53

**ເອກະສານອ້າງອີງ** ........ 55

## ຕາຕະລາງ

ຕາຕະລາງ 1: ກຸ່ມຕົວຢ່າງສຳລັບການສຳພາດແບບກຸ່ມສົນທະນາ ແລະ ສຳພາດແບບບຸກຄົນທີ່ກ່ຽວຂ້ອງ ................ 6
ຕາຕະລາງ 2: ການສະເໜີຂໍການຢັ້ງຢືນກະສິກຳອິນຊີ ........ 8
ຕາຕະລາງ 3: ເນື້ອທີການຜະລິດກະສິກຳອິນຊີ ໃນພາກພື້ນ ແລະ ສາກົນ ........ 10
ຕາຕະລາງ 4: ເນື້ອທີ່ຜູ້ຜະລິດກະສິກຳອິນຊີ(ຜັກປອດສານພິດ)ໃນທົ່ວໂລກ ........ 11
ຕາຕະລາງ 5: ການຜະລິດສິນຄ້າກະສິກຳອິນຊີໃນທົ່ວໂລກ ........ 11
ຕາຕະລາງ 6: ໄລຍະເວລາພັກເຊົາສະເລ່ຍຂອງນັກທ່ອງທ່ຽວ ແລະ ລາຍຮັບຈາກການທ່ອງທ່ຽວ ........ 21
ຕາຕະລາງ 7: ສະພາບການປູກຊາອິນຊີ ໃນເຂດພາກໃຕ້ລາວ (ເມືອງປາກຊ່ອງ, ແຂວງຈຳປາສັກ). ........ 25
ຕາຕະລາງ 8: ເນື້ອທີ່ການປູກຊາທົ່ວປະເທດແຕ່ປີ 2012-2019 ........ 26
ຕາຕະລາງ 9: ຫຼັກການ ແລະ ການຈັດຕັ້ງປະຕິບັດການສົ່ງເສີມກະສິກຳສີຂຽວ ........ 49

## ຮູບສະແດງ

ຮູບສະແດງ 1: ແຜນທີ່ກໍລະນີສຶກສາ ........ 7
ຮູບສະແດງ 2: ຂະບວນການຈັດຕັ້ງກະສິກຳສະອາດຢູ່ ສປປ ລາວ. ........ 9
ຮູບສະແດງ 3: ແນວຄວາມຄິດລິເລີ່ມນະໂຍບາຍກະສິກຳສະອາດ ........ 13
ຮູບສະແດງ 4: ກົນໄກການຈັດຕັ້ງປະຕິບັດກະສິກຳອິນຊີສຳລັບພາກລັດ ........ 14
ຮູບສະແດງ 5: ມາດຕະຖານກະສິກຳ ແລະ ສິນຄ້າກະສິກຳທີ່ດີ ........ 15
ຮູບສະແດງ 6: ການພັດທະນາແຫຼ່ງທ່ອງທ່ຽວ (ຫົວໜ່ວຍ: ແຫ່ງ) ........ 20
ຮູບສະແດງ 7: ຈຳນວນນັກທ່ອງທ່ຽວ ແບ່ງເປັນແຕ່ລະລະຫາສ່ວນ (ຫົວໜ່ວຍ: ຄົນ) ........ 21
ຮູບສະແດງ 8: ການຈັດແບ່ງຂັ້ນຂອງຜູ້ຜະລິດກາເຟ ໃນສປປ ລາວ ........ 25
ຮູບສະແດງ 9: ມູນຄ່າຕ່ອງໂສ້ການປູກຊາອິນຊີຢູ່ເມືອງປາກຊ່ອງ, ແຂວງຈຳປາສັກ ........ 27
ຮູບສະແດງ 10: ການວິເຄາະກົນໄກທຸລະກິດກະສິກຳອິນຊີ ........ 30
ຮູບສະແດງ 11: ການປ່ຽນແປງອຸນຫະພູມຢູ່ແຂວງຫຼວງນ້ຳທາ, ສາລາວັນ, ຈຳປາສັກ (Anomaly) ........ 32
ຮູບສະແດງ 12: ປະລິມານນ້ຳຝົນຢູ່ແຂວງ ຫລວງນ້ຳທາ, ສາລາວັນ ແລະ ຈຳປາສັກ ........ 32

# I. ພາກສະເໜີ

## 1.1 ສະພາບການຈັດຕັ້ງການຜະລິດກະສິກໍາໃນ ສປປ ລາວ

ສປປ ລາວ ມີຊັບພະກອນດ້ານຊີວະນາໆພັນທີ່ອຸດົມສົມບູນທີ່ສຸດແຫ່ງໜຶ່ງຂອງໂລກ ແລະ ໄດ້ມີພືດລົ້ມລຸກຫຼາຍກວ່າ 100 ຊະນິດ ແລະ ພືດຢືນຕົ້ນຫຼາຍກວ່າ 80 ຊະນິດ. ພືດລົ້ມລຸກຫຼັກທີປູກແມ່ນ ເຂົ້າ, ພືດອາຫານສັດ (ສ່ວນໃຫຍ່ແມ່ນສາລີແຂງ), ສາລີຫວານ, ມັນຕົ້ນໝາກເຜັດ, ໝາກເດືອຍ, ຜັກກາດ, ຖົ່ວເຫຼືອງ, ໝາກງາ, ໝາກແຕ່ງ ແລະ ອື່ນໆ. ນອກຈາກນັ້ນ, ສປປ ລາວ ຍັງເປັນສູນກາງແຫຼ່ງກໍາເນີດຂອງເຂົ້າໜຽວ ແຫ່ງສໍາຄັນອັນດັບທີ່ 2 ຂອງໂລກ ທີ່ມີແນວພັນເຂົ້າພື້ນເມືອງ ຫຼາຍກ່ວາ 13000 ຊະນິດ. ການຄາດຄະເນປະຊາກອນ ສໍາລັບ ສປປ ລາວ ຄັ້ງຫຼ້າສຸດ ແມ່ນການສໍາຫຼວດປະຊາກອນ ແລະ ຄົວເຮືອນ ປີ 2005. ເຖິງແນວໃດກໍ່ຕາມ, ອີງໃສ່ປະຊາກອນ ປະມານ 5,622 ລ້ານຄົນ ໃນປີ 2005, ຄາດຄະເນວ່າ ປະຊາກອນ ຈະເພີ່ມຂຶ້ນ 29,2% ເຖິງ 7,261 ລ້ານຄົນ ໃນປີ 2020 (Lao Statistic Bureau, 2018). ນອກຈາກນັ້ນ, ການຂະຫຍາຍຕົວເສດຖະກິດ (GDP) ຂອງ ສປປ ລາວ ໃນປີ 2020 ເຫັນໄດ້ວ່າມີທ່າອ່ຽງຫຼຸດລົງຈາກ 5,5% ໃນປີ 2019 ມາເປັນ 3,3% ໃນປີ **2020** ເນື່ອງຈາກໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19. (NIER, 2020) ເຖິງຢ່າງໃດກໍ່ຕາມ, ເຫັນໄດ້ວ່າການປູກຝັງໄດ້ມີຂະບວນການຟືດຟື້ນພໍສົມຄວນ, ແຕ່ຍ້ອນໄດ້ຮັບຜົນກະທົບຈາກໄພພິບັດທາງທໍາມະຊາດ ແລະ ການແຜ່ລະບາດພະ ຍາດໂຄວິດ-19 ຈຶ່ງສົ່ງຜົນກະທົບເຮັດໃຫ້ຜົນຜະລິດບາງຊະນິດມີທ່າອ່ຽງຫຼຸດລົງເປັນຕົ້ນ: ການຜະລິດເຂົ້າສະເລ່ຍ 5 ປີ ປະຕິບັດໄດ້ 3,7 ລ້ານໂຕນຕໍ່ປີ (ແຜນການຄາດຄະເນ 4,35 ລ້ານໂຕນຕໍ່ປີ). ພ້ອມກັນນັ້ນ, ເຫັນໄດ້ວ່າການຜະລິດເຂົ້າຍັງສາມາດຮັບປະກັນການບໍລິໂພກພາຍໃນ, ມີສ່ວນແຮ່ໄວ້ ແລະ ສ່ວນເກີນເພື່ອຂາຍ. ສໍາລັບການລ້ຽງສັດຍັງເຫັນວ່າມີການຂະຫຍາຍຕົວດີ ໂດຍສະເພາະການລ້ຽງງົວ ແມ່ນເພີ່ມຂຶ້ນ ຈາກ 1,92 ລ້ານໂຕ ມາເປັນ 2,66 ລ້ານໂຕ ໃນປີ 2020 ແລະ ການລ້ຽງປາໄດ້ເພີ້ມຂຶ້ນ ຈາກ 106 ພັນໂຕ ໃນປີ 2016 ມາເປັນ 122 ພັນໂຕ ໃນປີ 2019 ແລະ ຄາດວ່າຈະເພີ້ມຂຶ້ນ 130 ພັນໂຕ ໃນປີ 2020.[1]

ການສົ່ງເສີມການຜະລິດເພື່ອເຮັດໃຫ້ການຜະລິດກະສິກໍາມີການຂະຫຍາຍຕົວດ້ອຍຈັງຫວະທີ່ໜັກແໜ້ນຢູ່ເຂດທົ່ງພຽງເຊິ່ງລຽບຕາມແມ່ນໍ້າຂອງ ເພື່ອຮັບປະກັນໃຫ້ສະບຽງອາຫານ ແລະຊຸກຍູ້ແຮງການຜະລິດສິນຄ້າດ້ານກະສິກໍາ, ການລ້ຽງສັດ, ການລ້ຽງປາ ເພື່ອສະໜອງໃຫ້ແກ່ການຊົມໃຊ້ພາຍໃນ ແລະເປັນຂາອອກ. ພັດທະນາ, ຟື້ນຟູ ແລະຂະຫຍາຍລະບົບຊົນລະປະທານ, ສ້າງຄວາມເຂັ້ມແຂງໃຫ້ຊຸມຊົນໃນການຄຸ້ມຄອງນໍາໃຊ້ລະບົບຊົນລະປະ ທານ, ປັບປຸງລະບົບການຜະລິດກະສິກໍາ, ເຮັດການຜະລິດແບບສຸ່ມ, ຍົກຜະລິດຕະພາບການປູກຝັງ, ການລ້ຽງສັດ ແລະ ການລ້ຽງປາ. ຊຸກຍູ້ການລົງທຶນທຸກພາກສ່ວນເສດຖະກິດ, ນໍາໃຊ້ເຕັກນິກຫຼັງການເກັບກ່ຽວ ແລະສົ່ງເສີມການປຸງແຕ່ງຜະລິດຕະພັນ ກະສິກໍາຂະໜາດນ້ອຍ ແລະກາງ ເພື່ອເພີ່ມມູນຄ່າ. ການນໍາໃຊ້ຊົນລະປະທານທີ່ໄດ້ສ້າງຂຶ້ນ ຢ່າງມີປະສິດທິຜົນສູງ, ສ້າງຄວາມເຂັ້ມແຂງໃຫ້ຊຸມຊົນໃນການຄຸ້ມຄອງນໍາໃຊ້ລະບົບຊົນລະປະທານ, ປັບປຸງລະບົບການຜະລິດກະສິກໍາ ທີ່ບໍ່ທໍາລາຍສະພາບເວດລ້ອມ ໂດຍການໍາໃຊ້ເຕັກນິກປ້ອງກັນພືດແບບປະສົມປະສານ ແລະ ການຜະລິດກະສິກໍາອິນຊີ, ເຮັດການຜະລິດແບບສຸ່ມ, ຄົ້ນຄວ້ານໍາໃຊ້ທົດລອງ, ທົດສອບສາທິດແບບບຸລິມະສິດ, ເລືອກເຟັ້ນເອົາເຕັກນິກທີ່ເໝາະສົມໃນເຂດຕ່າງໆ ເພື່ອຂະຫຍາຍອອກສູ່ທາງກວ້າງ, ສົ່ງເສີມການນໍາໃຊ້ແນວພັນພືດ, ກໍ່ສ້າງພະນັກງານລະດັບຕ່າງໆ ໂດຍສະເພາະພະນັກງານ ສົ່ງເສີມລະດັບເມືອງ, ນັກວິຊາການສະເພາະດ້ານຂອງແຂວງ ເພື່ອການສົ່ງເສີມຊາວກະສິກອນ ຕາມຄວາມຕ້ອງການຂອງເຂົາເຈົ້າ (Phimmavong, et al., 2009). ຊຸກຍູ້ການຜະລິດສິນຄ້າ ເພື່ອຄ້າຂາຍຕາມຊາຍແດນ ກັບປະເທດໃກ້ຄຽງ, ປັບປຸງອອກລະບຽບການ ໃນການດໍາເນີນທຸລະກິດ, ສົ່ງເສີມດ້ານການ

[1] ສັງລວມຈາກເອກະສານກອງປະຊຸມໃຫຍ່ຜູ່ແທນທົ່ວປະເທດ ຄັ້ງທີ XI ພັກປະຊາຊົນປະຕິວັດລາວ

ຕະຫລາດ ຕາມກົນໄກຕະຫລາດ ທີ່ມີຫຼັກການ ເພື່ອໃຫ້ສອດຄ່ອງກັບແຜນພັດທະນາກະສິກໍາຂອງລັດຖະບານ (MoAF, 2018).

ການຜະລິດກະສິກໍາຂອງລາວ (ໂດຍທົ່ວໄປ) ແລະ ການຜະລິດເຂົ້າ (ໂດຍສະເພາະ), ແມ່ນຂຶ້ນກັບ ສະພາບດິນຟ້າອາກາດ, ປີໃດອາກາດບໍ່ດີ ຜົນຜະລິດກໍ່ຕໍ່າ ປີໃດອາກາດດີກໍ່ໄດ້ຮັບຜົນດີ. ຈາກທີ່ການຜະລິດເຂົ້າໃນຫຼາຍເຂດຊົນນະບົດກວມຫຼາຍກວ່າ 80% ຂອງເນື້ອທີ່ການປູກຝັງທັງໝົດ ແລະການບໍລິໂພກເຂົ້າກວມຫຼາຍກວ່າ 80% ຂອງກະລໍລີທັງໝົດທີ່ໄດ້ຮັບການປ່ຽນແປງຂອງສະພາບອາກາດຈຶ່ງສົ່ງຜົນກະທົບຢ່າງໃຫຍ່ຫຼວງຕໍ່ຊີວິດການເປັນຢູ່ຂອງປະຊາຊົນ. ນອກຈາກນັ້ນ, ສະພາບ ແລະ ລະດັບຂອງ ຄວາມທຸກຍາກ ຢູ່ໃນຫຼາຍເຂດ ແມ່ນມີຄວາມເຊື່ອວ່າສ່ວນໃຫຍ່ແລ້ວແມ່ນຂຶ້ນກັບລະດັບ ແລະ ຄວາມຖີ່ຂອງການເກີດໄພທໍາມະຊາດ ໂດຍສະເພາະໄພແຫ້ງແລ້ງ ແລະ ນໍ້າຖ້ວມ. (ADB, 2001)

### 1.2 ສະພາບການຈັດຕັ້ງປະຕິບັດການທ່ອງທ່ຽວໃນ ສປປ ລາວ

ສປປ ລາວ ມີທີ່ຕັ້ງເປັນຈຸດໃຈກາງທາງຜ່ານຢູ່ໃນພາກພື້ນແມ່ນໍ້າຂອງ ກໍ່ຄືພາກພື້ນອາຊີ-ອາຄະເນ. ຜ່ານການພັດທະນາເສດຖະກິດ-ສັງຄົມ ໃນຫຼາຍປີຜ່ານມາເຮັດໃຫ້ເສດຖະກິດ ຂອງປະເທດມີການຂະຫຍາຍຕົວ ແລະ ມີການພົວພັນກັບບັນດາປະເທດໃນພາກພື້ນ ແລະ ສາກົນ ໃນທຸກດ້ານ. ຍ້ອນ ສປປ ລາວ ໄດ້ປຽບທາງດ້ານທີ່ຕັ້ງ ແລະ ມີສະຖຽນລະພາບທາງດ້ານການເມືອງທີ່ໝັ້ນຄົງ, ມີແຫຼ່ງທ່ອງທ່ຽວທໍາມະຊາດ, ວັດທະນະທໍາ ແລະ ປະຫວັດສາດ ທີ່ອຸດົມສົມບູນສວຍສົດງົດງາມ ແລະ ມີຊື່ສຽງ, ປະຊາຊົນລາວບັນດາເຜົ່າຂອງພວກເຮົາມີນໍ້າໃຈເອື້ອເຟື້ອເຜື່ອແຜ່ ເຊິ່ງເປັນປັດໃຈໜຶ່ງໃນການດຶງດູດນັກທ່ອງທ່ຽວເຂົ້າປະເທດນັບມື້ເພີ່ມຂຶ້ນລັດຖະບານຖືເອົາວຽກງານການທ່ອງທ່ຽວເປັນ 1 ໃນ 11 ແຜນງານບູລິມະສິດຂອງລັດຖະບານ, ໄດ້ກໍານົດ ແລະ ປະກາດການຈັດຕັ້ງປະຕິບັດການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວທາງດ້ານທໍາມະຊາດ, ວັດທະນະທໍາ ແລະ ປະຫວັດສາດທີ່ມີສີສັນ, ກາຍເປັນແຫຼ່ງທ່ອງທ່ຽວສີຂຽວ ທີ່ມີລັກສະນະຍືນຍົງ ໂດຍການມີສ່ວນຮ່ວມຂອງປະຊາຊົນ ເພື່ອຮອງຮັບໃຫ້ແກ່ການທ່ອງທ່ຽວ ແລະ ການບໍລິການອື່ນໆ ທີ່ມີການຂະຫຍາຍຕົວ. ການພັດທະນາການທ່ອງທ່ຽວໃນ ສປປ ລາວ ເຫັນໄດ້ວ່າລັດຖະບານໄດ້ມີຄວາມເອົາໃຈໃສ່ຫຼາຍໂດຍສະເພາະແມ່ນການຂະຫຍາຍການພັດທະນາພື້ນ ຖານໂຄງລ່າງຢ່າງຫຼວງຫຼາຍ ໂດຍການການສຸມໃສ່ເສັ້ນທາງຄົມມະນາຄົມໃຫ້ເຊື່ອມຈອດກັນໃນທົ່ວປະເທດ ແລະ ເຊື່ອມ ຈອດກັບບັນດາປະເທດເພື່ອນບ້ານ ເປັນຕົ້ນ: ພາກເໜືອ, ພາກກາງ ແລະ ພາກໃຕ້. ນອກຈາກນັ້ນ, ສປປ ລາວ ຍັງໄດ້ມີການຍົກສູງໃນການຂະຫຍາຍ ດ່ານເຂົ້າ-ອອກ ປະເທດ ໃຫ້ຫຼາຍຂຶ້ນເພື່ອເຊື່ອມໂຍ່ງກັບບັນດາປະເທດຕ່າງໆໃນທົ່ວໂລກ, ໄດ້ຍົກເວັ້ນວີຊາໃຫ້ແກ່ບັນດາປະເທດອາຊຽນຈໍານວນໜຶ່ງ ແລະ ການຂະຫຍາຍສະໜາມບິນສາກົນ 3 ແຫ່ງ ຢູ່ນະຄອນຫຼວງວຽງຈັນ, ແຂວງ ຫຼວງພະບາງ ແລະ ແຂວງ ຈໍາປາສັກ. ສະນັ້ນ, ການສົ່ງເສີມການທ່ອງທ່ຽວໃນ ສປປ ລາວ ໂດຍສະເພາະແຜນງານການອານຸລັກແບບມີສ່ວນຮ່ວມເພື່ອການພັດທະນາການທ່ອງທ່ຽວແບບຍືນຍົງເຫັນໄດ້ວ່າ ສປປ ລາວ ແມ່ນໄດ້ມີຄູ່ຮ່ວມໃນການພັດທະນາກັບຫຼາຍປະເທດ ເຊິ່ງໄດ້ຮັບການສະໜັບສະໜູນທາງດ້ານງົບປະມານ ແລະ ດ້ານວິຊາການ ຈາກປະເທດເພື່ອນມິດ, ສະຖາບັນການເງິນ ແລະ ອົງການຈັດຕັ້ງສາກົນ ເປັນຕົ້ນ: ທະນາຄານພັດທະນາອາຊີ(ADB), ທະນາຄານໂລກ (WB), EU, SNV, New Zealand AID, GTZ, DED, UNESCO, WTO ແລະ ອື່ນໆ.[2]

ຕໍ່ກັບການພັດທະນາການທ່ອງທ່ຽວໃນປັດຈຸບັນ ຂະແໜງການທ່ອງທ່ຽວແມ່ນຂະແໜງການທີ່ສະອາດ, ເປັນມິດຕໍ່ສັງຄົມ ແລະ ສິ່ງແວດລ້ອມ ໂດຍສະເພາະໄດ້ມີການພົວພັນກັບຫຼາຍຂະແໜງການເປັນຕົ້ນແມ່ນຂະແໜງຫັດຖະກໍາ, ຂົນສົ່ງ, ກະສິກໍາສະອາດ, ໂຮງແຮມ, ຮ້ານອາຫານ, ເຮືອນພັກ ແລະ ອື່ນໆ. ພ້ອມກັນນັ້ນ, ຂະແໜງການທ່ອງທ່ຽວຍັງ

---

[2] ຍຸດທະສາດການພັດທະນາທ່ອງທ່ຽວ 2016-2020, ການສຸມໃສ່ການຮ່ວມມືໃນກອບອາຊຽນເຊິ່ງມີໂຄງການຮ່ວມມືດ້ານເສດຖະກິດໃນກອບ 6 ປະເທດອະນຸພາກພື້ນແມ່ນໍ້າຂອງ (ຈີນ ແຂວງຢຸນນານ, ມຽນມາ, ໄທ, ລາວ, ກໍາປູເຈຍ ແລະ ຫວຽດນາມ).

ເປັນຂະແໜງການໜຶ່ງທີ່ມີຄວາມສາມາດສູງໃນການຊຸກຍູ້ການຂະຫຍາຍຕົວເສດຖະກິດ, ຫຼຸດຜ່ອນຄວາມທຸກຍາກ ແລະ ສ້າງວຽກເຮັດງານທຳທັງໃນຕົວເມືອງ ແລະຊົນນະບົດຕາມທິດສີຂຽວ-ຍືນຍົງ. ສຳລັບ ສປປ ລາວ ແມ່ນປະເທດໜຶ່ງທີ່ມີທິວທັດທາງທຳມະຊາດສວຍສົດງົດງາມ, ມີຮ່ອງຮອຍປະຫວັດສາດທີ່ເກົ່າແກ່, ມີຄວາມຫຼາກຫຼາຍທາງດ້ານສິນລະປະວັດທະນາທຳຮີດຄອງປະເພນີ ແລະ ວິຖີການກຳລົງຊີວິດຂອງປະຊາຊົນບັນດາເຜົ່າ. ເພາະສະນັ້ນ, ສປປ ລາວ ຈຶ່ງເປັນປະເທດທີ່ມີທ່າແຮງສູງໃນການພັດທະນາເປັນແຫຼ່ງທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ ແລະ ວັດທະນາທຳທີ່ມີທ່າອ່ຽງເພີ່ມຂຶ້ນຢູ່ພາຍໃນ ແລະ ຕ່າງປະເທດ. ເຖິງຢ່າງໃດກໍ່ຕາມ, ລັດຖະບານໄດ້ມີນະໂຍບາຍໃນການສຸມໃສ່ເພື່ອຄຸ້ມຄອງ ແລະພັດທະນາແຫຼ່ງທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ ແລະວັດທະນາທຳເປັນຕົ້ນແມ່ນການຄຸ້ມຄອງອານຸລັກເຂດສະຫງວນ, ການອານຸລັກສັດປ່າ ແລະ ຈຳກັດການຕັດໄມ້ທຳລາຍປ່າທີ່ຜິດກົດໝາຍ, ສົ່ງເສີມຮີດຄອງປະເພນີອັນດີງາມຂອງບັນດາເຜົ່າແຕ່ລະທ້ອງຖິ່ນ.[3]

ສຳລັບ ສປປ ລາວ ໃນປີ 2018 ທົ່ວປະເທດແມ່ນມີແຫຼ່ງທ່ອງທ່ຽວທັງໝົດປະມານ 2.237 ແຫ່ງ. ໃນນັ້ນ, ເປັນແຫຼ່ງທ່ອງທ່ຽວທາງວັດທະນາທຳ 575 ແຫ່ງ, ແຫຼ່ງທ່ອງທ່ຽວທາງທຳມະຊາດ 1.331 ແຫ່ງ ແລະ ແຫຼ່ງທ່ອງທ່ຽວທາງປະຫວັດສາດ 131 ແຫ່ງ ໄດ້ເປີດບໍລິການແລ້ວ 896 ແຫ່ງ, ພັດທະນາແລ້ວ 366 ແຫ່ງ; ມີບໍລິສັດທ່ອງທ່ຽວທັງໝົດ 422 ບໍລິສັດ, ມີໂຮງແຮມ 569 ແຫ່ງ, ມີຫ້ອງນອນປະມານ 21,836 ຫ້ອງ; ເຮືອນພັກ ແລະ ລີສອດ 2.165 ແຫ່ງ, ມີຫ້ອງນອນ 50,600 ຫ້ອງ; ມີຮ້ານອາຫານ ແລະ ພັດຕະຄານ 2.360 ແຫ່ງ ແລະ ສະຖານທີບັນເທີງປະມານ 249 ແຫ່ງ ແລະ ມີນັກທ່ອງທ່ຽວຕ່າງປະເທດ ເຂົ້າມາທ່ອງທ່ຽວປະເທດລາວທັງໝົດ 3,8 – 4 ລ້ານຄົນ ແລະ ສ້າງລາຍຮັບ 648 ລ້ານໂດລາສະຫະລັດ.[4] ເຖິງຢ່າງໃດກໍ່ຕາມ, ສະພາບການພັດທະນາການທ່ອງທ່ຽວຮອດທ້າຍປີ 2019 ແມ່ນໄດ້ຮັບຜົນກະທົບຈາກການແຜ່ລະບາດພະຍາດໂຄວິດ-19 ໄດ້ເຮັດໃຫ້ມີນັກທ່ອງທ່ຽວຕ່າງປະເທດເຂົ້າມາລາວໄດ້ມີການຫຼຸດລົງຫຼາຍ ແລະ ຮອດເດືອນກັນຍາ ປີ 2020 ຈຳນວນັກທ່ອງທ່ຽວຕ່າງປະເທດເຂົ້າມາລາວມີພຽງແຕ່ 886.447 ເທື່ອຄົນ ຫຼຸດລົງຈາກ 3.446.578 ເທື່ອຄົນ ທຽບໃສ່ໃນໄລຍະດຽວກັນຂອງປີຜ່ານມາ. ລາຍຮັບຈາກການທ່ອງທ່ຽວໃນປີ 2020 ຄາດວ່າຈະມີພຽງແຕ່ 173 ລ້ານໂດລາ ເຊິ່ງຫຼຸດລົງເຖິງ 5 ເທົ່າຕົວເມື່ອທຽບກັບປີ 2019 ຈຶ່ງເຮັດໃຫ້ບັນດາທຸລະກິດເຫຼົ່ານັ້ນຕ້ອງຢຸດສະຫງັກ ແລະ ຫຼາຍທຸລະກິດຕ້ອງໄດ້ປິດຕົວ. ນອກຈາກນັ້ນ, ຂະແໜງທີ່ພັກພາອາໃສ ແລະ ຮ້ານອາຫານ ຄາດວ່າຈະຫົດຕົວເຖິງ -55,2% ເມື່ອທຽບກັບປີ 2019. ຕໍ່ກັບສະພາບດັ່ງກ່າວ ເຮັດໃຫ້ GDP ຂອງຂະແໜງການທ່ອງທ່ຽວຄາດວ່າຈະຫົດຕົວໃນລະດັບ -1,6%.[5]

ດັ່ງນັ້ນ, ຂະແໜງການທ່ອງທ່ຽວຈຶ່ງເປັນຂະແໜງການໜຶ່ງທີ່ມີຄວາມສາມາດສູງໃນການຊຸກຍູ້ການຂະຫຍາຍຕົວທາງດ້ານເສດຖະກິດ, ຫຼຸດຜ່ອນຄວາມທຸກຍາກ ແລະສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນທັງໃນຕົວເມືອງ ແລະຊົນນະບົດ ຕາມທິດສີຂຽວ ແລະຍືນຍົງ. ສະນັ້ນ, ສປປ ລາວ ຈຶ່ງເປັນປະເທດທີ່ມີທ່າແຮງສູງໃນການພັດທະນາແຫຼ່ງທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ ແລະວັດທະນະທຳ ທີ່ມີຄວາມຮຽກຮ້ອງຕ້ອງການສູງ ແລະມີທ່າອ່ຽງທີ່ເພີ່ມຂຶ້ນຢູ່ພາຍໃນ ແລະ ຕ່າງປະເທດ, ລັດຖະບານ ຈຶ່ງໄດ້ມີນະໂຍບາຍໃນການສົ່ງເສີມ, ຄຸ້ມຄອງ ແລະ ພັດທະນາແຫຼ່ງທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ, ເປັນຕົ້ນແມ່ນ ການຄຸ້ມຄອງອານຸລັກເຂດສະຫງວນ, ການອະນຸລັກສັດປ່າ ແລະ ການຈຳກັດການຕັດໄມ້ທຳລາຍປ່າທີ່ຜິດກົດໝາຍ, ສົ່ງເສີມຮີດຄອງປະເພນີອັນດີງາມຂອງປະຊາຊົນລາວບັນດາເຜົ່າຢູ່ໃນແຕ່ລະທ້ອງຖິ່ນ.

---

[3] ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຮອດປີ 2030

[4] ສັງລວມຂໍ້ມູນການທ່ອງທ່ຽວປະຈຳປີ 2018, ກົມພັດທະນາການທ່ອງທ່ຽວ, ກະຊວງຖະແຫຼ່ງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ.

[5] ບົດລາຍງານເສດຖະກິດມະຫາພາກ ປະຈຳປີ 2020 ແລະ ທ່າອ່ຽງ2021, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ.

ແຕ່ເຖິງຢ່າງໃດກໍ່ຕາມ, ທ່າແຮງດ້ານການທ່ອງທ່ຽວ ຂອງ ສປປ ລາວ ແມ່ນຍັງບໍ່ທັນໄດ້ຮັບການຂຸດຄົ້ນ ແລະ ນໍາໃຊ້ຢ່າງມີປະສິດທິພາບສູງເທົ່າທີ່ຄວນ ໂດຍສະເພາະແມ່ນທ່າແຮງດ້ານການທ່ອງທ່ຽວທາງທໍາມະຊາດ. ສະນັ້ນ, ພວກເຮົາຈຶ່ງມີຄວາມສົນໃຈຢາກເຮັດການຄົ້ນຄວ້າເບິ່ງທ່າແຮງ, ສິ່ງທ້າທາຍ ແລະ ບັນດາປັດໄຈສໍາຄັນທີ່ເປັນສິ່ງກີດຂວາງຕ່າງໆ ທີ່ສົ່ງຜົນກະທົບຕໍ່ການສົ່ງເສີມການທ່ອງທ່ຽວແບບທໍາມະຊາດ ທີ່ເປັນຂະແໜງຍຸດທະສາດໜຶ່ງຂອງການເຕີບໂຕສີຂຽວ ຂອງ ສປປ ລາວ.

### 1.3 ຈຸດປະສົງຂອງການສຶກສາ

- ຕີລາຄາຄືນບັນດາສິ່ງກີດຂວາງ ແລະ ສິ່ງທ້າທາຍຕໍ່ກັບວຽກງານການຜະລິດກະສິກໍາອິນຊີ ແລະ ການທ່ອງທ່ຽວນິເວດວິທະຍາແບບມີສ່ວນຮ່ວມ.
- ປະເມີນ ແລະສົມທຽບ ຜົນກະທົບຈາກການຈັດຕັ້ງປະຕິບັດວຽກງານການຜະລິດກະສິກໍາອິນຊີ ແລະ ການທ່ອງທ່ຽວນິເວດວິທະຍາແບບມີສ່ວນຮ່ວມ ຕໍ່ກັບການສ້າງລາຍຮັບໃຫ້ແກ່ຊຸມຊົນ.
- ສະເໜີຮູບແບບ ຫຼື ແນວຄວາມຄິດການພັດທະນາສີຂຽວ ທີ່ສະເໜີມາຂ້າງເທິງນັ້ນ ຄວນເນັ້ນໜັກໃສ່ວຽກຈຸດສຸມອັນໃດ.

### 1.4 ວິທີການສຶກສາ ແລະ ການເກັບກໍາຂໍ້ມູນ

ເພື່ອຕອບຈຸດປະສົງທີ່ໄດ້ສະເໜີໃຫ້ເຫັນຂ້າງເທິງ, ບົດວິເຄາະສະບັບນີ້ຈະປະສົມປະສານວິທີການສຶກສາ 2 ວິທີ ຄື: ການຄົ້ນຄວ້າບັນດາເອກະສານ ແລະ ຂໍ້ມູນມືສອງ ຫຼື ເອີ້ນວ່າ Desk Research ແລະ ການລົງສໍາພາດ ພາກສະໜາມເພື່ອສໍາພາດກຸ່ມຜະລິດກາເຟອິນຊີ, ກຸ່ມຜະລິດຊາອິນຊີ, ກຸ່ມປູກພືດປອດສານພິດ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງຈາກພາກລັດ ແລະ ເອກະຊົນ ໃນການເກັບກໍາຂໍ້ມູນລົງເລິກຕໍ່ກັບບັນຫາໃນຂະແໜງກະສິກໍາ ແລະການຄ້າ. ນອກຈາກນັ້ນ, ຍັງໄດ້ສຶກສາກ່ຽວກັບການທ່ອງທ່ຽວທີ່ຕິດພັນນິເວດວິທະຍາແບບມີສ່ວນຮ່ວມກັບການປູກພືດກະສິກໍາ ເຊິ່ງຈະໄດ້ລົງເລິກສະເພາະໃນຂະແໜງການທ່ອງທ່ຽວນິເວດວິທະຍາແບບມີສ່ວນຮ່ວມ.

ຂໍ້ມູນກ່ຽວກັບການຜະລິດກະສິກໍາອິນຊີ ແລະ ການທ່ອງທ່ຽວນິເວດວິທະຍາແບບມີສ່ວນຮ່ວມ ແມ່ນຖືກທົບທວນຜ່ານບັນດາບົດຄົ້ນຄວ້າ, ບົດລາຍງານ, ບົດສະເໜີ, ບົດວິເຄາະ ແລະ ຍຸດທະສາດຕ່າງໆ ເພື່ອສັງລວມທັງບັນຫາ ແລະ ວິທີການສຶກສາສໍາລັບບົດວິເຄາະສະບັບນີ້. ການຊອກຄົ້ນ ບັນດາຂໍ້ມູນທຸຕິຍະພູມ ຫຼື ສະຖິຕິຕ່າງໆທີ່ຈະຖືກນໍາໃຊ້ເຂົ້າໃນການວິເຄາະໄດ້ມາຈາກຫຼາຍແຫຼ່ງທັງພາຍໃນ ແລະ ຕ່າງປະເທດເຊັ່ນ: ກະຊວງກະສິກໍາ ແລະ ປ່າໄມ້, ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ທະນາຄານ ແຫ່ງ ສປປ ລາວ, ສູນສະຖິຕິແຫ່ງຊາດ, ອົງການອາຫານ ແລະ ການກະເສດ (Food and Agriculture Organization: FAO), ອົງການກາເຟສາກົນ (International Coffee Organization: ICO), ກອງເລຂາອາຊຽນ (ASEAN Secretariat) ແລະ ທະນາຄານໂລກ (World Bank) ເປັນຕົ້ນ. ບັນດາຂໍ້ມູນດັ່ງກ່າວຈະຖືກນໍາມາວິເຄາະ ແລະ ປຽບທຽບໃຫ້ເຫັນເຖິງສະພາບຕະຫຼາດກະສິກໍາອິນຊີ ເປັນຕົ້ນ: 1. ການຜະລິດກາເຟ (ກາເຟໂລກ ແລະ ຕະຫຼາດກາເຟລາວ), 2. ການຜະລິດຊາ ແລະ 3. ການຜະລິດຜັກປອດສານພິດ ຕະຫຼອດຮອດການປ່ຽນແປງຂອງອຸນຫະພູມ ແລະ ປະລິມານນໍ້າຝົນ ເພື່ອໃຫ້ຮູ້ກ່ຽວກັບສະພາບການປ່ຽນແປງຂອງດິນຟ້າອາກາດທີ່ຕິດພັນກັບການປູກພືດກະສິກໍາ.

ການລົງສໍາຫຼວດພາກສະໜາມຖືກຈັດຕັ້ງປະຕິບັດໃນເດືອນມັງກອນ ຫາ ກຸມພາ ປີ2021 ເຊິ່ງປະກອບ 4 ແຂວງ ຄື:ໃນເດືອນມັງກອນ ປີ2021 ຢູ່ເມືອງ ເລົ່າງາມ, ແຂວງສາລາວັນ ແລະ ເມືອງປາກຊ່ອງ, ແຂວງຈໍາປາສັກ ແລະ ເມືອງ

ໄຊ ແຂວງ ອຸດົມໄຊ. ໃນເດືອນ ກຸມພາ ປີ2021 ຢູ່ເມືອງ ໄຊ, ແຂວງອຸດົມໄຊ ແລະ ເມືອງນໍ້າທາ, ແຂວງຫຼວງນໍ້າທາ ເຕັກນິກໃນການສໍາພາດຈະຖືກນໍາໃຊ້ 2 ແບບຄື: ການສໍາພາດແບບ Focus Group Discussion ຕໍ່ກັບປະຊາຊົນຜູ່ປູກພືດກະສິກໍາອິນຊີ ຜູ່ປະກອບການ ດ້ານການທ່ອງທ່ຽວນິເວດວິທະຍາແບບມີສ່ວນຮ່ວມ ເຊິ່ງຈະໄດ້ມີການສໍາພາດແບບສົນທະນາເປັນກຸ່ມ ແລະ ການສໍາພາດແບບ Key Informant Interview ຕໍ່ກັບຜູ້ປະກອບການການທ່ອງທ່ຽວພາກເອກະຊົນ, ຕົວແທນຈາກພະແນກກະສິກໍາ ແລະ ປ່າໄມ້, ພະແນກແຜນການ ແລະ ການລົງທຶນ, ພະແນກອຸດສາຫະກໍາ ແລະ ການຄ້າ, ພະແນກຖະແຫຼງຂ່າວ, ວັດທະນທໍາ ແລະ ທ່ອງທ່ຽວ ແລະ ສະພາການຄ້າ ແລະ ອຸດສາຫະກໍາແຂວງ (ການສໍາພາດບຸກຄົນສໍາຄັນທີ່ກ່ຽວຂ້ອງ). ຂໍ້ມູນທີ່ໄດ້ຈາກການສໍາພາດທັງ 2 ແບບຈະຖືກສັງລວມເພື່ອປະກອບເຂົ້າໃນການວິເຄາະລະດັບຂອງການຜະລິດກະສິກໍາອິນຊີ ແລະ ການທ່ອງທ່ຽວນິເວດວິທະຍາໃນ ສປປ ລາວ ກໍຄືການຈັດແບ່ງຂັ້ນຂອງກຸ່ມຜູ້ຜະລິດກະສິກໍາ. ກຸ່ມຕົວຢ່າງໃນການສຶກສາແມ່ນສະແດງໃຫ້ເຫັນໃນຕາຕະລາງ1

- ການສໍາພາດແບບ Focus Group Discussion ແມ່ນການສໍາພາດໂດຍຈັດປະຊາຊົນຜູ່ປູກກາເຟອິນຊີ, ຊາອິນຊີ ແລະ ພືດຜັກປອດສານພິດເປັນກຸ່ມແລ້ວສໍາພາດດ້ວຍຄໍາຖາມແບບດຽວກັນ, ເຊິ່ງເປັນການຈັດກຸ່ມສົນທະນາລະຫວ່າງປະຊາຊົນຜູ່ຜະລິດກະສິກໍາອິນຊີ ແລະ ມີຜູ່ສໍາພາດເປັນຜູ້ດໍາເນີນການສົນທະນາ. ກຸ່ມຕົວຢ່າງຖືກແບ່ງອອກເປັນ 2 ກຸ່ມ ຈາກ 8 ບ້ານ.

- ການສໍາພາດແບບ Key Informant Interview ແມ່ນການສໍາພາດບຸກຄົນສໍາຄັນທີ່ກ່ຽວຂ້ອງກັບບັນຫາ ທີ່ຕ້ອງການວິເຄາະ. ກຸ່ມຕົວຢ່າງສໍາລັບການສໍາພາດແບບນີ້ແມ່ນ ບັນດາຜູ່ປະກອບການການສົ່ງອອກສິນຄ້າກະສິກໍາອິນຊີ ໂດຍສະເພາະແມ່ນກຸ່ມຜູ່ຜະລິດ ແລະຕົວແທນຈາກພະແນກກະສິກໍາ ແລະປ່າໄມ້ແຂວງສາລາວັນ, ຈໍາປາສັກ, ອຸດົມໄຊ ແລະ ຫຼວງນໍ້າທາ ເຊິ່ງເປັນກຸ່ມຄົນທີ່ກ່ຽວຂ້ອງກັບ ວຽກງານສະເພາະໂດຍກົງ.

ຕາຕະລາງ 1: ກຸ່ມຕົວຢ່າງສໍາລັບການສໍາພາດແບບກຸ່ມສົນທະນາ ແລະ ສໍາພາດແບບບຸກຄົນທີ່ກ່ຽວຂ້ອງ

| **ກຸ່ມຕົວຢ່າງ** | **ຂ. ສາລາວັນ**<br>1. ບ້ານ ດົງ<br>2. ບ້ານ ຜັກກູດ | **ຂ. ຈໍາປາສັກ**<br>1. ບ້ານ ໜອງຫຼວງ<br>2. ບ້ານ ຫຼັກ36 | **ຂ. ອຸດົມໄຊ**<br>1. ບ້ານ ແຟນ<br>2. ບ້ານ ກັດ | **ຂ. ຫຼວງນໍ້າທາ**<br>1. ບ້ານ ນໍ້າແງ້ນ<br>2. ບ້ານ ນາລົມ |
|---|---|---|---|---|
| **ກຸ່ມສົນທະນາ ຫຼື FGD ກຸ້ມ** | 15 | 13 | 12 | 16 |
| **ສໍາພາດບຸກຄົນທີ່ກ່ຽວຂ້ອງ ຫຼື KII (ຄົນ)** | | | | |
| 1. ຜູ້ປະກອບການ | 1 | 1 | 1 | 1 |
| 2. ພະແນກແຜນການ ແລະ ການລົງທຶນ,<br>ຫ້ອງການ ແຜນການເມືອງ | 2 | 2 | 2 | 2 |
| 3. ພະແນກອຸດສາຫະກໍາ ແລະ ການຄ້າ,<br>ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ | 2 | 2 | 2 | 2 |
| 4. ພະແນກກະສິກໍາ ແລະ ປ່າໄມ້,<br>ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ | 2 | 2 | 2 | 2 |

| | | | | |
|---|---|---|---|---|
| 5. ພະແນກຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ, ຫ້ອງການຖະແຫຼງຂ່າວແຫຼ່ງຂ່າວເມືອງ | 2 | 2 | 2 | 2 |
| **ໄລຍະເວລາ** | **ເດືອນມັງກອນ 2021** | | **ເດືອນ ກຸມພາ 2021** | |

ແຫຼ່ງທີ່ມາ: ຜູ້ວິເຄາະ, 2021.

ຮູບສະແດງ 1: ແຜນທີ່ກຳລະນີສຶກສາ




ໝາຍເຫດ:

1. ແຂວງຫຼວງນ້ຳທາ
   - ບ້ານ ນ້ຳແງ້ນ
   - ບ້ານນາລັນ
2. ແຂວງ ອຸດົມໄຊ
   - ບ້ານ ແຟນ
   - ບ້ານ ກັດ
3. ແຂວງ ສາລາວັນ
   - ບ້ານ ດົງ
   - ບ້ານ ຜັກກູດ
4. - ແຂວງຈຳປາສັກ
   - ບ້ານ ໜອງຫຼວງ
   - ບ້ານ ຫຼັກ36

ແຫຼ່ງຂໍ້ມູນ:ສ້າງໂດຍທີມຄົ້ນຄວ້າ, 2021.

**II.** ທົບທວນການຈັດຕັ້ງປະຕິບັດກະສິກຳອິນຊີໃນ ສປປ ລາວ

### 2.1 ການຜະລິດກະສິກຳອິນຊີ ໃນ ສປປ ລາວ

ເພື່ອຜັນຂະຫຍາຍນະໂຍບາຍຂອງພັກ ວ່າດ້ວຍການຜະລິດກະສິກຳສະອາດ, ແຜນງານຜະລິດພືດສະບຽງ ແລະ ພືດເປັນສິນຄ້າ ຂອງຂະແໜງການກະສິກຳ ແລະ ປ່າໄມ້ ໂດຍສະເພາະແມ່ນການສ້າງບັນດານິຕິກຳ ແລະ ລະບຽບການຕ່າງໆ ເພື່ອເປັນບ່ອນອີງໃຫ້ແກ່ພາກສ່ວນຕ່າງໆ ນຳໃຊ້ເປັນບ່ອນອີງໃນການຈັດຕັ້ງ *(ກົມປູກຝັງ, 2011)*. ເຖິງແນວໃດກໍ່ຕາມ, ເພື່ອການສ້າງຕັ້ງກຸ່ມການຜະລິດກະສິກຳອິນຊີ ໂດຍສະເພາະການຂໍໃບຢັ້ງຢືນກະສິກຳອິນຊີຂອງ ສປປ ລາວ ເຊິ່ງໄດ້ສ້າງຂຶ້ນມາເພື່ອເປັນຄູ່ມືແນະນຳ ແລະ ເປັນສິ່ງອຳນວຍຄວາມສະດວກໃຫ້ແກ່ຜູ້ຜະລິດ-ຜູ້ປະກອບເອກະສານຜູ້ທີ່ມີຄວາມສົນໃຈທີ່ຈະຂໍການຢັ້ງຢືນກະສິກຳອິນຊີ ຕະຫລອດເຖິງ ການສ້າງຄວາມສະດວກໃຫ້ແກ່ນັກວິຊາການ ໃນການຮັບສະໝັກການຂໍການຢັ້ງຢືນຂອງ ຜູ້ຜະລິດ - ຜູ້ປະກອບການ ເຮັດໃຫ້ການຂໍການຢັ້ງຢືນ ເປັນໄປຕາມຂັ້ນຕອນ,

ມີຄວາມສະດວກ, ງ່າຍດາຍ, ບໍ່ສັບສົນ ແລະ ປະຢັດເວລາ ແລະ ທັງເປັນການສົ່ງເສີມ ໃຫ້ມີການຂໍການຢັ້ງຢືນ ຈາກຜູ້ຜະລິດ - ຜູ້ປະກອບການເພີ່ມຂຶ້ນ *(ກົມປູກຝັງ & ກະຊວງກະສິກຳ ແລະ ປ່າໄມ້, 2011).*

ສະນັ້ນ, ການພັດທະນາກະສິກຳສະອາດ ໂດຍສະເພາະແມ່ນກະສິກຳອິນຊີ(OA) ແລະ ກະສິກຳທີ່ດີ (GAP) ເຊິ່ງມີມາດຕະຖານຮັບຮອງ, ມີລະບົບການຢັ້ງຢືນ ແລະ ມີແນວທາງໃນລະບົບການຜະລິດຂອງການເຮັດລະບົບກະສິກຳທັງສອງແບບ *(ໂຄງການພັດທະນາກະສິກຳສະອາດ, 2019).* ໃນປັດຈຸບັນ ທາງໂຄງການພັດທະນາກະສິກຳສະອາດ ໄດ້ເນັ້ນໜັກໃຫ້ການສະໜັບສະໜູນເປັນຫຼັກ, ໂດຍສະເພາະແມ່ນພືດຜັກ ແລະ ໝາກໄມ້ ໂດຍມີວິໃສທັດໃນການສົ່ງເສີມການຜະລິດສະອາດຕາມຄວາມຕ້ອງການຕະຫຼາດ ເຊິ່ງມີຢູ່ 4 ແຂວງເປັນຕົ້ນ: ນະຄອນຫຼວງວຽງຈັນ, ແຂວງຊຽງຂວາງ, ຫຼວງພະບາງ ແລະ ໄຊຍະບູລີ, ໂຄງການດັ່ງກ່າວແມ່ນດຳເນີນການກ່ຽວກັບການໃຫ້ການຊ່ວຍເຫຼືອຂອງກຸ່ມຊາວສວນເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດໃນດ້ານຜົນຜະລິດກະສິກຳສະອາດ ແລະ ຂະຫຍາຍໂອກາດການຂາຍຜົນຜະລິດເຫຼົ່ານັ້ນ.

ນອກຈາກນັ້ນ, ກະຊວງກະສິກຳ ແລະ ປ່າໄມ້ ໂດຍສະເພາະ ກົມປູກຝັງ ໄດ້ສ້າງປຶ້ມຄູ່ມືທີ່ໄດ້ຮຽບຮຽງ ແລະ ພັດທະນາມາຈາກບົດຮຽນຕົວຈິງ ແລະ ເອກະສານອ້າງອີງ ຈາກແຫຼ່ງຕ່າງໆ *(Panyyakul, 2009).* ດັ່ງນັ້ນ, ເພື່ອອຳນວຍຄວາມສະດວກໃຫ້ແກ່ກຸ່ມຜູ້ຜະລິດ ແລະ ຜູ່ປະກອບການເພື່ອນຳໄປໝູນໃຊ້ໃນການຂໍໃບຢັ້ງຢືນກະສິກຳອິນຊີເຊິ່ງໄດ້ແບ່ງອອກເປັນ 4 ປະເພດການຜະລິດ ແລະ ປະກອບການດັ່ງນີ້:

ຕາຕະລາງ 2: ການສະເໜີຂໍໃບຢັ້ງຢືນກະສິກຳອິນຊີ

| ລ/ດ | ປະເພດການສະໝັກ | ຜູ່ສະໝັກ | ລາຍການຢັ້ງຢືນ |
|---|---|---|---|
| 1. | ການຂໍໃບຢັ້ງຢືນຈາກຟາມ | ຜູ້ຜະລິດ ຫຼືຜູ້ປະກອບການທີ່ເຮັດຟາມກະສິກຳອິນຊີ | - ຟາມແລະຜົນຜະລິດໃນຟາມ.<br>- ການບັນຈຸຜົນຜະລິດກະສິກຳອິນຊີ.<br>- ການປຸງແຕ່ງໃນຄອບຄົວ ຫຼື ການປຸງແຕ່ງຂະໜາດນ້ອຍທີ່ໃຊ້ຜົນຜະລິດກະສິກຳອິນຊີຈາກຟາມຕົນເອງ. |
| 2. | ການຂໍໃບຢັ້ງຢືນການປຸງແຕ່ງ | ຜູ່ຜະລິດ ຫຼືຜູ້ປະກອບການ:<br>- ປຸງແຕ່ງຜົນຜະລິດກະສິກຳອິນຊີຂອງຕົນ<br>- ປຸງແຕ່ງນຳຜົນຜະລິດກະສິກຳອິນຊີຂອງຜູ້ອື່ນ ຫຼື ເປັນສ່ວນປະສົມໃນການປຸງແຕ່ງ.<br>- ເກັບຊື້ຜົນຜະລິດສະກິກຳອິນຊີມາເຮັດການບັນຈຸໃໝ່ ແລະ ຈຳໜ່າຍ. | - ການປຸງແຕ່ງ<br>- ຜະລິດຕະພັນຈາກການປຸງແຕ່ງ<br>- ການບັນຈຸ |
| 3. | ການຂໍໃບຢັ້ງຢືນແບບເປັນກຸ່ມ | ກຸ່ມຜູ້ຜະລິດ ຫຼື ຜູ້ປະກອບການ: ເຮັດການຜະລິດກະສິກຳອິນຊີ ແລະ ມີການປຸງແຕ່ງຜົນຜະລິດເພື່ອຈຳໜ່າຍຮ່ວມກັນ. | - ການປຸງແຕ່ງ<br>- ຜະລິດຕະພັນຈາກການປຸງແຕ່ງ<br>- ການບັນຈຸ |

| | | | |
|---|---|---|---|
| 4. | ການຂໍໃບຢັ້ງຢືນຜົນຜະລິດຈາກປ່າ | ເປັນສະມາຊິກໃນບ້ານ ຫຼື ກຸ່ມຄຸ້ມຄອງ ແລະ ນໍາໃຊ້ທີ່ຈະເຮັດການເກັບກູ້ເຄື່ອງປ່າຂອງດົງ | - ຜົນຜະລິດຈາກປ່າ<br>- ການບັນຈຸ<br>- ການປຸງແຕ່ງໃນຄອບຄົວ ຫຼື ການປຸງແຕ່ງເປັນກຸ່ມ. |

ແຫຼ່ງຂໍ້ມູນ: ກົມປູກຝັງ, ກະຊວງກະສິກໍາ ແລະ ປ່າໄມ້, 2011.

ເພື່ອເຮັດໃຫ້ມີການຄຸ້ມຄອງມາດຕະຖານການຜະລິດກະສິກໍາອິນຊີໃນ ສປປ ລາວ ໃຫ້ແທດເໝາະກັບມາດຕະຖານຂອງສະຫະພັນກະສິກໍາອິນຊີສາກົນ (International Federation of Organic Agriculture Movement – IFOAM) ເປັນມາດຕະຖານໃນການຄຸ້ມຄອງການຜະລິດກະສິກໍາອິນຊີຢູ່ ສປປ ລາວ, ມາດຕະຖານກະສິກໍາອິນຊີກວມເອົາການປະຕິບັດຫຼັງການເກັບກ່ຽວ ແລະ ການປຸງແຕ່ງຜະລິດຕະພັນ, ການເກັບກ່ຽວຜົນຜະລິດຈາກທໍາມະຊາດເຊິ່ງເຮັດໃຫ້ການຄຸ້ມຄອງມະຫາພາກຂອງຂະແໜງການປູກຝັງສາມາດດໍາເນີນການກວດສອບ ແລະ ຮັບຮອງຜະລິດຕະພັນອິນຊີຈາກຜົນຜະລິດພືດໄດ້ຕາມລະບຽບການໃນທຸກຂັ້ນຕອນນັບແຕ່ຮັບຮອງຜົນຜະລິດຈາກຟາມຈົນຮອດການຜະລິດຂັ້ນມາປຸງແຕ່ງເປັນຜະລິດຕະພັນແປຮູບ (ກະຊວງກະສິກໍາ ແລະ ປ່າໄມ້, 2005). ເຖິງແນວໃດກໍ່ຕາມ, ເພື່ອໃຫ້ໄດ້ຕາມມາດຕະຖານສາກົນ IFOAM ການຜະລິດກະສິກໍາອິນຊີໃນ ສປປ ລາວ ແມ່ນໄດ້ກໍານົດຂອບເຂດການພັດທະນາກະສິກໍາອິນຊີ ໂດຍແບ່ງອອກເປັນ 4 ປະເພດ ເປັນຕົ້ນ: (1) ກະສິກໍາອິນຊີ, (2) ກະສິກໍາທີ່ດີ, (3) ກະສິກໍາປອດຢາປາບສັດຕູພືດ ແລະ (4) ກະສິກໍາແບບດັ້ງເດີມ. (ຮູບສະແດງ 2)

ຮູບສະແດງ 2: ຂະບວນການຈັດຕັ້ງກະສິກໍາສະອາດຢູ່ ສປປ ລາວ.




ແຫຼ່ງຂໍ້ມູນ: ກະຊວງກະສິກໍາ ແລະ ປ່າໄມ້

## 2.2 ການຜະລິດກະສິກໍາອິນຊີໃນພາກພື້ນ ແລະ ສາກົນ

ທ້າຍປີ 2015 ເປັນຕົ້ນມາ, ສະມາຄົມເສດຖະກິດອາຊຽນ (AEC) ແມ່ນຖືກຈັດຕັ້ງປະຕິບັດ. ໜຶ່ງໃນບັນດາຄາດໝາຍຂອງ (AEC) ຄືການສ້າງຕັ້ງເປັນຕະຫຼາດຮ່ວມສຳລັບສິນຄ້າ ແລະ ຜະລິດຕະພັນກະສິກຳ ເຊິ່ງໄດ້ມີການຮຽກຮ້ອງໃຫ້ສ້າງມາດຕະຖານກະສິກຳທີ່ດີ (GAP), ມາດຕະຖານລ້ຽງສັດທີ່ດີ (GAHP), ມາດຕະຖານສຸຂາອະນາໄມ (GHP), ມາດຕະຖານປຸງແຕ່ງທີ່ດີ (GMP), ແລະ ມາດຕະຖານຄວບຄຸມທີ່ອາດເກີດມີຄວາມສ່ຽງ (HACCP), ເປັນມາດຕະຖານສຳລັບຄວບຄຸມຜະລິດຕະພັນກະສິກຳທີ່ເປັນອາຫານ ທີ່ມີທ່າແຮງດ້ານການຄ້າ (FAO, 2012). ສະນັ້ນ, ໃນອານາຄົດ ການຢັ້ງຢືນກະສິກຳທີ່ດີຈະກາຍເປັນເຄື່ອງມືທີ່ຈຳເປັນສຳລັບຄ້າຂາຍຜົນຜະລິດກະສິກຳຢູ່ພາຍໃນອາຊຽນ. ເຖິງແນວໃດກໍ່ຕາມ, ບັນດາປະເທດອາຊຽນຕ້ອງໄດ້ສ້າງມາດຕະຖານກະສິກຳທີ່ດີແຫ່ງຊາດຂອງຕົນເອງຂຶ້ນມາ ເຊິ່ງລວມມີ ສປປ ລາວ ໂດຍສະເພາະບັນດາຂໍ້ກຳນົດທີ່ໄດ້ລະບຸໄວ້ໃນບາງໝວດຂອງມາດຕະຖານກະສິກຳທີ່ດີຂອງອາຊຽນຈະຕ້ອງໄດ້ຖືກຈັດຕັ້ງປະຕິບັດ ແລະ ມີການຍອມຮັບເຊິ່ງກັນ ແລະ ກັນ.

ໃນໄລຍະຜ່ານມາກະສິກຳອິນຊີໄດ້ມີບົດບາດສຳຄັນຕໍ່ເປົ້າໝາຍການພັດທະນາກະສິກຳທີ່ຍືນຍົງ ເຊິ່ງໃນທົ່ວໂລກໄດ້ມີອັດຕາການເພີ່ມຂຶ້ນສະເລ່ຍ 20% ນັບແຕ່ປີ 2002 ເປັນຕົ້ນມາ. ໃນປີ 2006 ການພັດທະນາກະສິກຳອິນຊີ ໄດ້ຂະຫຍາຍກວມເອົາ 110 ປະເທດ ເຊິ່ງມີພື້ນທີ່ການຜະລິດທັງໝົດ 319,6 ເຮັກຕາ, ແລະ ຈາກການສຶກສາຂອງສະຫະພັນກະສິກຳອິນຊີຂອງໂລກພົບວ່າຈະມີແນວໂນ້ມການຂະຫຍາຍຕົວ 10-15% ໃນຊຸມປີຕໍ່ໜ້າ (IFOAM, 2021).

ສະພາບການຂະຫຍາຍຕົວຂອງເນື້ອທີ່ການຜະລິດກະສິກຳອິນຊີໃນພາກພື້ນ ແລະ ສາກົນເຫັນໄດ້ວ່າ ເນື້ອທີ່ການຜະລິດອັນດັບໜຶ່ງ ແມ່ນ ອາເມລິກາ 2,3 ລ້ານເຮັກຕາ ແລະ ອັນດັບສອງແມ່ນ ສປ ຈີນ 2,2 ລ້ານເຮັກຕາ. ເຖິງແນວໃດກໍ່ຕາມ, ສຳລັບກຸ່ມປະເທດອາຊຽນ ອັນດັບໜຶ່ງແມ່ນ ອິນໂດເນເຊຍ 251 ແສນເຮັກຕາ, ອັນດັບ ສອງແມ່ນ ໄທ 188 ແສນເຮັກຕາ, ອັນດັບສາມແມ່ນ ສປປ ລາວ 8 ພັນເຮັກຕາ ແລະ ປະເທດທີ່ມີເນື້ອທີ່ໜ້ອຍທີ່ສຸດແມ່ນ ສິງກະໂປ 15 ເຮັກຕາ. (ລາຍລະອຽດຕາຕະລາງ2)

ຕາຕະລາງ 3: ເນື້ອທີການຜະລິດກະສິກຳອິນຊີ ໃນພາກພື້ນ ແລະ ສາກົນ




ແຫຼ່ງຂໍ້ມູນ: FiBL&IFOAM-Organic International (2021): The world of Organic Agriculture, ໜ້າ 128-129

ສຳລັບການຜະລິດກະສິກຳອິນຊີໃນທົ່ວໂລກເຫັນໄດ້ວ່າຜູ້ຜະລິດ ອັນດັບ1 ແມ່ນ ອິນເດຍ 1,3 ລ້ານເຮັກຕາ, ອັນດັບ2 ແມ່ນ ຢູການດາ 2,1 ແສນເຮັກຕາ ແລະ ອັນດັບ3 ແມ່ນ ອີທີໂອເປຍ 2 ແສນເຮັກຕາ. ເຖິງແນວໃດກໍ່ຕາມ, ການຜະລິດໃນຂົງເຂດອາຊຽນເຫັນໄດ້ວ່າຜູ້ຜະລິດທີ່ມີເນື້ອທີ່ການສົ່ງອອກຫຼາຍທີ່ສຸດ ອັນດັບ5 ແມ່ນ ໄທ 1 ແສນເຮັກຕາ.

ສຳລັບຢູໂຣບ ເນື້ອທີ່ຜູ້ຜະລິດອັບດັບ6 ແມ່ນ ເປຣູ 80 ພັນເຮັກຕາ, ອັນດັບ7 ແມ່ນ ຕຸລາກີ 74 ພັນເຮັກຕາ, ອັນດັບ8 ແມ່ນ ອິຕາລີ 70 ພັນເຮັກຕາ. ນອກຈາກນັ້ນ, ອັນດັບ9 ແລະ ອັນດັບ 10 ແມ່ນ ມາດາສກ້າ ແລະ ໂຕໂກ 69 ພັນເຮັກຕາ ແລະ 48 ພັນເຮັກຕາ. (ລາຍລະອຽດຕາຕະລາງ 4)

ຕາຕະລາງ 4: ເນື້ອທີ່ປະເທດຜະລິດກະສິກຳອິນຊີ(ຜັກປອດສານພິດ)ໃນທົ່ວໂລກ




ແຫຼ່ງຂໍ້ມູນ: FiBL&IFOAM-Organic International (2021): The world of Organic Agriculture, ໜ້າ 57.

ການຜະລິດກະສິກຳອິນຊີໃນທົ່ວໂລກເຫັນໄດ້ວ່າອັນດັບ1 ແມ່ນການປູກພືດຕະກຸນຖົ່ວ 5 ລ້ານເຮັກຕາ, ອັນດັບ2 ແມ່ນການປູກໝາກນໍ້າມັນ(ໝາກເຍົາ) 1,6 ລ້ານເຮັກຕາ, ອັນດັບ 3 ແມ່ນໝາກຖົ່ວແຫ້ງ 7,1 ແສນເຮັກຕາ, ອັນດັບ 4 ແມ່ນ ກາເຟ 7 ແສນເຮັກຕາ ແລະ ອັນດັບ5 ແມ່ນ ໝາກກ້ຽງ 6,6 ແສນເຮັກຕາ. ເຖິງແນວໃດກໍ່ຕາມ, ເຫັນໄດ້ວ່າການປູກຜັກປອດສານພິດໃນທົ່ວໂລກຍັງມີການຂະຫຍາຍຕົວດີ ຖ້າທຽບໃສ່ການປູກໝາກໄມ້ເຂດຮ້ອນ ແລະ ເຄິ່ງເຂດຮ້ອນມີເຖິງ 4,3 ແສນເຮັກຕາ. (ລາຍລະອຽດຕາຕະລາງ5)

ຕາຕະລາງ 5: ການຜະລິດສິນຄ້າກະສິກຳອິນຊີໃນທົ່ວໂລກ




ແຫຼ່ງຂໍ້ມູນ: FiBL&IFOAM-Organic International (2021): The world of Organic Agriculture, ໜ້າ 90

### 2.3 ນະໂຍບາຍ, ລະບຽບ ແລະ ຂໍ້ກຳນົດໃນການພັດທະນາຂະແໜງກະສິກຳອິນຊີ

ມາດຕະຖານກະສິກຳທີ່ຄູ່ການຄ້າຂອງ ສ ປປ ລາວ ອາດຈະແມ່ນອຸປະສັກໃນການກິດຂວາງການສົ່ງອອກຜະລິດຕະພັນກະສິກຳອິນຊີຂອງລາວໄດ້. ການເຂົ້າສູ່ຕະຫຼາດສາກົນ ແລະ ການເພີ່ມທະວີການສົ່ງອອກຮຽກຮ້ອງໃຫ້ສປປ ລາວ ຜະລິດສິນຄ້າທີ່ມີຄຸນະພາບ ແລະ ຮັບປະກັນທາງດ້ານຄວາມປອດໄພຕໍ່ຜູ່ບໍລິໂພກ. ສະນັ້ນ, ການປັບປຸງ ແລະ ປ່ຽນແປງລະບົບການກວດກາຄຸນນະພາບ ແລະ ມາດຕະຖານທີ່ນຳໃຊ້ປັດຈຸບັນຈຶ່ງມີຄວາມສຳຄັນ ແລະ ຈຳເປັນ ເພື່ອຕອບສະໜອງຄວາມຕ້ອງການຂອງການສົ່ງອອກ. ໃນປັດຈຸບັນຜະລິດຕະພັນກະສິກຳລາວແມ່ນຖືວ່າເປັນຜະລິດຕະພັນອິນຊີ ແຕ່ຍັງບໍ່ໄດ້ຮັບການຢັ້ງຢືນ ເຊິ່ງເຮັດໃຫ້ບໍ່ສາມາດຜະລິດເປັນສິນຄ້າເພື່ອການສົ່ງອອກໄດ້. ລະບົບການຮັບປະກັນຄຸນນະພາບ ແລະ ມາດຕະຖານທີ່ນຳໃຊ້ ພາຍໃນປະເທດແມ່ນຍັງບໍ່ສອດຄ່ອງ ເພື່ອສົ່ງອອກຜະລິດຕະພັນກະສິກຳອິນຊີລາວ. ເຖິງແນວໃດກໍ່ຕາມ, ສິດທິພິເສດທາງດ້ານການຄ້າຂອງ ສປປ ລາວ ໂດຍສະເພາະແມ່ນຂໍ້ຕົກລົງ (GSP) ກັບສະຫະພາບເອີຣົບ, ຂໍ້ຕົກລົງ NTR ກັບ ສະຫະລັດອາເມລິກາ, ເຂດການຄ້າເສລີອາຊຽນ ແລະ ການເຂົ້າເປັນສະມາຊິກ (WTO) ໄດ້ສ້າງໂອກາດອັນດີໃຫ້ແກ່ ສປປ ລາວ ໃນການເພີ່ມທະວີການສົ່ງອອກຜະລິດຕະພັນກະສິກຳ ໂດຍສະເພາະຜະລິດຕະພັນກະສິກຳອິນຊີ. ພ້ອມກັນນັ້ນ, ການເກັບຄ່າທຳນຽມຜ່ານແດນ ແລະ ຄ່າພາສີອາກອນລະຫວ່າງປະເທດຕ່າງໆແມ່ນໄດ້ຫຼຸດລົງ (Castella, et al., 2011).

ການຂະຫຍາຍຕົວໃນຂະແໜງກະສິກຳ ໂດຍສະເພາະແມ່ນຂະແໜງກະສິກຳອິນຊີທີ່ຜົນກະທົບຕໍ່ກັບຂະແໜງສິ່ງແວດລ້ອມ ເຊິ່ງສາມາດຕີລາຄາການຄ້າ ແລະ ສິ່ງແວດລ້ອມແບບຮີບດ່ວນ (Repid Trade and Environment Assesment – RTEA) ເປັນເຄື່ອງມືໃນການຕີລາຄາຜົນກະທົບຂອງກະສິກຳອິນຊີຕໍ່ສິ່ງແວດລ້ອມໂດຍການນຳໃຊ້ RTEA ແມ່ນສະແດງເຖິງຜົນກະທົບທີ່ເປັນໄປໄດ້ເຊິ່ງແບ່ງອອກເປັນ 5 ປະເພດດັ່ງລຸ່ມນີ້:

- ຜົນກະທົບທາງດ້ານເສດຖະກິດ: ການຄ້າແບບເສລີຈະເຮັດໃຫ້ການຂະຫຍາຍຕົວທາງດ້ານເສດຖະກິດເພີ່ມຂຶ້ນ.
- ຜົນກະທົບທາງດ້ານໂຄງຮ່າງ: ການຄ້າເສລີໃຫ້ເກີດມີການປ່ຽນແປງທາງດ້ານໂຄງຮ່າງເສດຖະກິດໃຫ້ເກີດມີການແລກປ່ຽນສິນຄ້າມີການເພີ່ມຂຶ້ນ ຫຼື ສິນຄ້າບາງປະເພດທີ່ມີການລົບລ້າງໄປ.
- ຜົນກະທົບທາງດ້ານເຕັກໂນໂລຊີ: ເຕັກໂນໂລຊີເກົ່າ ຫຼື ໃໝ່ຈະມີຜົນກະທົບດ້ານບວກ ຫຼື ລົບຕໍ່ກັບສິ່ງແວດລ້ອມ.
- ຜົນກະທົບໂດຍກົງ: ຈະສົ່ງຜົນໂດຍກົງຕໍ່ກັບສິ່ງແວດລ້ອມອາດເກີດຈາກຫຼາຍກິດຈະກຳຂອງການຄ້າເສລີ.
- ຜົນກະທົບທາງດ້ານລະບຽບການ ແລະກົດໝາຍ: ການຄ້າແບບເສລີຈະມີຜົນກະທົບຕໍ່ກັບລະບຽບການ ແລະກົດໝາຍພາຍໃນປະເທດຕໍ່ກັບສິ່ງແວດລ້ອມ.

ເພື່ອຄໍ້າປະກັນດ້ານສະບຽງອາຫານ ການຜະລິດເປັນສິນຄ້າ ດ້ວຍການພັດທະນາພື້ນຖານໂຄງລ່າງ, ຂະຫຍາຍເນື້ອທີ່ການຜະລິດສົ່ງເສີມການປູກພືດ ເປັນຢາ, ພືດທາດແປ້ງ, ພືດອຸດສາຫະກຳອື່ນໆ ພ້ອມທັງຫັນມານຳໃຊ້ເຕັກນິກເຂົ້າຊ່ວຍ, ເຮັດໃຫ້ຜົນຜະລິດ ເພີ່ມຂຶ້ນຢ່າງຕໍ່ເນື່ອງ, ເຊິ່ງສະແດງອອກ ໃນຄາດໝາຍຕົ້ນຕໍຄື: ການຜະລິດເຂົ້າ ບັນລຸ 1,9 ລ້ານກວ່າໂຕນ ທຽບໃສ່ 5ປີ ຜ່ານມາ ເພີ່ມຂຶ້ນ 13% ທຽບໃສ່ແຜນການປະຕິບັດໄດ້ 88% (ສາຍເຫດຍ້ອນໄພທຳມະຊາດນໍ້າຖ້ວມໜັກ, ຊົນລະປະທານເກົ່າແກ່ເປ່ເພ), ສາມາດຕອບສະໜອງໃຫ້ແກ່ສັງຄົມໄດ້ພຽງພໍ, ສົ່ງອອກຂາຍເປັນສິນຄ້າໄດ້ 8 ແສນກວ່າໂຕນ, ໃນນີ້ ເຂົ້າທີ່ໄດ້ມາດຕະຖານ (GAP) ສົ່ງອອກ ສປ ຈີນ 38 ພັນໂຕນ, ນອກຈາກການຜະລິດເຂົ້າແລ້ວ ຍັງໄດ້ສົ່ງເສີມການປູກພືດ ທີ່ມີທ່າແຮງໃຫ້ກາຍເປັນສິນຄ້າ ເຊັ່ນ: ກາເຟ ປະຕິບັດໄດ້ 131 ພັນກວ່າໂຕນ, ທຽບໃສ່ແຜນການປະຕິບັດໄດ້ 77%, ມັນດ້າງ 116 ພັນໂຕນ ທຽບໃສ່ແຜນການ ເພີ່ມຂຶ້ນ 2 ເທົ່າ, ກ້ວຍ 217 ພັນກ່ວາໂຕນ, ທຽບໃສ່ແຜນການປະຕິບັດໄດ້ 31%, ປະເພດສິນຄ້າທີ່ຜະລິດໄດ້ດີທັງມີຕະຫຼາດຮອງຮັບ ແມ່ນການຜະລິດມັນຕົ້ນ ແລະ ສາລີ ເຊິ່ງມັນຕົ້ນປະຕິບັດໄດ້ 2.853 ພັນໂຕນ, ທຽບໃສ່ 5 ປີຜ່ານມາ ເພີ່ມຂຶ້ນ 3 ເທົ່າ, ທຽບໃສ່ແຜນການ 5 ປີ ເກີນແຜນ 2 ເທົ່າຕົວ, ສາລີແຂງໄດ້ 79 ພັນໂຕນ, ທຽບໃສ່ແຜນ 5 ປີ ເກີນແຜນ 2 ເທົ່າຕົວ,

ພືດຜັກລວມອື່ນໆ ປະຕິບັດໄດ້ 372 ພັນກວ່າໂຕນ ທຽບໃສ່ 5 ປີຜ່ານມາ ເພີ່ມຂຶ້ນ 91% (ກະຊວງແຜນການ ແລະ ການລົງທຶນ, 2016). ເຖິງແນວໃດກໍ່ຕາມ, ການພັດທະນາຂະແໜງກະສິກຳ ແມ່ນແຜນຍຸດທະສາດເພື່ອການພັດທະນາຊົນນະບົດເປັນຕົ້ນ: 1. ຮັບປະກັນກຸ້ມຕົນເອງທາງດ້ານສະບຽງອາຫານ, 2. ເພີ່ມທະວີການສົ່ງອອກຜະລິດຕະພັນກະສິກຳ ແລະ ການແປຮູບຜະລິດຕະພັນໃຫ້ດີຂຶ້ນ(ພືດເສດຖະກິດ, ລ້ຽງສັດ ແລະ ເຄື່ອງປ່າຂອງດົງ) ແລະ 3. ຫຼຸດຜ່ອນການຖາງປ່າເຮັດໄຮ່ໂດຍຈັດສັນທີ່ດິນຄືນໃໝ່ ເຊິ່ງໄດ້ກຳນົດຢູ່ທີ່ກອງປະຊຸມສະມາຊິກສະພາແຫ່ງຊາດກ່ຽວກັບເປົ້າໝາຍການພັດທະນາວຽກງານກະສິກຳລວມ (CPI&UNDP, 2006).

ເພື່ອເປັນການພັດທະນາຂະແໜງກະສິກຳ ລັດຖະບານ ສປປ ລາວ ໄດ້ມີການອອກດຳລັດກ່ຽວກັບກຸ່ມ ແລະ ສະຫະກອນ ໂດຍສຸມໃສ່ຂະແໜງການຜະລິດກະສິກຳໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ເຊິ່ງໄດ້ມີການວາງນະໂຍບາຍສົ່ງເສີມໃຫ້ມີການສ້າງຕັ້ງກຸ່ມ ແລະ ສະຫະກອນ ທີ່ສາມາດຍື່ນຄຳຮ້ອງໂດຍຜ່ານກະຊວງກະສິກຳ ແລະ ປ່າໄມ້ ທີ່ເປັນເຈົ້າການ ແລະ ສົມທົບກັບຂະແໜງການທີ່ກ່ຽວຂ້ອງຄົ້ນຄວ້າ ແລະ ພິຈາລະນາໃຫ້ນະໂຍບາຍສົ່ງເສີມ (ລັດຖະບານ ສປປ ລາວ, 2020). ນອກຈາກນັ້ນ, ລັດຖະບານຍັງໄດ້ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ເປັນຜູ້ສ້າງແນວຄວາມຄິດລິເລີ່ມໃນການສ້າງນະໂຍບາຍກະສິກຳສະອາດ ໃຫ້ຜູ້ຜະລິດກະສິກຳປະຕິບັດໄປຕາມຫຼັກການເພື່ອໃຫ້ໄດ້ມາດຕະຖານຕາມຫຼັກສາກົນ(ລາຍລະອຽດຮູບສະແດງ3).

ຮູບສະແດງ 3: ແນວຄວາມຄິດລິເລີ່ມນະໂຍບາຍກະສິກຳສະອາດ




ແຫຼ່ງຂໍ້ມູນ: ກົມນະໂຍບາຍ ແລະ ນິຕິກຳ, ກະຊວງກະສິກຳ ແລະ ປ່າໄມ້

## 2.4 ການມີສ່ວນຮ່ວມພາກລັດ ແລະ ເອກະຊົນ ຕໍ່ກັບການຜະລິດກະສິກຳອິນຊີ

ການມີສ່ວນຮ່ວມຂອງພາກລັດ ແລະ ເອກະຊົນໃນການຈັດຕັ້ງປະຕິບັດການຜະລິດກະສິກຳອິນຊີ ໂດຍສະເພາະພາກລັດແມ່ນໄດ້ມີການສ້າງຕັ້ງກຸ່ມການຜະລິດກະສິກຳອິນຊີແບບຍືນຍົງ ພ້ອມທັງ ພັດທະນາຄູ່ຮ່ວມພັດທະນາເພື່ອຮັບປະກັນຄວາມຍືນຍົງໃຫ້ຊາວກະສິກອນໃນຂະແໜງກະສິກຳອິນຊີລາວ (ບຸນຍະສຸກ, 2017). ນອກຈາກນັ້ນ, ພາກລັດຍັງໄດ້ອຳນວຍຄວາມສະດວກໃນການຈັດກອງປະຊຸມລະຫວ່າງທຸລະກິດ ກັບ ທຸລະກິດ, ຜູ່ຊື້ ແລະ ຜູ່ຂາຍໂດຍຜ່ານການຈັດງານວາງສະແດງສິນຄ້າ.

**ການຈັດຕັ້ງປະຕິບັດຂອງພາກລັດ:** ເຫັນໄດ້ວ່າມີຄວາມພະຍາຍາມໃນການພັດທະນາກົນໄກການຈັດຕັ້ງປະຕິບັດການຜະລິກະສິກຳອິນຊີໃຫ້ມີການຂະຫຍາຍຕົວຢ່າງວ່ອງໄວ ແລະ ໄດ້ມີການຊອກຫາຫຼາຍຊ່ອງທາງເພື່ອພັດທະນາຂະແໜງກະສິກຳອິນຊີໃນ ສປປ ລາວ ໂດຍສະເພາະແມ່ນດ້ານການຕະຫຼາດ, ການຜະລິດເກັບກ່ຽວ, ການຝຶກອົບຮົມ, ການຈັດຕັ້ງກຸ່ມຜູ້ທີ່ມີຄວາມສົນໃຈ, ສູນຂໍ້ມູນຂ່າວສານ ແລະ ດ້ານລະບຽບການ (Anon., 2005). ເຖິງຢ່າງໃດກໍ່ຕາມ, ກົນໄກການພັດທະນາການຜະລິດກະສິກຳອິນຊີຍັງໄດ້ມີການພັດທະນາໃນຫຼາຍດ້ານ ເປັນຕົ້ນການຈັດຕັ້ງປະຕິບັດກົນໄກໃຫ້ຊາວກະສິກອນໄດ້ມີສ່ວນຮ່ວມກັບພາກລັດ ແລະ ພາກລັດໄດ້ສະໜອງໃຫ້ຊາວກະສິກອນໃນຫຼາຍຮູບແບບ.(ລາຍລະອຽດດັ່ງຮູບສະແດງ4).

ຮູບສະແດງ 4: ກົນໄກການຈັດຕັ້ງປະຕິບັດກະສິກຳອິນຊີສຳລັບພາກລັດ




ແຫຼ່ງຂໍ້ມູນ: ກະຊວງກະສິກຳ ແລະ ປ່າໄມ້, 2005.

**ການຈັດຕັ້ງປະຕິບັດພາກເອກະຊົນ:** ໃນການຂະຫຍາຍຕະຫຼາດໃນຂະແໜງກະສິກຳອິນຊີ ໂດຍສະເພາະແມ່ນພໍ່ຄ້າ ແລະ ຜູ້ບໍລິໂພກເຫັນໄດ້ວ່າໃນປັດຈຸບັນໄດ້ມີຄວາມສົນໃຈຫຼາຍ ແລະ ພາກລັດໄດ້ມີແນວຄວາມຄິດ ແລະ ສາມາດຈັດຕັ້ງປະຕິບັດຕໍ່ກັບການຄ້າກະສິກຳອິນຊີ ເພື່ອເປີດໂອກາດຂະຫຍາຍຊ່ອງທາງການຂາຍທີ່ດຳເນີນທຸລະກິດ ເຊັ່ນ: ໂຮງ ແຮມ, ຮ້ານອາຫານ, ຮ້ານຊັບພະສິນຄ້າ ແລະ ຊາວສວນກະສິກຳອິນຊີ OA ເພື່ອໃຫ້ມີການດຳເນີນທຸລະກິດຮ່ວມກັນ. ພ້ອມກັນນັ້ນ, ພາກເອກະຊົນ ຕ້ອງໄດ້ມີການຮ່ວມມືຢ່າງເຄັ່ງຄັດໃນການຜະລິດກະສິກຳສະອາດທີ່ສາມາດສະໜອງໃຫ້ຜູ້ບໍລິໂພກ ໃຫ້ໄດ້ຮັບສິນຄ້າກະສິກຳທີ່ດີ ແລະ ຕ້ອງໄດ້ມີການສະເໜີຂັ້ນຕອນການຜະລິດໃຫ້ໄດ້ມາດຕະຖານ ແລະ ມີການກວດກາຈາກພາກລັດເພື່ອໃຫ້ໄດ້ສິນຄ້າທີ່ມີຄຸນນະພາບ (ລາຍລະອຽດຮູບສະແດງ5). ເຖິງແນວໃດກໍ່ຕາມ, ສຳລັບພາກເອກະຊົນແມ່ນໄດ້ມີກົນໄກການຈັດຕັ້ງປະຕິບັດໂດຍການເຕົ້າໂຮມເປັນກຸ່ມ ແລະ ເປັນຕົວແທນຜູ້ຜະລິດຜັກປອດສານພິດຂອງບ້ານ ແລະ ສົ່ງເສີມຄວາມສົນໃຈຂອງຊາວກະສິກອນ. ນອກຈາກນັ້ນ, ຍັງໄດ້ມີການລວບລວມເອົາຜົນຜະລິດຂອງສະມາຊິກພາຍໃນກຸ່ມສະໜອງຕາມຄວາມຕ້ອງການຂອງຜູ້ຊື້ ແລະ ໃຫ້ຄຳປຶກສາໃຫ້ແກ່ການບໍລິການແກ່ສະມາຊິກພາຍໃນບ້ານເປັນຕົ້ນ: ໃຫ້ຄຳປຶກສາດ້ານເຕັກນິກວິຊາການ, ຈັດຊື້ປັດໄຈການຜະລິດ ແລະ ການເຂົ້າເຖິງຕະຫຼາດ.

ຮູບສະແດງ 5: ມາດຕະຖານກະສິກຳ ແລະ ສິນຄ້າກະສິກຳທີ່ດີ




ແຫຼ່ງຂໍ້ມູນ: ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້, 2017

## III. ທົບທວນການຈັດຕັ້ງປະຕິບັດການທ່ອງທ່ຽວອະນຸລັກນິເວດວິທະຍາ

### 3.1 ແນວຄວາມຄິດ ແລະ ຄວາມໝາຍ ຂອງການທ່ອງທ່ຽວອະນຸລັກນິເວດວິທະຍາ

ການທ່ອງທ່ຽວແບບອານຸລັກ ແມ່ນແນວຄວາມຄິດທີ່ຫາກໍ່ອອກມາເມື່ອບໍ່ດົນມານີ້ ນອກນັ້ນຍັງໃຊ້ຄຳສັບພາສາອັງກິດອື່ນໆ ທີ່ມີຄວາມໝາຍຄ້າຍຄືກັນ ເຊັ່ນ: Nature Tourism, Biotourism, Green Tourism ເປັນຕົ້ນ. ເຖິງຢ່າງໃດກໍ່ຕາມ, ການທ່ອງທ່ຽວທັງໝົດເຫຼົ່ານັ້ນລ້ວນແລ້ວແຕ່ເປັນສິ່ງທີ່ໄດ້ບົ່ງບອກເຖິງການທ່ອງທ່ຽວແບບຍືນຍົງ (Sustainable Tourism) ເຊິ່ງຈາກກອງປະຊຸມ Globe 1990 ໃນ ປະເທດການາດາ ໄດ້ນິຍາມການທ່ອງທ່ຽວແບບຍືນຍົງໄວ້ວ່າ "ແມ່ນການພັດທະນາທີ່ສາມາດຕອບສະໜອງຄວາມຕ້ອງການຂອງນັກທ່ອງທ່ຽວ ແລະ ປະຊາຊົນທ້ອງຖິ່ນໃນປະຈຸບັນ ໂດຍມີການປົກປ້ອງ ແລະ ສະຫງວນຮັກສາໂອກາດຕ່າງໆໄວ້ເພື່ອຄົນຮຸ່ນຫຼັງນຳ. ການທ່ອງທ່ຽວນີ້ແມ່ນໄດ້ມີຄວາມໝາຍທີ່ກວມລວມໄປຈົນເຖິງການຄຸ້ມຄອງຊັບພະຍາກອນ ເພື່ອຕອບສະໜອງຄວາມຕ້ອງການດ້ານເສດຖະກິດ-ສັງຄົມ ພ້ອມທັງຍັງຄົງຮັກສາໄວ້ເຖິງເອກະລັກທາງວັດທະນະທຳ ແລະ ລະບົບນິເວດນຳອີກ" ໂດຍມີລັກສະນະສຳຄັນຄື: ເປັນການທ່ອງທ່ຽວ ທີ່ດຳເນີນງານພາຍໃຕ້ຂໍ້ຈຳກັດຂອງທຳມະຊາດ ແລະ ຕ້ອງຄຳນຶງເຖິງການມີສ່ວນຮ່ວມຂອງປະຊາຊົນ, ຊຸມຊົນ ແລະ ຮີດຄອງປະເພນີ ທີ່ມີຕໍ່ຂະບວນການທ່ອງທ່ຽວ ພ້ອມນັ້ນຍັງຕ້ອງໃຫ້ປະຊາຊົນທຸກພາກສ່ວນໄດ້ຮັບຜົນປະໂຫຍດດ້ານເສດຖະກິດທີ່ເກີດຂຶ້ນຈາກການທ່ອງທ່ຽວໃຫ້ເທົ່າທຽມກັນ ແລະ ຕ້ອງດຳເນີນການພາຍໃຕ້ຄວາມຮຽກຮ້ອງຕ້ອງການຂອງປະຊາຊົນ ແລະ ຊຸມຊົນທ້ອງຖິ່ນໃນເຂດທ່ອງທ່ຽວນັ້ນໆ (ສະຖາບັນຄົ້ນຄວ້າວິທະຍາສາດແລະສິ່ງແວດລ້ອມຂອງປະເທດໄທ, 1996).

ສຳລັບຄວາມໝາຍຂອງການທ່ອງທ່ຽວອານຸລັກນິເວດວິທະຍານັ້ນ ໄດ້ມີຫຼາຍທ່ານ ຫຼື ອົງກອນຕ່າງໆໃຫ້ຄວາມໝາຍ ແລະ ນິຍາມໄວ້ຢ່າງຫຼວງຫຼາຍ ແຕ່ສ່ວນທີ່ຖືກຍອມຮັບໃນລະດັບໃດໜຶ່ງ ແລະ ນຳມາໃຊ້ອ້າງອີງຫຼາຍນັ້ນ ແມ່ນມີດັ່ງນີ້: ທ່ານ Ceballos Lascurin (1991) ຊຶ່ງອາດເປັນຄົນທຳອິດທີ່ໄດ້ໃຫ້ຄຳນິຍາມກ່ຽວກັບການທ່ອງທ່ຽວອະນຸລັກນິເວດວິທະຍາວ່າ "ເປັນການທ່ອງທ່ຽວຮູບແບບໜຶ່ງ ທີ່ກ່ຽວຂ້ອງກັບການເດີນທາງໄປສະຖານທີ່ທຳມະຊາດ ໂດຍບໍ່ກໍ່ໃຫ້ເກີດການລົບກວນ ຫຼື ສ້າງຄວາມເສຍຫາຍຕໍ່ທຳມະຊາດ ໂດຍມີຈຸດປະສົງເພື່ອ ຊື່ນຊົມ, ສຶກສາຮຽນຮູ້ ແລະ ເພີດເພີນໃຈໄປກັບທັດສະນີຍະພາບຂອງພືດພັນ ແລະ ສັດປ່າ ຕະຫຼອດໄປເຖິງລັກສະນະທາງວັດທະນະທຳ ທີ່ປະກົດຂຶ້ນໃນສະຖານທີ່ທາງທຳມະຊາດເຫຼົ່ານັ້ນ". ຕໍ່ມາໃນປີດຽວກັນ The Ecotourism Society (1991) ໄດ້ໃຫ້ຄຳນິຍາມການທ່ອງທ່ຽວອານຸລັກນິເວດວິທະຍາວ່າ "ເປັນການເດີນທາງໄປທ່ຽວຊົມສະຖານທີ່ທາງທຳມະຊາດ ໂດຍມີຈຸດປະສົງເພື່ອຮຽນຮູ້ກ່ຽວກັບວັດທະນະທຳ ແລະ ປະຫວັດສາດດ້ວຍຄວາມລະມັດລະວັງບໍ່ໃຫ້ເກີດການປ່ຽນແປງ ຫຼືທຳລາຍຄຸນຄ່າຂອງລະບົບນິເວດ ແລະ ໃນເວລາດຽວກັນ ກໍ່ຊ່ວຍສ້າງໂອກາດທາງເສດຖະກິດທີ່ສົ່ງຜົນເຮັດໃຫ້ການອານຸລັກຊັບພະຍາກອນທຳມະຊາດເກີດຜົນປະໂຫຍດແກ່ປະຊາຊົນທ້ອງຖິ່ນ" ແລະ ໃນເວລາຕໍ່ມາ ສະພາທີ່ປຶກສາດ້ານສິ່ງແວດລ້ອມຂອງປະເທດການາດາ (As city the wight 1993) ໄດ້ປັບປຸງໃຫ້ຄຳນິຍາມຂອງການທ່ອງທ່ຽວອະນຸລັກນິເວດວິທະຍາຄືນ ເພື່ອໃຫ້ມີຄຳຈຳກັດຄວາມທີ່ສັ້ນລົງ ແລະ ກະທັດຮັດຂຶ້ນກວ່າເກົ່າ ແຕ່ຍັງຄົງຮັກສາຄວາມໝາຍໄວ້ຢ່າງອຸດົມສົມບູນຍິ່ງຂຶ້ນຄື: "ການທ່ອງທ່ຽວອະນຸລັກນິເວດວິທະຍາເປັນການເດີນທາງທ່ອງທ່ຽວທີ່ມີຄວາມຮັບຜິດຊອບຕໍ່ແຫຼ່ງທ່ອງທ່ຽວທຳມະຊາດ ໄປພ້ອມກັບການອະນຸລັກຮັກສາສິ່ງແວດລ້ອມ ແລະ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນໃນທ້ອງຖິ່ນດີຂຶ້ນກວ່າເກົ່າ" (Wight, 1993).

### 3.2 ການທ່ອງທ່ຽວອະນຸລັກນິເວດວິທະຍາ ໃນພາກພື້ນ ແລະ ສາກົນ

ການອະນຸລັກ ແລະ ການທ່ອງທ່ຽວ ປະກອບສ່ວນໃຫ້ແກ່ການເຕີບໂຕເສດຖະກິດສີຂຽວຢູ່ຫຼາຍປະເທດ. ຍ້ອນມີການອະນຸລັກສິ່ງແວດລ້ອມ ຈຶ່ງອາດບໍ່ມີການພັດທະນາທາງດ້ານເສດຖະກິດຢູ່ເຂດປ່າສະຫງວນຢູ່ສະເໝີ, ແຕ່

ຫຼາຍປະເທດໄດ້ຮັບຜົນປະໂຫຍດດ້ານເສດຖະກິດຢ່າງເປັນຮູບປະທຳ ຈາກທ່າແຮງອັນໂດດເດັ່ນດ້ານທ່ອງທ່ຽວ ແລະ ການທ່ຽວຊົມປ່າສະຫງວນ ແຕ່ຄວາມເປັນຈິງ ການທ່ອງທ່ຽວແມ່ນຈຳເປັນຕໍ່ການຄຸ້ມຄອງປ່າສະຫງວນ. ອີງໃສ່ຄຳແນະນຳຈາກຜູ້ຊ່ຽວຊານດ້ານການຄຸ້ມຄອງເຂດປ່າສະຫງວນ, ນະໂຍບາຍ ແລະ ຄວາມອາດສາມາດທາງດ້ານວິຊາການທີ່ຖືກຕ້ອງ ແລະ ສອດຄ່ອງ ພວກເຮົາສາມາດຈັດຕັ້ງປະຕິບັດ ແລະ ບັນລຸຕາມຈຸດປະສົງຂອງການປົກປັກຮັກສາລະບົບນິເວດປ່າໄມ້ ແລະ ພັດທະນາການທ່ອງທ່ຽວໄປພ້ອມກັນໄດ້. ສຳລັບ ສປປ ລາວ ໄດ້ຮັບຮູ້ເຖິງທ່າແຮງຂອງປ່າສະຫງວນຕໍ່ກັບ ເສດຖະກິດ ແລະ ອີງໃສ່ຊັບພະຍາກອນທາງທຳມະຊາດ ທີ່ມີເອກະລັກສະເພາະ, ດັ່ງນັ້ນ ສປປ ລາວ ຈຶ່ງໄດ້ວາງແຜນການພັດທະນາວຽກງານດັ່ງກ່າວ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແລະ ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຮອດປີ 2030.

ປ່າສະຫງວນສາມາດສ້າງຜົນປະໂຫຍດຫຼາກຫຼາຍຕໍ່ກັບເສດຖະກິດ ທັງທາງກົງ ແລະ ທາງອ້ອມ. ປ່າສະຫງວນທົ່ວໂລກ ໄດ້ເພີ່ມລາຍຮັບໃຫ້ພາກລັດ, ສົ່ງເສີມການພັດທະນາພື້ນຖານໂຄງລ່າງເຂດຊົນນະບົດ, ກະຕຸ້ນການທ່ອງທ່ຽວ, ຊຸກຍູ້ທ້ອງຖິ່ນດ້ານການຜະລິດເປັນສິນຄ້າ ແລະ ການບໍລິການ, ສ້າງລາຍຮັບຈາກພາສີ-ອາກອນ, ຫຼຸດຜ່ອນຄວາມສ່ຽງຕໍ່ໄພພິບັດທາງທຳມະຊາດ, ສະໜອງ ແລະ ປັບປຸງຄຸນນະພາບນ້ຳ ແລະ ອື່ນໆທີ່ມີຄວາມສຳຄັນຕໍ່ການດຳລົງຊີວິດ. ແຕ່ສ່ວນຫຼາຍປ່າສະຫງວນແມ່ນຕັ້ງຢູ່ເຂດຫ່າງໄກສອກຫຼີກ ກວມເອົາເຂດຊຸມຊົນທີ່ມີອັດຕາສ່ວນຄວາມທຸກຍາກສູງ ແລະ ມີຜົນຜະລິດກະສິກຳຕ່ຳ ແລະ ເປັນບ່ອນທີ່ມີຂໍ້ຈຳກັດດ້ານທາງເລືອກ, ດັ່ງນັ້ນ ການສ້າງການທ່ອງທ່ຽວໃນເຂດປ່າສະຫວງນຈະສາມາດສ້າງໃຫ້ຊຸມຊົນເຫຼົ່ານີ້ຂັບເຄື່ອນການເຕີບໂຕດ້ານເສດຖະກິດ, ຫຼຸດຜ່ອນຄວາມທຸກຍາກ, ຫຼຸດຜ່ອນຄວາມສ່ຽງຕໍ່ການເຕີບໂຕແບບບໍ່ຍືນຍົງ ແລະ ກ້າວໄປສູ່ການປັບປຸງຄຸນນະພາບຂອງຊີວິດໃຫ້ດີຂຶ້ນໄດ້. ຊຶ່ງໃນໄລຍະຜ່ານມາກໍ່ໄດ້ມີຫຼາຍຜົນການສຶກສາໄດ້ຊີ້ແຈ້ງໃຫ້ເຫັນກ່ຽວກັບຜົນປະໂຫຍດຈາກການທ່ອງທ່ຽວອະນຸລັກນິເວດວິທະຍາ ໃນເຂດປ່າສະຫງວນ ເຊິ່ງມີຄືດັ່ງນີ້: (World Bank, 2021).

- ການທ່ອງທ່ຽວ ມີສ່ວນເຮັດໃຫ້ອັດຕາສ່ວນຄວາມທຸກຍາກຂອງບ້ານທີ່ຕັ້ງຢູ່ໃນ ຫຼື ໃກ້ກັບເຂດປ່າສະຫງວນຫຼຸດລົງ ຢູ່ ປະເທດໂກສະຕາຣິກາ (-10%) ແລະ ຢູ່ປະເທດໄທ (-30%)[6]. ນອກຈາກນີ້, ລະບົບຄຸ້ມຄອງເຂດປ່າສະຫງວນ ຢູ່ສອງປະເທດດັ່ງກ່າວ ໄດ້ຫຼຸດຜ່ອນການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມທີ່ເປັນໄພຂົ່ມຂູ່ຕໍ່ພັນໄມ້ນາໆຊະນິດ, ເຊັ່ນດຽວກັນ ຢູ່ ສປ ຈີນ ການທ່ອງທ່ຽວທຳມະຊາດຢູ່ໃນເຂດປ່າສະຫງວນເຮັດໃຫ້ປະຊາຊົນ ຈຳນວນ 4.654 ບ້ານ ຫຼຸດພົ້ນອອກຈາກຄວາມທຸກຍາກ ພາຍໃນໄລຍະ 20 ປີ[7].
- ໃນປີ 2015 ນັກຄົ້ນຄວ້າໄດ້ຄາດຄະເນວ່າມີນັກທ່ອງທ່ຽວທັງໝົດຈຳນວນ 8 ຕື້ຄົນ ທ່ຽວຊົມເຂດປ່າສະຫງວນໃນທົ່ວໂລກ ແລະ ສ້າງການໃຊ້ຈ່າຍໃນການທ່ອງທ່ຽວຈຳນວນ 600 ຕື້ໂດລາສະຫະລັດ ແລະ ມີລາຍຈ່າຍສຳລັບການປົກປັກຮັກສາເຂດປ່າສະຫງວນດັ່ງກ່າວມີ 10 ຕື້ໂດລາສະຫະລັດ[8]. ຄວາມຕ້ອງການດ້ານການທ່ອງທ່ຽວທຳມະຊາດໃນທົ່ວໂລກມີທ່າອ່ຽງສູງຂຶ້ນ ເຊັ່ນ: ສປ ຈີນ ນັບແຕ່ປີ 2000 ຫາ 2009 (ເຖິງມີການລະບາດຂອງພະຍາດ SARS) ມີນັກທ່ອງທ່ຽວເຂົ້າມາທ່ຽວຊົມປ່າສະຫງວນ ຢູ່ ສປ ຈີນ ເພີ່ມຂຶ້ນ 20% ແລະ ລາຍຮັບ ເພີ່ມຂຶ້ນ 43%. ໃນປີ 2009 ມີນັກທ່ອງທ່ຽວ (ສ່ວນຫຼາຍແມ່ນນັກທ່ອງທ່ຽວພາຍໃນ) ເຂົ້າມາທ່ອງທ່ຽວເຂດປ່າສະຫງວນ ຈຳນວນ 333 ລ້ານຄົນ ສ້າງລາຍຮັບຈາກການທ່ອງທ່ຽວ ປະມານ 3 ຕື້ໂດລາສະຫະລັດ ແລະ ສ້າງວຽກເຮັດງານທຳໄດ້ 1 ລ້ານຕຳແໜ່ງ[9].

---

[6] Andam et al. 2010. Protected areas reduced poverty in Costa Rica and Thailand. PNAS 107(22): 9996-10001

[7] Wang et al. 2012. National park development in China: conservation or commercialization. AMBIO 41: 247-261.

[8] Balmford, et al. 2015. Walk on the wild side: estimating the global magnitude of visits to protected areas. PLOS Biology 13(2): e1002074.

[9] Wang et al.

– ປະເທດອິນເດຍ ການທ່ອງທ່ຽວຢູ່ເຂດປ່າສະຫງວນ ມີການຂະຫຍາຍຕົວໃນໄລຍະແຕ່ປີ 2002 ຫາ 2008 ສະເລ່ຍ 15% ຕໍ່ປີ[10]. ອຸທິຍານແຫ່ງຊາດ ຄ້ອບເບັດ ເປັນໜຶ່ງໃນບັນດາເຂດປ່າສະຫງວນທີ່ມີເສືອຈຳນວນຫຼາຍ, ມີນົກຫຼາກຫຼາຍຊະນິດ ແລະ ມີທິວທັດທຳມະຊາດທີ່ສວຍງາມໜ້າອັດສະຈັນ, ໃນປີ 2000 ເຂດປ່າສະຫງວນແຫ່ງນີ້ ມີລາຍຮັບຈາກການເກັບຄ່າທຳນຽມຈາກຜູ້ມາທ່ຽວຊົມຈຳນວນ 2 ໂດລາສະຫະລັດຕໍ່ຄົນ ແລະ ສ້າງລາຍຮັບ ໄດ້ຈຳນວນ 20.000 ໂດລາສະຫະລັດ. ມາໃນປີ 2005 ລາຍຮັບຈາກຄ່າທຳນຽມຈາກຜູ້ມາທ່ຽວຊົມ ໄດ້ເພີ່ມຂຶ້ນສອງເທົ່າ ເພີ່ມຂຶ້ນເປັນ 75.000 ໂດລາສະຫະລັດ ແລະ ເພີ່ມການຈ້າງງານໃນໄວໜຸ່ມທ້ອງຖິ່ນຕື່ມ 50 ຄົນ. ພ້ອມກັນນັ້ນ, ສິ່ງອຳນວຍຄວາມສະດວກ ແລະ ພື້ນຖານໂຄງລ່າງກໍ່ໄດ້ຮັບການປັບປຸງຂຶ້ນເທື່ອລະກ້າວ. ໃນລະຫວ່າງປີ 2005-2009 ລາຍຮັບຂອງສວນອຸທິຍານໄດ້ເພີ່ມຂຶ້ນສາມເທົ່າ ເປັນຈຳນວນ 1,5 ລ້ານໂດລາສະຫະລັດ[11].

### 3.3 ແນວທາງການສົ່ງເສີມການທ່ອງທ່ຽວອະນຸລັກນິເວດວິທະຍາ

ການທ່ອງທ່ຽວອະນຸລັກນິເວດວິທະຍາ ແມ່ນຮູບແບບໜຶ່ງຂອງການທ່ອງທ່ຽວແບບຍືນຍົງ ຊຶ່ງເປັນການທ່ອງທ່ຽວທີ່ເຮັດໃຫ້ເກີດຜົນຕໍ່ກັບດ້ານເສດຖະກິດ ໂດຍການນຳໃຊ້ຊັບພະຍາກອນການທ່ອງທ່ຽວຢ່າງມີປະສິດທິພາບ ແລະ ປະສິດທິຜົນ, ເພື່ອເຮັດໃຫ້ການທ່ອງທ່ຽວມີຄວາມໝັ້ນຄົງໄດ້ຢ່າງຍືນຍົງຢູ່ຄຽງຄູ່ກັບສັງຄົມມະນຸດເຮົາ ແລະປະກອບສ່ວນເຂົ້າໃນການພັດທະນາຄຸນນະພາບຊີວິດທີ່ດີກວ່າເກົ່າ. ດັ່ງນັ້ນ, ແນວຄິດຂອງການທ່ອງທ່ຽວແບບນິເວດວິທະຍາ ຈຶ່ງບໍ່ເປັນພຽງແຕ່ການທ່ອງທ່ຽວທີ່ສຸມໃສ່ຜົນປະໂຫຍດທາງດ້ານເສດຖະກິດ, ເນັ້ນຂາຍຜະລິດຕະພັນ ຫຼື ການບໍລິການດ້ານການທ່ອງທ່ຽວໃຫ້ແກ່ນັກທ່ອງທ່ຽວເທົ່ານັ້ນ ແຕ່ຍັງໄດ້ເອົາໃຈໃສ່ປະສົມປະສານລະຫວ່າງຜົນປະໂຫຍດຂອງການອະນຸລັກສິ່ງແວດລ້ອມທາງທຳມະຊາດ ແລະ ທາງດ້ານວັດທະນະທຳຕື່ມອີກ (□□□□□□□ก□□□□□□□□□□□ก□□□□□□□□□□□□□□□□□□□□□□□□□ก□□, 2014).

ສະນັ້ນ, ຈຶ່ງສາມາດເວົ້າໄດ້ວ່າການທ່ອງທ່ຽວນິເວດວິທະຍາ ມີບົດບາດສຳຄັນໃນການສະໜັບສະໜູນການພັດທະນາການທ່ອງທ່ຽວຢ່າງມີປະສິດທິພາບ ແລະ ປະສິດທິຜົນ ໂດຍສະເພາະແມ່ນການທີ່ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງນັກທ່ອງທ່ຽວ, ສາມາດສ້າງລາຍຮັບເຂົ້າປະເທດໄດ້ ແລະ ສາມາດສ້າງຄວາມເພິ່ງພໍໃຈໃຫ້ແກ່ປະຊາຊົນໃນທ້ອງຖິ່ນ. ໃນຂະນະດຽວກັນ, ກໍ່ຍັງຊ່ວຍປົກປັກຮັກສາເອກະລັກທາງວັດທະນະທຳ ແລະ ສະພາບແວດລ້ອມຂອງການທ່ອງທ່ຽວໃຫ້ຢູ່ຄູ່ກັບສັງຄົມເຮົາຢ່າງຍາວນານເທົ່າທີ່ຈະເປັນໄປໄດ້. ດັ່ງນັ້ນ, ຈຶ່ງສາມາດສະຫຼຸບໄດ້ວ່າ ການທ່ອງທ່ຽວແບບນິເວດວິທະຍາ ແມ່ນມີຈຸດປະສົງຫຼັກເພື່ອສ້າງຄວາມສົມດຸນລະຫວ່າງ ທ່າອ່ຽງກະແສຂອງການພັດທະນາເສດຖະກິດ ກັບທ່າອ່ຽງການອະນຸລັກ. ສະນັ້ນ, ເພື່ອສົ່ງເສີມການທ່ອງທ່ຽວດັ່ງກ່າວ ໃຫ້ບັນລຸຕາມຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້ ຈຳເປັນຕ້ອງໄດ້ອາໄສຄວາມຮ່ວມມື ແລະ ການສະໜັບສະໜູນຈາກທຸກພາກສ່ວນທີ່ກ່ຽວຂ້ອງກັບການທ່ອງທ່ຽວ ໂດຍສະເພາະພາກລັດ, ພາກເອກະຊົນ ແລະ ນັກທ່ອງທ່ຽວ ເນື່ອງຈາກທັງ 3 ພາກສ່ວນນີ້ລ້ວນແລ້ວແຕ່ມີບົດບາດສຳຄັນຕໍ່ກັບການສົ່ງເສີມການທ່ອງທ່ຽວແບບນິເວດວິທະຍາ.

---

[10] K. K. Karanth and R. DeFries. 2010. Wildlife tourists in India’s emerging economy: potential for a conservation constituency? Oryx 46(3): 382-390.

[11] Leung, Y.-F., et al. 2018. Tourism and visitor management in protected areas: guidelines towards sustainability. Best Practice Protected Area Guidelines Series No. 27, Gland, Switzerland.

### 3.4 ນະໂຍບາຍ, ລະບຽບ ແລະ ຂໍ້ກຳນົດໃນການພັດທະນາຂະແໜງທ່ອງທ່ຽວ ໃນ ສປປ ລາວ

ລັດຖະບານ ແຫ່ງ ສປປ ລາວ ໄດ້ຖືເອົາວຽກງານການທ່ອງທ່ຽວເປັນຂະແໜງການເສດຖະກິດສຳຄັນອັນ ໜຶ່ງທີ່ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງປະເທດເຮົາ. ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ເອົາໃຈໃສ່ຢ່າງເປັນເຈົ້າການໃນການປະສານງານກັບບັນດາຂະແໜງການທີ່ກ່ຽວຂ້ອງ ທັງພາກລັດ ແລະ ພາກທຸລະກິດ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອພ້ອມກັນພະຍາຍາມແກ້ໄຂບັນດາຂອດອັດຕັນທີ່ເປັນອຸປະສັກຕໍ່ວຽກງານພັດທະນາການທ່ອງທ່ຽວ ແລະ ພ້ອມກັນກຳນົດບັນດາກິດຈະກຳທ່ອງທ່ຽວຕ່າງໆ ເພື່ອເປັນການໂຄສະນາດຶງດູດນັກທ່ອງທ່ຽວໃຫ້ເຂົ້າມາຢ້ຽມຢາມທ່ຽວຊົມປະເທດລາວຫຼາຍຂື້ນ (ກະຊວງແຜນການແລະການລົງທຶນ, 2016).

ພາຍຫຼັງກອງປະຊຸມໃຫຍ່ ຄັ້ງທີ IV ຂອງພັກປະຊາຊົນປະຕິວັດລາວ, ໃນປີ 1986 ໄດ້ກຳນົດແນວທາງປ່ຽນແປງໃໝ່ຮອບດ້ານ ແລະ ເປີດກວ້າງການຮ່ວມມືກັບຕ່າງປະເທດ, ເດືອນພະຈິກ 2005 ກົດໝາຍວ່າດ້ວຍການທ່ອງທ່ຽວ ໄດ້ຖືກຮັບຮອງເອົາຢູ່ໃນກອງປະຊຸມຄັ້ງທີ VIII ຂອງສະພາແຫ່ງຊາດ ຊຸດທີ V ໂດຍມີການອະນຸຍາດໃຫ້ບໍລິສັດຕ່າງປະເທດ ສາມາດດຳເນີນທຸລະກິດການທ່ອງທ່ຽວໄດ້ ຊຶ່ງມັນໄດ້ເພີ່ມທະວີບົດບາດ ແລະ ຄວາມສຳຄັນຂອງອຸດສາຫະກຳທ່ອງທ່ຽວໃຫ້ສູງຂຶ້ນ ເຮັດໃຫ້ການທ່ອງທ່ຽວໄດ້ຄ່ອຍໆເຂົ້າມາມີບົດບາດໃນການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ. ລັດຖະບານ ໄດ້ກຳນົດ ແລະ ປະກາດຈັດຕັ້ງປະຕິບັດການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວທາງດ້ານວັດທະນະທຳ, ທຳມະຊາດ ແລະ ປະຫວັດສາດ ເພື່ອຮອງຮັບການທ່ອງທ່ຽວ ແລະ ການບໍລິການອື່ນໆໃຫ້ມີການຂະຫຍາຍຕົວ ພ້ອມນັ້ນກໍ່ໄດ້ສຸມໃສ່ການພັດທະນາໂຄງລ່າງພື້ນຖານຢ່າງຫຼວງຫຼາຍ ດ້ວຍການສ້າງເສັ້ນທາງຄົມມະນາຄົມເຊື່ອມຈອດກັນໃນທົ່ວປະເທດ ແລະ ເຊື່ອມຈອດກັບປະເທດເພື່ອນບ້ານ, ໄດ້ມີຄວາມພະຍາຍາມສູງໃນການຂະຫຍາຍດ່ານເຂົ້າ-ອອກປະເທດໃຫ້ຫຼາຍຂຶ້ນ ເພື່ອເຊື່ອມໂຍງກັບບັນດາປະເທດອ້ອມຂ້າງ ແລະ ສາກົນ ພ້ອມທັງຂະຫຍາຍສະໜາມບິນເພື່ອຮອງຮັບການທ່ອງທ່ຽວ, ໃຫ້ການຍົກເວັ້ນວິຊາແກ່ປະເທດໃນກຸ່ມອາຊຽນ ແລະ ປະເທດອື່ນໆຢູ່ໃນໂລກຈຳນວນໜຶ່ງ ພ້ອມທັງຂະຫຍາຍກຳນົດອາຍຸວິຊາກັບດ່ານຈາກ 15 ວັນ ມາເປັນ 30 ວັນຕໍ່ຄັ້ງ ຕາມຄຳສັ່ງເລກທີ 15/ນຍ, ລົງວັນທີ 20 ມິຖຸນາ 2006.

### 3.5 ສະພາບການພັດທະນາການທ່ອງທ່ຽວໃນ ສປປ ລາວ ໄລຍະຜ່ານມາ

ສປປ ລາວ ມີແຫຼ່ງທ່ອງທ່ຽວທີ່ໜ້າສົນໃຈ ແລະ ສວຍສົດງົດງາມຫຼາຍແຫ່ງທີ່ເປັນເອກະລັກສະເພາະ ບໍ່ວ່າຈະເປັນແຫຼ່ງທ່ອງທ່ຽວທາງທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ທີ່ດຶງດູດເອົານັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດຈຳນວນຫຼວງຫຼາຍ. ທັງນີ້ເອກະລັກສະເພາະຂອງ ສປປ ລາວ ຍັງໄດ້ສ້າງຄຸນຄ່າທາງດ້ານວັດທະນະທຳທີ່ມີຊື່ສຽງໃນພາກພື້ນ ແລະ ສາກົນ ເຊິ່ງອົງການ UNESCO ໄດ້ຮັບຮອງເອົາເມືອງຫຼວງພະບາງ, ວັດພູ ແຂວງ ຈຳປາສັກ ແລະ ທົ່ງໄຫຫີນ ແຂວງ ຊຽງຂວາງ ເປັນມໍລະດົກໂລກ.

ການເກັບກຳແຫຼ່ງທ່ອງທ່ຽວຢ່າງເປັນທາງການໄດ້ເລີ່ມແຕ່ປີ 2007 ເຊິ່ງເວລານັ້ນມີແຫຼ່ງທ່ອງທ່ຽວທັງໝົດ 1.493 ແຫ່ງ ໃນນັ້ນ, ມີແຫຼ່ງທ່ອງທ່ຽວທາງທຳມະຊາດ 849 ແຫ່ງ, ແຫຼ່ງທ່ອງທ່ຽວທາງວັດທະນະທຳ 485 ແຫ່ງ ແລະ ແຫຼ່ງທ່ອງທ່ຽວທາງປະຫວັດສາດ 209 ແຫ່ງ. ມາຮອດປີ 2013 ຈຳນວນຕົວເລກແຫຼ່ງທ່ອງທ່ຽວໄດ້ມີການເພີ່ມຂຶ້ນເປັນ 1.879 ແຫ່ງ ແລະ ໃນປີ 2014 ແຫຼ່ງທ່ອງທ່ຽວທີ່ໄດ້ເປີດໃຊ້ບໍລິການຕົວຈິງມີຄື: ແຫຼ່ງທ່ອງທ່ຽວທາງທຳມະຊາດ 1.145 ແຫ່ງ, ແຫຼ່ງທ່ອງທ່ຽວທາງວັດທະນະທຳ 589 ແຫ່ງ ແລະ ແຫຼ່ງທ່ອງທ່ຽວທາງປະຫວັດສາດ 278 ແຫ່ງ ແຕ່ໃນຕົວຈິງແລ້ວ, ຄາດວ່າແຫຼ່ງທ່ອງທ່ຽວຂອງລາວເຮົາຍັງຈະມີຈຳນວນຫຼາຍກວ່ານີ້ ເນື່ອງຈາກຍັງມີແຫຼ່ງທ່ອງທ່ຽວຈຳນວນຫຼາຍທີ່ຍັງບໍ່ໄດ້ຂຶ້ນທະບຽນຢ່າງເປັນທາງການ. ໃນປັດຈຸບັນໃນທົ່ວປະເທດມີແຫຼ່ງທ່ອງທ່ຽວທີ່ຈົດທະບຽນ

ແລ້ວຈຳນວນ 2.104 ແຫ່ງ. ໃນນີ້ມີແຫຼ່ງທ່ອງທ່ຽວທຳມະຊາດ 1.194 ແຫ່ງ, ວັດທະນະທຳ 628 ແຫ່ງ, ປະຫວັດສາດ 282 ແຫ່ງ ( ກະຊວງແຜນການ ແລະ ການລົງທຶນ, 2015).

ຮູບສະແດງ 6: ການພັດທະນາແຫຼ່ງທ່ອງທ່ຽວ (ຫົວໜ່ວຍ: ແຫ່ງ)




ແຫຼ່ງຂໍ້ມູນ : ກົມພັດທະນາການທ່ອງທ່ຽວ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ສຳລັບຍຸດທະສາດພັດທະນາການທ່ອງທ່ຽວ: ໜຶ່ງໃນວິທີແກ້ໄຂຂໍ້ຫຍຸ້ງຍາກໃນຂະແໜງທ່ອງທ່ຽວແມ່ນຕ້ອງສົ່ງເສີມການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ, ເອົາໃຈໃສ່ການເຊື່ອມໂຍງລະຫວ່າງພາກພື້ນ ແລະ ສາກົນ, ສ້າງຄວາມເຂັ້ມແຂງດ້ານເຕັກໂນໂລຊີຂໍ້ມູນຂ່າວສານ-ການສື່ສານ, ສ້າງຄວາມສະດວກໃນການອະນຸມັດວີຊ່າ ແລະ ປັບປຸງສະພາບແວດລ້ອມການດຳເນີນທຸລະກິດໃຫ້ມີຄວາມສະດວກສະບາຍກວ່າເກົ່າ (ຕົວຢ່າງ: ຂໍ້ຈຳກັດດ້ານກຳມະສິດ, ໃບອະນຸຍາດການດຳເນີນທຸລະກິດ, ການນຳໃຊ້ທີ່ດິນ ແລະ ນະໂຍບາຍສົ່ງເສີມການແຂ່ງຂັນ). ພ້ອມນັ້ນ, ໂຄງການທີ່ຕິດພັນກັບການຂົນສົ່ງ ເປັນຕົ້ນ: ໂຄງການສະໜັບສະໜູນການເຊື່ອມໂຍງທາງບົກ, ທາງລົດໄຟ ແລະ ທາງອາກາດ ລ້ວນແລ້ວແຕ່ເປັນໂຄງການທີ່ມີຄວາມສຳຄັນໃນການເພີ່ມຈຳນວນນັກທ່ອງທ່ຽວ ແລະ ລາຍຮັບ ໂດຍສະເພາະນັກທ່ອງທ່ຽວຈາກກຸ່ມປະເທດອາຊຽນ ແລະ ຈີນ (ກະຊວງແຜນການ ແລະ ການລົງທຶນ, 2018).

ການທ່ອງທ່ຽວແບບຍືນຍົງ: ການພັດທະນາຂະແໜງທ່ອງທ່ຽວແບບຍືນຍົງ ເປັນເຄື່ອງຈັກໃນການຂັບເຄື່ອນການເຕີບໂຕ ເພື່ອເພີ່ມລາຍຮັບ ແລະ ສ້າງວຽກເຮັດງານທຳຄຽງຄູ່ກັບການປົກປັກຮັກສາສິ່ງແວດລ້ອມ. ເປົ້າໝາຍ SDG ໄດ້ກຳນົດຈະແຈ້ງກ່ຽວກັບວິທີການພັດທະນາທ່ອງທ່ຽວແບບຍືນຍົງ ແລະ ຮຽກຮ້ອງໃຫ້ທຸກປະເທດປັບປຸງ ແລະ ຈັດຕັ້ງປະຕິບັດນະໂຍບາຍທີ່ສົ່ງເສີມການທ່ອງທ່ຽວທີ່ສ້າງລາຍຮັບ, ສ້າງວຽກເຮັດງານທຳ ແລະ ສົ່ງເສີມວັດທະນະທຳ ແລະ ສິນຄ້າທ້ອງຖິ່ນ (SDG 8.9) (ກະຊວງແຜນການ ແລະ ການລົງທຶນ, 2018).

### 3.6 ສະພາບນັກທ່ອງທ່ຽວເຂົ້າມາທ່ອງທ່ຽວໃນ ສປປ ລາວ

ຂະແໜງການທ່ອງທ່ຽວລາວ ໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ ໂດຍສະເພາະແມ່ນພາຍຫຼັງທີ່ລັດຖະບານ ໄດ້ປະກາດປີ 1999 ເປັນປີທ່ອງທ່ຽວລາວ ແລະ ມີການໂຄສະນາຢ່າງແຂງແຮງ ແລະ ຕໍ່ເນື່ອງເພື່ອດຶງດູດນັກທ່ອງທ່ຽວເຂົ້າປະເທດ ເຮັດໃຫ້ຕົວເລກນັກທ່ອງທ່ຽວເພີ່ມຂຶ້ນຢ່າງກ້າວກະໂດດຄື: ຈາກຈຳນວນນັກ

ທ່ອງທ່ຽວທີ່ເຂົ້າມາລາວຈຳນວນ 14.400 ຄົນໃນປີ 1990 ເພີ່ມຂຶ້ນເຖິງ 737.208 ຄົນ ໃນປີ 2000, ສ້າງລາຍຮັບເຂົ້າປະເທດໄດ້ເຖິງ 113,90 ລ້ານໂດລາສະຫະລັດ. ໃນປີ 2004 ສປປ ລາວ ໄດ້ຮັບເປັນເຈົ້າພາບຈັດກອງປະຊຸມລັດຖະມົນຕີທ່ອງທ່ຽວອາຊຽນ ແລະ ງານມະຫະກຳການທ່ອງທ່ຽວອາຊຽນ (ATF) ເຮັດໃຫ້ຕົວເລກນັກທ່ອງທ່ຽວໄດ້ເພີ່ມຂຶ້ນເປັນ 894.806 ຄົນ ສ້າງລາຍຮັບໄດ້ 118,95 ລ້ານໂດລາສະຫະລັດ ແລະ ໃນລະຫວ່າງປີ 2006-2010 ຕົວເລກນັກທ່ອງທ່ຽວເຂົ້າມາໃນປະເທດເຮົາເພີ່ມຂຶ້ນຕາມລຳດັບ ຈາກ 1,2 ລ້ານຄົນ ໃນປີ 2006 ເປັນ 2,50 ລ້ານຄົນ ໃນປີ 2010 ແລະ ມີລາຍຮັບຈາກນັກທ່ອງທ່ຽວ 381,69 ລ້ານໂດລາສະຫະລັດ.

ສຳລັບຕະຫຼາດທ່ອງທ່ຽວສຳຄັນຂອງ ສປປ ລາວ ແມ່ນຈາກຂົງເຂດອາຊີ-ປາຊີຟິກ ໂດຍສະເພາະແມ່ນຈາກກຸ່ມປະເທດອາຊຽນ ຄື: ລາຊາອານາຈັກໄທ ແລະ ສສ ຫວຽດນາມ, ຈາກຂົງເຂດອາຊີ-ປາຊີຟິກ ຄື: ສປ ຈີນ, ຍີ່ປຸ່ນ, ສ. ເກົາຫຼີ ແລະ ອົດສະຕາຣີ. ນອກນັ້ນ, ຍັງມີນັກທ່ອງທ່ຽວທີ່ມີລາຍຈ່າຍສູງຈາກ ເອີລົບ ແລະ ອາເມລິກາ ເຊັ່ນ: ຝຣັ່ງ, ອັງກິດ, ເຢຍລະມັນ ແລະ ອາເມລິກາ ເຂົ້າມາທ່ຽວປະເທດເຮົານຳອີກ ( ກະຊວງແຜນການ ແລະ ການລົງທຶນ, 2015).

ຮູບສະແດງ 7: ຈຳນວນນັກທ່ອງທ່ຽວຫົວໜ່ວຍ ແບ່ງເປັນແຕ່ລະພາກສ່ວນ (ຫົວໜ່ວຍ: ຄົນ)




ແຫຼ່ງຂໍ້ມູນ : ກົມພັດທະນາການທ່ອງທ່ຽວ, ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ຕາຕະລາງ 6: ໄລຍະເວລາພັກເຊົາສະເລ່ຍຂອງນັກທ່ອງທ່ຽວ ແລະ ລາຍຮັບຈາກການທ່ອງທ່ຽວ

| ປີ | ໄລຍະເວລາພັກເຊົາສະເລ່ຍຂອງນັກທ່ອງທ່ຽວສາກົນ (ມື້) | ໄລຍະເວລາພັກເຊົາສະເລ່ຍຂອງນັກທ່ອງທ່ຽວພາກພື້ນ (ມື້) | ໄລຍະເວລາພັກເຊົາສະເລ່ຍຂອງນັກທ່ອງ | ລາຍຮັບຈາກການທ່ອງທ່ຽວ (ລ້ານໂດລາສະຫະລັດ) |
|---|---|---|---|---|

| | | | ທ່ຽວທັງໝົດ (ມື້) | |
|---|---|---|---|---|
| 2010 | 7.00 | 2.00 | 4.50 | 381,669 |
| 2011 | 7.00 | 2.00 | 4.50 | 406,184 |
| 2012 | 7.20 | 2.00 | 4.60 | 506,022 |
| 2013 | 8.40 | 2.00 | 5.20 | 595,909 |
| 2014 | 7.90 | 2.00 | 4.90 | 641,636 |
| 2015 | 7.50 | 2.00 | 4.75 | 725,365 |
| 2016 | 7.57 | 2.00 | 4.78 | 724,191 |
| 2017 | 8.39 | 2.00 | 5.20 | 648,067 |
| 2018 | 7.99 | 1.94 | 5.08 | 755,342 |
| 2019 | 8.40 | 1.92 | 5.22 | 740,350 |

ແຫຼ່ງຂໍ້ມູນ : ກົມພັດທະນາການທ່ອງທ່ຽວ, ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ໃນແຜນການ 5 ປີ ຄັ້ງທີ VIII (2016-2020) ມີຄາດໝາຍສູ້ຊົນໃຫ້ນັກທ່ອງທ່ຽວເຂົ້າມາ 6 ລ້ານຄົນ ຕໍ່ປີ ແລະ ພັກເຊົາສະເລ່ຍ 10 ມື້ຕໍ່ຖ້ຽວ. ອີງໃສ່ໂຕເລກປີ 2016-2017 ມີນັກທ່ອງທ່ຽວເຂົ້າມາສະເລ່ຍ 4 ລ້ານຄົນຕໍ່ປີ (4,2 ລ້ານຄົນ ປີ 2016 ແລະ 3,9 ລ້ານຄົນ ປີ 2017). ລາຍຮັບຈາກຂະແໜງທ່ອງທ່ຽວແມ່ນປະມານ 724 ລ້ານໂດລາ ສະຫະລັດ ໃນປີ 2016 ແລະ 648 ລ້ານ ໂດລາສະຫະລັດ ໃນປີ 2017 ທຽບໃສ່ຄາດໝາຍ 953 ລ້ານໂດລາ ສະຫະລັດ ເຊິ່ງຍັງເຫັນວ່າຍັງຫຼຸດຄາດໝາຍຫຼາຍ. ນອກຈາກນັ້ນ, ຈຳນວນມື້ພັກເຊົາສະເລ່ຍກໍ່ສາມາດບັນລຸພຽງແຕ່ 4,78 ມື້ຕໍ່ຖ້ຽວສາເຫດຍ້ອນການບໍລິຫານວຽກງານດ້ານການທ່ອງທ່ຽວໃນພາກລັດມີລັກສະນະຊ້ຳຊ້ອນກັນ, ປະເທດອ້ອມຂ້າງມີຄວາມໜ້າສົນໃຈໃນການທ່ອງທ່ຽວຫຼາຍກວ່າ, ການທ່ອງທ່ຽວໃນລາວມີຄ່າໃຊ້ຈ່າຍສູງກວ່າທຽບໃສ່ປະເທດເພື່ອນບ້ານ, ການບໍລິການຢູ່ດ່ານເຂົ້າ-ອອກ ຍັງມີຄວາມຫຍຸ້ງຍາກ, ການກວດກາຢູ່ຈຸດກວດກາ ແລະ ຢູ່ແຫຼ່ງທ່ອງທ່ຽວຕ່າງໆ ຫຼື ຢູ່ຕາມຖະໜົນຍັງຕິດພັນກັບການປັບໃໝທີ່ບໍ່ສົມເຫດສົມຜົນ ເຮັດໃຫ້ນັກທ່ອງທ່ຽວ ແລະ ບໍລິສັດທ່ອງທ່ຽວ ບໍ່ມີຄວາມສະດວກສະບາຍ, ຄ່າບໍລິການການຂົນສົ່ງໂດຍສານຍັງສູງ ແລະ ບໍ່ສາມາດຄຸ້ມຄອງການເກັບຄ່າຜ່ານປະຕູເຂົ້າຊົມແຫຼ່ງທ່ອງທ່ຽວຕ່າງໆໄດ້ເຮັດໃຫ້ລາຄາຍັງບໍ່ສົມເຫດສົມຜົນ ເຊິ່ງສິ່ງທີ່ກ່າວມາຂ້າງເທິງນັ້ນ ລ້ວນແລ້ວແຕ່ເປັນສິ່ງຖ່ວງດຶງເຮັດໃຫ້ການພັດທະນາການທ່ອງທ່ຽວບໍ່ສາມາດຂະຫຍາຍຕົວໄດ້ດີເທົ່າທີ່ຄວນ (ກະຊວງແຜນການ ແລະ ການລົງທຶນ, 2018).

## IV. ຜົນການວິເຄາະ

### 4.1 ກໍລະນີສຶກສາສະພາບການຜະລິດກະສິກຳອິນຊີ

#### 4.1.1 ລັກສະນະດ້ານຜົນຜະລິດ

- ❖ ຜົນໄດ້ຮັບຈາກການສຳຫຼວດການຜະລິດກະເຟອິນຊີຢູ່ ແຂວງ ສາລາວັນ ແລະ ແຂວງ ຈຳປາສັກ.

ອີງຕາມການລົງສຳຫຼວດ ແລະ ສັງເກດກ່ຽວກັບຂະແໜງກາເຟຂອງລາວ, ພວກເຮົາສາມາດສັງລວມຂັ້ນ (Tier) ຂອງຜູ້ຜະລິດກາເຟໃນ ສປປ ລາວ ອອກເປັນ 3 ຂັ້ນຄື: ຂັ້ນທີ1 ແມ່ນ ລະດັບນ້ອຍ (ຜູ້ຜະລິດຂະໜາດ ນ້ອຍ), ຂັ້ນທີ2 ແມ່ນລະດັບກາງ (ຜູ້ຜະລິດຂະໜາດກາງ) ແລະ ຂັ້ນທີ3 ແມ່ນລະດັບສູງ (ຜູ້ຜະລິດຂະໜາດ ໃຫຍ່).

*Tier 1: ລະດັບນ້ອຍ*

ຜູ້ຜະລິດກາເຟລະດັບນ້ອຍ (ຜູ້ຜະລິດຂະໜາດນ້ອຍ) ແມ່ນບັນດາຊາວກະສິກອນຜູ້ປູກກາເຟທີ່ນໍາໃຊ້ແຮງງານໃນຄອບຄົວເປັນຫຼັກໃນການບົວລະບັດ ແລະ ມີການຈ້າງງານແຮງງານຊົ່ວຄາວເຂົ້າມາຊ່ວຍປັບໜ້າດິນ, ແລະ ເກັບກ່ຽວຜົນຜະລິດກາເຟ ເຊິ່ງເອີ້ນວ່າ ແຮງງານຕາມລະດູການ. ເມື່ອທຽບກັບຫວຽດນາມ, ຜະລິດຕະພາບຂອງແຮງງານລາວຍັງຕໍ່າ ເຫດຜົນໜຶ່ງແມ່ນຍ້ອນມີເນື້ອທີ່ການຜະລິດຫຼາຍແຕ່ແຮງງານຄອບຄົວໜ້ອຍ, ອັດຕາສ່ວນຂອງແຮງງານຕໍ່ກັບເນື້ອທີ່ການຜະລິດສູງພາໃຫ້ການເບິ່ງແຍງສວນກາເຟບໍ່ທັນເປັນລະບຽບ ແລະ ຂາດການບໍລິຫານທີ່ເປັນລະບົບ. ສິ່ງດັ່ງກ່າວເຮັດໃຫ້ຜູ້ຜະລິດກາເຟຂະໜາດນ້ອຍບໍ່ສາມາດຄວບຄຸມຄຸນນະພາບຂອງການຜະລິດໄດ້, ທັງຍັງສົ່ງຜົນຕໍ່ກັບຄຸນນະພາບຂອງກາເຟ. ຢູ່ເມືອງປາກຊ່ອງ, ແຂວງຈໍາປາສັກ, ເນື້ອທີ່ປູກກາເຟ 1-2 ເຮັກຕາ ສາມາດເກັບຜົນຜະລິດໄດ້ປະມານ 60-70 kg/ງວດ ຫຼືອາດສູງເຖິງ 100 kg/ງວດ, ເຊິ່ງການເກັບກ່ຽວກາເຟແບ່ງອອກເປັນ 3-4 ງວດຕໍ່ປີ. ງວດທີ 1 ແມ່ນເລີ່ມເກັບໝາກສຸກ (Cherry) ເທື່ອລະໜ່ອຍຈາກຕົ້ນ, ເມື່ອເກັບຮອດງວດທີ 2 ແມ່ນເກັບປົນກັນລະຫວ່າງໝາກສຸກ ແລະ ໝາກດິບ. ຮອບວຽນການເກັບກ່ຽວຈະມີຄວາມແຕກຕ່າງກັນລະຫວ່າງ ກາເຟໂຣບັດສະຕ້າ ແລະ ອາຣາບິກ້າ. ການເກັບເມັດກາເຟໂຣບັດສະຕ້າຈະເລີ່ມເກັບຊ່ວງເດືອນກຸມພາ, ສ່ວນອາຣາບິກ້າຈະເລີ່ມເກັບລະຫວ່າງເດືອນຕຸລາ ຈົນຮອດ ເດືອນມັງກອນ. ຮອບວຽນການເກັບກ່ຽວດັ່ງກ່າວໄປທັບຊ້ອນກັບໄລຍະກ່ຽວເຂົ້າຂອງປະຊາຊົນສົ່ງຜົນໃຫ້ເກີດບັນຫາແຮງງານບໍ່ພຽງພໍຕໍ່ກັບຄວາມຕ້ອງການ. ສໍາລັບຄ່າຈ້າງ, ແຮງງານຈະໄດ້ຮັບ ເງິນເປັນຄ່າຈ້າງໃນການເກັບເມັດກາເຟຈໍານວນ 1.000 ກີບ/kg, ເຊິ່ງເຫັນໄດ້ວ່າ ອັດຕາຄ່າຈ້າງຈໍານວນດັ່ງກ່າວບໍ່ປ່ຽນແປງຫຼາຍໃນໄລຍະ 2-3 ປີຜ່ານມາ (ຮອດມື້ລົງສໍາຫຼວດນີ້). ຜ່ານມາສາມາດສັງເກດເຫັນໄດ້ວ່າ ແຮງງານລາວມັກຈະເລືອກເກັບເມັດກາເຟຈາກຕົ້ນກາເຟອາຣາບິກ້າຫຼາຍກວ່າ, ບໍ່ແມ່ນຍ້ອນວ່າຄ່າຈ້າງດີກວ່າ ແຕ່ຍ້ອນສາມາດເກັບໄດ້ງ່າຍກວ່າ ເນື່ອງຈາກຕົ້ນກາເຟອາຣາບິກ້າມີລັກສະນະເປັນຕົ້ນຕໍ່າ ແລະ ບໍ່ຈໍາເປັນຕ້ອງໃຊ້ອຸປະກອນເກັບຄືໂຣບັດສະຕ້າ. ກົງກັນຂ້າມ, ຢູ່ແຂວງຊຽງຂວາງ ຄ່າຈ້າງແຮງງານສໍາລັບເກັບ ກາເຟ ແມ່ນສູງກວ່າທາງພາກໃຕ້ເນື່ອງຈາກເນື້ອທີ່ປູກເທິງພູມີຈໍາກັດ, ຈໍານວນແຮງງານໜ້ອຍ ແລະ ຊາວກະສິກອນປູກກາເຟເປັນອາຊີບເສີມຈາກການປູກເຂົ້າຕ່າງກັບທາງພາກໃຕ້ທີ່ປູກກາເຟເປັນຫຼັກທີ່ຈໍາເປັນຕ້ອງຊອກແຮງງານລາຄາຖືກມາເກັບກ່ຽວຜົນຜະລິດ.

ຢູ່ພາກໃຕ້, ເມັດກາເຟດິບທີ່ເຂົ້າຮ່ວມກຸ່ມການຜະລິດກາເຟອິນຊີຈະມີລາຄາຂາຍຢູ່ພາຍໃນໂດຍສະເລ່ຍປະມານ 3.700 ກີບ/kg ເມື່ອຊາວກະສິກອນຊອກຫາຕະຫຼາດເພື່ອຂາຍເອງ ແລະ ເພີ່ມຂຶ້ນອີກ 100 ກີບ/kg (ເປັນ 3.800 ກີບ/kg) ເມື່ອຂາຍໃຫ້ແກ່ພໍ່ຄ້າຄົນກາງ ຫຼື ຜູ້ຜະລິດລາຍກາງ (Tier 2) ຫຼືລາຍໃຫຍ່ (Tier 3) ທີ່ມາຮັບຊື້ເພື່ອໄປຜະລິດເປັນກາເຟຂົ້ວ. ນັ້ນສະທ້ອນໃຫ້ເຮົາເຫັນວ່າ ກໍາໄລທີ່ຊາວກະສິກອນຂະໜາດນ້ອຍມີກໍາໄລຫຼາຍໃນໄລຍະປີ 2019[12]. ໝາກສຸກ ທີ່ຜ່ານການຕາກແຫ້ງເລັກນ້ອຍຈະມີລາຄາຕໍ່າສຸດ, ຖ້າຜ່ານການລ້າງແລ້ວອົ້ວເອົາເປືອກອອກໄດ້ໜ່ວຍຂຽວ (Green Coffee Bean) 1kg (ໄດ້ຈາກໜ່ວຍແດງປະມານ 4kg), ຫຼັງຈາກນັ້ນເມື່ອນໍາໄປສີຈຶ່ງໄດ້ເມັດກາເຟແທ້ທີ່ສາມາດນໍາໄປຂົ້ວ ແລະ ສຸດທ້າຍກາເຟຂົ້ວຈະມີລາຄາຢູ່ປະມານ 18.000 – 22.000 ກີບ/kg. ສໍາລັບອັດຕາສ່ວນຮ້ອຍທີ່ກຸ່ມຜູ້ຜະລິດຂະໜາດນ້ອຍສົ່ງອອກກາເຟຂອງຕົນມີບໍ່ເຖິງ 5% ເມື່ອທຽບກັບຜູ້ຜະລິດລະດັບກາງ (ປະມານ 5-15%) ແລະ ສູງ (ປະມານ 80%). ເມື່ອຜູ້ຜະລິດຂະໜາດນ້ອຍຂາດ ເຕັກນິກ, ແຮງງານ, ເງິນທຶນ ແລະ ອໍານາດໃນການຕໍ່ລອງລາຄາ ຈຶ່ງເຮັດໃຫ້ມັກຖືກພໍ່ຄ້າຄົນກາງກົດລາຄາ ໂດຍໃຫ້ເຫດຜົນວ່າກາເຟບໍ່ໄດ້ມາດຕະຖານ. ເມື່ອຊາວກະສິກອນເຫັນວ່າ ບໍ່ກຸ້ມທຶນອາດເປັນສາເຫດໃຫ້ ພວກເຂົາປ່ຽນໄປປູກພືດຊະນິດອື່ນແທນ. ນອກຈາກທີ່ກ່າວມາແລ້ວນີ້, ກໍແມ່ນຍ້ອນຜູ່ຮັບຊື້ລາຍໃຫຍ່ເຊັ່ນ ບໍລິສັດ ດາວເຮືອງ ຂາດສະພາບຄ່ອງທາງດ້ານການເງິນຈຶ່ງສົ່ງຜົນເຮັດໃຫ້ຄວາມຕ້ອງການຊື້ກາເຟຫຼຸດລົງເຊັ່ນດຽວກັນ. ຍົກຕົວຢ່າງ, ມີຫຼາຍຄົວເຮືອນເລີ່ມຫຼຸດເນື້ອທີ່ການປູກກາເຟລົງ

[12] ກໍາໄລ (ກີບ/kg)=3,700 ກີບ/kg – 1,000 ກີບ/kg – ຕົ້ນທຶນບົວລະບັດກີບ/kg

ແລ້ວເລີ່ມປູກມັນຕົ້ນ ຫຼື ອາດຈະຫັນປ່ຽນເນື້ອທີ່ທັງໝົດເພື່ອປູກມັນຕົ້ນເລີຍ ເພາະວ່າໃຫ້ລາຄາດີກວ່າ (ຢ່າງໜ້ອຍເມື່ອເບິ່ງຈາກຜົນຕອບແທນທາງເສດຖະກິດໃນໄລຍະສັ້ນ).

*Tier 2: ລະດັບກາງ*

ຜູ່ຜະລິດກາເຟລະດັບກາງ (ຜູ້ຜະລິດຂະໜາດກາງ) ແມ່ນບັນດາຊາວກະສິກອນ ຫຼື ຜູ້ປະກອບການກາເຟທີ່ມີເນື້ອທີ່ປູກກາເຟບໍ່ເກີນ 100 ເຮັກຕາ, ເກັບກ່ຽວກາເຟໄດ້ປະມານ 5-6 ງອດຕໍ່ປີ ແລະ ມີການບໍລິຫານຈັດການທີ່ດີຂຶ້ນກວ່າ Tier 1 ແຕ່ຍັງບໍ່ສາມາດຍົກລະດັບຕົນເອງຂຶ້ນໄປຢູ່ Tier 3 ໄດ້ເທື່ອ. ນອກຈາກນັ້ນ, ຜູ້ຜະລິດລະດັບກາງຍັງບໍ່ທັນສາມາດສ້າງເຄື່ອງໝາຍການຄ້າສໍາລັບກາເຟສໍາເລັດຮູບຂອງຕົນເອງໃຫ້ເປັນທີ່ຮູ້ຈັກໃນຂອບເຂດກວ້າງ (ຂາຍແຕ່ກາເຟຂົ້ວຫຼາຍກວ່າ) ແລະ ທຶນການຜະລິດຍັງບໍ່ສູງ. ແຕ່ວ່າສິ່ງທີ່ເຮັດໃຫ້ຜູ້ຜະລິດລະດັບກາງສາມາດຍົກລະດັບຈາກ Tier 1 ມີຫຼາຍປັດໄຈປະກອບກັນ. (1) ຍ້ອນວ່າ ມີຕະຫຼາດທີ່ແນ່ນອນທັງພາຍໃນ ແລະ ຕ່າງປະເທດ, ສາມາດສົ່ງກາເຟຂົ້ວອອກຕ່າງປະເທດໄດ້ 5-15% ໂດຍທີ່ຕະຫຼາດສ່ວນໃຫຍ່ ແມ່ນ ຫວຽດນາມ, ໄທ ແລະ ອີກສ່ວນໜຶ່ງສົ່ງໄປເອີຣົບ ແຕ່ກໍຍັງເປັນສັດສ່ວນທີ່ໜ້ອຍຢູ່. (2) ມີການບໍລິຫານຈັດການນັບຕັ້ງແຕ່ການປູກ, ແປຮູບ ແລະ ຂົນສົ່ງຢ່າງເປັນລະບົບ. (3) ແມ່ນມີການປັບຕົວຕໍ່ກັບຕະຫຼາດ, ສະພາບການປ່ຽນແປງຂອງດິນຟ້າອາກາດ ແລະ ເຕັກນິກການຜະລິດທີ່ດີກວ່າ Tier 1. ຜູ້ຜະລິດກາເຟລະດັບກາງ (Tier 2) ສາມາດປະສົມປະສານການປູກກາເຟທັງອາຣາບິກ້າທີ່ມີມູນຄ່າສູງ, ກາຕີມໍ ແລະ ໂຣບັດສະຕ້າ ທີ່ທົນທານຕໍ່ອຸນຫະພູມສູງ ແລະ ສະພາບແວດລ້ອມເພື່ອຊ່ວຍປະກັນຄວາມສ່ຽງ ເມື່ອລາຄາອາຣາບິກ້າຕົກ. ບັນຫາທີ່ຜູ້ຜະລິດລະດັບກາງກໍາລັງປະເຊີນແມ່ນຄວາມພະຍາຍາມໃນການເຂົ້າຮ່ວມກຸ່ມການຜະລິດ ແລະ ເຂົ້າເຖິງຕະຫຼາດທີ່ໃຫຍ່ກວ່າເກົ່າ ແຕ່ອາດຈະຍັງຖືກກີດກັນຈາກບາງກຸ່ມຜູ້ຜະລິດເຊັ່ນ: ກຸ່ມຜູ້ຜະລິດກາເຟປາກຊ່ອງ (Bolaven Plateua Coffee Producers Cooperative: CPC) ທີ່ຄອງຕະຫຼາດກາເຟ ແລະ ໃຫ້ເຫດຜົນວ່າຜູ້ຜະລິດລະດັບກາງຍັງບໍ່ສາມາດບັນລຸເອົາມາດຕະຖານທີ່ສາກົນກໍານົດໄດ້.

*Tier 3: ລະດັບສູງ*

ຜູ້ຜະລິດກາເຟລະດັບສູງ (ຜູ້ຜະລິດຂະໜາດໃຫຍ່) ແມ່ນກຸ່ມຜູ້ປະກອບການກາເຟຂະໜາດໃຫຍ່ທີ່ມີເງິນທຶນຫຼາຍ, ອັດຕາສ່ວນການສົ່ງອອກກາເຟປະມານ 80% ແລະ ສ່ວນໃຫຍ່ຈະຜະລິດກາເຟສໍາເລັດຮູບທີ່ມີ ເຄື່ອງໝາຍການຄ້າຂອງຕົນເອງ ແລະ ເປັນທີ່ຮູ້ຈັກໃນຕະຫຼາດເຊັ່ນ: ກຸ່ມຜູ້ຜະລິດກາເຟປາກຊ່ອງ (Bolaven Plateua Coffee Producers Cooperative: CPC), ກາເຟສີໜຸກ (Sinouk Coffee), ກາເຟດາວ (Dao Coffee) ພຣີມຽມ, ກາເຟພູເຂົາລາວ (Lao Mountain Coffee), ກາເຟ ເລີທຣີໂອ (Le Trio Coffee), ກາເຟແຊຟຣອນ (Saffron Coffee), ກາເຟເມືອງຊຽງ (Meuang Xieng Coffee), ກາເຟປາກຊ່ອງ (Pakxong Coffee) ແລະ ກາເຟຈໍາປີ(Champee Coffee) ເປັນຕົ້ນ, ເຊິ່ງສ່ວນໃຫຍ່ເລີ່ມຕົ້ນເຮັດທຸລະກິດຫຼາຍກວ່າ 10 ປີ. ຜູ້ປະກອບການໃນກຸ່ມດັ່ງກ່າວສ່ວນໃຫຍ່ມີສ່ວນໃນການສ້າງຕັ້ງສະມາຄົມກາເຟລາວໃນປີ1994, ກຸ່ມຜູ້ສົ່ງອອກກາເຟໃນປີ2002 ຫຼື ກຸ່ມຜູ້ຜະລິດ ກາເຟໃນປີ2009; ທັງຍັງເປັນກຸ່ມທີ່ລິເລີ່ມເຮັດ Geographical Indications ເພື່ອສົ່ງເສີມພາບພົດ ຂອງກາເຟລາວ (ກາເຟບໍລິເວນ); ຈຶ່ງເຮັດໃຫ້ພວກເຂົາມີອິດທິພົນສູງໃນຂະແໜງກາເຟຂອງລາວ. ຜູ້ຜະລິດ ກາເຟທີ່ນອນຢູ່ໃນ Tier 3 ນີ້ມີລັກສະນະກວມເອົາ Tier 1 ຫຼືTier 2. ໝາຍຄວາມວ່າ ຜູ້ຜະລິດຂະໜາດໃຫຍ່ຊື້ຜົນຜະລິດທີ່ຍັງບໍ່ທັນແປຮູບຈາກຜູ້ຜະລິດຂະໜາດນ້ອຍ ແລະ ຂະໜາດກາງ ເພື່ອນໍາມາແປຮູບໃນຊື່ເຄື່ອງໝາຍການຄ້າຂອງຕົນເອງ. ພວກເຂົາມີການບໍລິຫານທີ່ເປັນລັກສະນະທຸລະກິດຫຼາຍກວ່າກຸ່ມອື່ນ, ທັງຍັງສາມາດປັບຕົວຕໍ່ກັບບັນຫາການຜັນຜວນຂອງລາຄາ ແລະ ມີເຕັກນິກການຜະລິດທີ່ດີກວ່າໝູ່ໃນທັງ 3 ຂັ້ນ. ແນ່ນອນວ່າຜູ້ຜະລິດຂະໜາດໃຫຍ່ໃນ Tier 3 ນີ້ສາມາດສະໜອງຜົນຜະລິດກາເຟເພື່ອຂາຍຕະຫຼາດພາຍໃນ ແລະ ສົ່ງອອກຕ່າງປະເທດຫຼາຍກວ່າ Tier 1 ແລະ Tier 2. ຄຽງຄູ່ກັນນັ້ນ, ກໍຍັງມີຮ້ານຄ້າ ແລະ ຮ້ານກາເຟເພື່ອຈໍາໜ່າຍສິນຄ້າຂອງຕົນເອງ ແລະ ຂະຫຍາຍຫຼາຍສາຂາອີກດ້ວຍ.

ຮູບສະແດງ 8: ການຈັດແບ່ງຂັ້ນຂອງຜູ້ຜະລິດກາເຟ ໃນສປປ ລາວ




ແຫຼ່ງຂໍ້ມູນ: ຜູ້ວິເຄາະ, ປີ 2021.

❖ ຜົນໄດ້ຮັບການຜະລິດຊາອິນຊີຢູ່ເມືອງປາກຊ່ອງ

ກຸ່ມຜະລິດກະສິກຳອິນຊີ ຊາວກະສິກອນເຂດໃຕ້ເມືອງປາກຊ່ອງ. ( ກຸ່ມຜູ້ຜະລິດການປູກຊາອິນຊີ) ເຫັນໄດ້ວ່າແມ່ນມີການຂະຫຍາຍຕົວຢ່າງໄວ ແລະ ກວ້າງຂວາງໂດຍສະເພາະການລິເລີ່ມການສ້າງກຸ່ມຊາອິນຊີໃນປີ 2008 ເຊິ່ງມີສະມາຊິກ 30 ຄອບຄົວ ເນື້ອທີ່ການຜະລິດ 25 ເຮັກຕາ, ຄາດຄະເນຜົນຜະລິດຕໍ່ເດືອນ 2.435 kg, ຜົນຜະລິດປະຈຳປີ 32 ໂຕນ ແລະ ສະມັດຕະພາບການຜະລິດ 52 ໂຕນ. ເຖິງຢ່າງໃດກໍ່ຕາມ, ການຂະຫຍາຍຕົວການປູກຊາອິນຊີເຫັນໄດ້ວ່າມີການເຕີບໂຕຫຼາຍໂດຍສະເພາະແມ່ນການເພີ່ມສະມາຊິກຄົວເຮືອນໃນການປູກ ຈາກ 2 ຄອບຄົວ ໃນປີ 2010 ມາເປັນ 6 ຄອບຄົວ ໃນປີ 2013 ແລະ ມາເປັນ 1 ຄອບຄົວໃນປີ 2015. (ລາຍລະອຽດຕາຕະລາງ).

ຕາຕະລາງ 7: ສະພາບການປູກຊາອິນຊີ ໃນເຂດພາກໃຕ້ລາວ (ເມືອງປາກຊ່ອງ, ແຂວງຈຳປາສັກ).

| ລ/ດ | ຈຳນວນສະມາຊິກ ປູກຊາອິນຊີ | ເນື້ອທີ່ການຜະລິດ (ຮຕ) | ຄາດຄະເນຜົນຜະລິດຕໍ່ເດືອນ (kg) | ຜົນຜະລິດ (ໂຕນ) | ສະມັດຕະພາບການຜະລິດ(ຕ/ຮຕ) |
|---|---|---|---|---|---|

| | | | | | |
|---|---|---|---|---|---|
| 1 | ຜູ້ປູກຊາອິນຊີ (ປີ 2008)<br>30 ຄອບຄົວ | 25,08 | 2,435 | 32,03 | 52,33 |
| 2 | ຜູ້ປູກຊາອິນຊີ (ປີ 2010)<br>2 ຄອບຄົວ | 0,91 | 83,34 | 1 | 2,21 |
| 3 | ຜູ້ປູກຊາອິນຊີ (ປີ 2013)<br>6 ຄອບຄົວ | 3,88 | 372 | 4,47 | 9,82 |
| 4 | ຜູ້ປູກຊາອິນຊີ (ປີ 2015)<br>1 ຄອບຄົວ | 0,57 | 80 | 0,96 | 1,1 |
| **ລວມທັງໝົດ 39 ຄອບຄົວ** | | **30,44** | **2971** | **38,46** | **65,46** |

ແຫຼ່ງຂໍ້ມູນ: ຜູ້ວິເຄາະ, 2021

ຈາກການສັງລວມຂໍ້ມູນເພື່ອວິເຄາະເຫັນໄດ້ວ່າເນື້ອທີ່ການປູກຊາໃນ ສປປ ລາວ ແມ່ນມີການເພີ່ມຂຶ້ນໂດຍສະເພາະແມ່ນ ແຂວຜົ້ງສາລີ ຈາກ 2,405 ຮຕ ໃນປີ 2018 ມາເປັນ 2,410 ຮຕ ໃນປີ 2019. ເຖິງຢ່າງໃດກໍ່ຕາມ, ແຂວງທີ່ຜະລິດຊາແມ່ນຍັງຄົງບໍ່ມີການປ່ຽນແປງທາງດ້ານເນື້ອທີ່ການຜະລິດຈາກປີ 2018 ຫາ 2019 ເປັນຕົ້ນ: ແຂວງຫລວງພະບາງແມ່ນ 785 ຮຕ, ຈຳປາສັກ 460 ຮຕ, ຫລວງນໍ້າທາ 350 ຮຕ, ຊຽງຂວາງ 290 ຮຕ, ຫົວພັນ 160 ຮຕ ແລະ ອຸດົມໄຊ 135 ຮຕ ຕາມລຳດັບ (ລາຍລະອຽດຕາຕະລາງ). ສຳລັບແຂວງຈຳປາສັກແມ່ນເຫັນໄດ້ວ່າເນື້ອທີ່ການປູກຊາແມ່ນມີການເພີ່ມໂດຍເລີ່ມແຕ່ປີ 2012 ຈາກ 285ຮຕ ມາເປັນ 460 ໃນປີ 2019

ຕາຕະລາງ 8: ເນື້ອທີ່ການປູກຊາທົ່ວປະເທດແຕ່ປີ 2012-2019

| ລ/ດ | ແຂວງ | 2012 | 2013 | 2014 | 2015 | 2016 | 2017 | 2018 | 2019 |
|---|---|---|---|---|---|---|---|---|---|
| 1 | ຜົ້ງສາລີ | 2,650 | 2,655 | 3,230 | 3,235 | 2,810 | 2,370 | 2,405 | 2,410 |
| 2 | ຫຼວງພະບາງ | 125 | 675 | 710 | 785 | 785 | 785 | 785 | 785 |
| 3 | ຈຳປາສັກ | 285 | 285 | 460 | 460 | 460 | 460 | 460 | 460 |
| 4 | ຫຼວງນໍ້າທາ | _ | _ | _ | _ | _ | 30 | 350 | 350 |
| 5 | ຊຽງຂວາງ | _ | _ | 120 | 135 | 290 | 290 | 290 | 290 |
| 6 | ຫົວພັນ | 30 | 45 | 65 | 80 | 110 | 160 | 160 | 160 |
| 7 | ອຸດົມໄຊ | 305 | 215 | 385 | 445 | 60 | 60 | 135 | 135 |
| 8 | ໄຊຍະບູລີ | _ | | _ | _ | _ | _ | _ | _ |
| 9 | ນຄ.ວຽງຈັນ | _ | _ | _ | _ | _ | _ | _ | _ |
| 10 | ບໍ່ແກ້ວ | _ | _ | _ | _ | _ | _ | _ | _ |
| 11 | ວຽງຈັນ | _ | _ | _ | _ | _ | _ | _ | _ |
| 12 | ບໍລິຄຳໄຊ | _ | _ | _ | _ | _ | _ | _ | _ |
| 13 | ຄຳມ່ວນ | _ | _ | _ | _ | _ | _ | _ | _ |
| 14 | ສະຫວັນນະເຂດ | _ | _ | _ | _ | _ | _ | _ | _ |
| 15 | ໄຊສົມບູນ | _ | _ | _ | _ | _ | _ | _ | _ |
| 16 | ສາລະວັນ | _ | _ | _ | _ | _ | _ | _ | _ |
| 17 | ເຊກອງ | _ | _ | _ | _ | _ | _ | _ | _ |
| 18 | ອັດຕະປື | _ | _ | _ | _ | _ | _ | _ | _ |

ແຫຼ່ງຂໍ້ມູນ: ຜູ້ວິເຄາະ, ສະຖິຕິປະຈໍາປີຂອງສູນສະຖິຕິແຫ່ງຊາດແຕ່ປີ 2012-2019.
ໝາຍເຫດ: ສີເຫລືອງ ແມ່ນເນື້ອທີ່ມີການເພີ່ມຂຶ້ນ ແລະ ສີສົ້ມເນື້ອທີ່ຄືເກົ່າ

ສໍາລັບການຈັດຕັ້ງປະຕິບັດຂອງກຸ່ມປູກຊາອິນຊີ ໂດຍສະເພາະການມີສ່ວນຮ່ວມຂອງພາກລັດ, ຊາວກະສິກອນ, ທະນາຄານ ແລະ ຜູ້ເກັບຊື້ເພື່ອສົ່ງອອກ ໄດ້ມີກົນໄກຕ່ອງໂສ້ການຜະລິດໃນການສົ່ງອອກທີ່ດີ ແລະ ການຮ່ວມມືຂອງພາກລັດຂັ້ນສູນກາງ, ແຂວງ, ເມືອງ ແລະ ບໍລິສັດທີ່ສົ່ງອອກໄດ້ເຂົ້າມາເອົາໃຈໃສ່ໃນການກວດກາເບິ່ງຄຸນນະພາບ ຕັ້ງແຕ່ຂັ້ນເລີ່ມຕົ້ນເກັບກ່ຽວ, ຕາກ, ຂົ້ວ ແລະ ເຂົ້າໂຮງອົບ ຕະຫຼອດຮອດການ ຫຸ້ມຫໍ່ເປັນຜະລິດຕະພັນ (ລາຍລະອຽດຮູບສະແດງ).

ຮູບສະແດງ 9: ມູນຄ່າຕ່ອງໂສ້ການປູກຊາອິນຊີຢູ່ເມືອງປາກຊ່ອງ, ແຂວງຈໍາປາສັກ




ແຫຼ່ງຂໍ້ມູນ: ຜູ້ວິເຄາະ, 2021

❖ ຜົນໄດ້ຮັບການຜະລິດການປູກຜັກປອດສານພິດ

ກຸ່ມການຜະລິດຜັກອິນຊີບ້ານນໍ້າແງ່ນແມ່ນລິເລີ່ມແຕ່ປີ 2017 ມີໂຄງການກະສິກຳອິນຊີເຂົ້າມາເມືອງຫຼວງນໍ້າທາກ່ອນໝູ່ ແມ່ນໂຄງການຈາກຕ່າງປະເທດ ( SEADA ) ເປັນໂຄງການໜຶ່ງໄດ້ສົ່ງເສີມກະສິກຳແບບຍືນຍົງເພື່ອຄໍ້າປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ ແລະໄດ້ມີການຮ່ວມມືກັບຫ້ອງການສິກຳ-ປ່າໄມ້ເມືອງ, ຫ້ອງການຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ ເມືອງ ແລະ ແຂວງຫຼວງນໍ້າທາ ພາຍໃຕ້ການຊີ້ນຳຂອງບັນດາພະແນກ ແລະຂະແໜງການທີ່ກ່ຽວຂ້ອງເຊັ່ນ: ຫ້ອງວ່າການປົກຄອງເມືອງຫຼວງນໍ້າທາ, ພະແນກກະສິກຳປ່າ-ໄມ້ແຂວງ ແລະຂະແໜງການອື່ນໆ ໂດຍຮັບການສະໜັບສະໜູນທຶນຊ່ວຍເຫຼືອລ້າຈາກອົງການຟາດສະເທີນອອບເຟີ (Fastenofer) ປະເທດສະວິດເຊີແລນ ແລະ ແລະອົງການມິຊີລີອໍ ( MISEREOR ) ຂອງປະເທດເຢລະມັນ ຈຸດປະສົງຂອງໂຄງການແມ່ນເພື່ອປັບປຸງຊີວິດການເປັນຂອງຊຸມຊົນພາຍໃນເມືອງຫຼວງນໍ້າທາ ໃນນັ້ນກຸ່ມບ້ານນໍ້າແງ່ນກໍ່ຢູ່ໃນເປົ້າໝາຍການສົ່ງເສີມການຜະລິດຜັກອິນຊີແບບຍືນຍົງເພື່ອຄໍ້າປະກັນສະບຽງອາຫານແລະໂພຊະນາການ ແລະເປັນກຸ່ມບ້ານທີ່ມີທ່າແຮງການຜະລິດປູກຜັກອິນຊີສົ່ງຂາຍພາຍໃນແລະຕ່າງປະເທດ.

ເຖິງຢ່າງໃດກໍ່ຕາມ, ໄລຍະເລີ່ມຕົ້ນໃນການສ້າງກຸ້ມຜະລິດຜັກປອດສານພິດ ແມ່ນກະສິກຳເມືອງເປັນຜູ້ນຳພາແຕ່ລະບ້ານ, ມີທັງໝົດ 4 ໝູ່ບ້ານ, ໃນນັ້ນມີທັງໝົດ 400 ຄົວເຮືອນ ແລະເລີ່ມແຕ່ຄັ້ງທຳອິດມີຄອບຄົວທີ່ສະໝັກເຂົ້າກຸ່ມຈຳນວນ 20 ກວ່າຄອບຄົວ, ມີ 4 ກຸ່ມໃຫຍ່ໆ ກຸ່ມລະ 5 ຄອບຄົວ ແລະມີເນື້ອທີ່ຄອບຄົວປະມານ 3.000 ຕາແມັດຂອງເນື້ອທີ່ປູກ. ສ່ວນໃຫຍ່ພວກເຂົາແມ່ນປູກເຂົ້າ ແລະຢາງພາລາເປັນຫຼັກ. ເຖິງຢ່າງໃດກໍ່ຕາມ, ການປະກອບສ່ວນທີ່ເປັນລາຍຮັບໃຫ້ຄົວເຮືອນເຂົາເຈົ້າກໍ່ແມ່ນການປູກຜັກກະສິກຳອິນຊີເປັນຕົ້ນແມ່ນການປູກຜັກບົ່ວເພື່ອຂາຍ ເຊິ່ງເປັນລາຍຮັບທີ່ໄດ້ລາຄາດີ ພາຍໃນ 1 ປີ ສາມາດສ້າງລາຍຮັບ 30 ກວ່າລ້ານ/ຄອບຄົວ. ຕໍ່ກັບຜົນຕອບຮັບທີ່ດີ ຈາກການສຳພາດກຸ່ມຜູ້ຜະລິດ ສະແດງໃຫ້ເຫັນວ່າ ຜົນຜະລິດຈາກການການປູກຜັກບົ່ວແມ່ນຈະໄດ້ຮັບຜົນດີຫຼາຍກວ່າ ປູກພັກປອດສານຜິດຊະນິດອື່ນ ຫຼັງຈາກປູກໄດ້ 25 ມື້ ກໍ່ເລີ່ມເກັບໃບໄປຂາຍ, ເກັບຄັ້ງຕໍ່ໄປແມ່ນ 5 ມື້ຈະເກັບເທື່ອໜຶ່ງ ແລະ ເກັບໄປຈົນຮອດ 2 ເດືອນ, ສຳລັບການປູກຜັກປອດສານພິດແລ້ວປີໜຶ່ງແມ່ນປູກໄດ້ 6 ຊຸດ ແລະ ລາຄາຂອງຜັກບົ່ວທີ່ມີລາຄາສູງແມ່ນຢູ່ໃນຊ່ວງເດືອນ 7 ແມ່ນຖືກ 18.000 – 25.000/kg.

### 4.1.2 ຕະຫຼາດການຜະລິດກະສິກຳອິນຊີເພື່ອສົ່ງອອກພາຍໃນ ແລະ ຕ່າງປະເທດ

**ການຜະລິດກາເຟ**: ອີງຕາມການລາຍງານຂອງອົງການອາຫານ ແລະ ການກະເສດ (FAO) ໃນປີ 2019, ກາເຟແມ່ນພືດ ເສດຖະກິດໜຶ່ງທີ່ມີເນື້ອທີ່ການຜະລິດເທົ່າກັບ 80,890 ເຮັກຕາ, ຮອງຈາກເນື້ອທີ່ປູກເຂົ້າ (956.134 ເຮັກຕາ), ສາລີ (207.190 ເຮັກຕາ) ແລະ ພືດຜັກຕ່າງໆ (170.150 ເຮັກຕາ). ກໍເຫັນໄດ້ວ່າຜົນຜະລິດກາເຟຢູ່ ສປປ ລາວເພີ່ມຂຶ້ນ 5 ເທົ່າ ໃນປີ2016 ທຽບກັບ ປີ 2000. ໃນເມື່ອກ່ອນ, ການປູກກາເຟມີຫຼາຍສົມຄວນຢູ່ເຂດພູພຽງບໍລະເວນ (ກວມເອົາບັນດາ 4 ແຂວງທາງ ພາກໃຕ້ຂອງລາວ) ເນື່ອງຈາກຄວາມອຸດົມສົມບູນຂອງດິນພູເຂົາໄຟ ແລະອາກາດເຢັນຕະຫຼອດປີ, ເຊິ່ງໃຫ້ຜົນ ຜະລິດເກືອບທັງໝົດຂອງລາວ. ຍົກຕົວຢ່າງ, ກຸ່ມການຜະລິດກາເຟທີ່ມີຊື່ສຽງທີ່ສຸດໃນເຂດນີ້ແມ່ນ ກຸ່ມຜູ້ຜະລິດ ກາເຟພູພຽງບໍລະເວນ (Bolaven Plateua Coffee Producers Cooperative: CPC)[13] , ເຊິ່ງໄດ້ຮັບການ ສະໜັບສະໜູນທາງດ້ານເຕັກນິກ, ແນວພັນ, ແລະ ການບໍລິຫານຈາກນັກລົງທຶນຝຣັ່ງໃນໄລຍະສ້າງຕັ້ງກຸ່ມ. ກຸ່ມ CPC ກວມເອົາຜູ້ຜະລິດຂະໜາດນ້ອຍຈຳນວນ 1.855 ຄົວເຮືອນ, ຈາກ 55 ບ້ານ (55 ກຸ່ມການຜະລິດ) ໃນ 3 ເມືອງ (ປາກຊ່ອງ, ເລົ່າງາມ ແລະ ທ່າແຕງ) ໃນແຂວງຈຳປາສັກ, ສາລະວັນ ແລະ ເຊກອງ ຕາມລຳ

[13] ສາມາດເບິ່ງລາຍລະອຽດຂອງກຸ່ມການຜະລິດດັ່ງກ່າວໃນ http://www.cpc-laos.org

ດົບ. ນອກຈາກນັ້ນ, ກໍຍັງມີສະຫະກອນຊາວສວນ ໃຈກາເຟ (Jhai Coffee Farmers Cooperative)[14] ເຊິ່ງເປັນສະຫະກອນກຸ່ມຜູ້ຜະລິດກາເຟຢູ່ ປາກຊ່ອງ, ແຂວງຈໍາປາສັກ.

**<u>ການຜະລິດຊາອິນຊີ:</u>** ພໍ່ຄ້າຄົນກາງ ແລະ ພໍ່ຄ້າຄົນລາວເກືອບທັງໝົດແມ່ນມີກິດຈະກໍາການຄ້າ ແລະ ລາຍຮັບອື່ນທີ່ຄ່ຽງຄູ່ກັບການຄ້າຂາຍເສລີ. ດັ່ງນັ້ນ ເຂົາເຈົ້າຈຶ່ງເອື່ອຍອີງໃສ່ການປູກຊາອິນຊີກວ່າຊາວກະສິກອນ (ເຊິ່ງເປັນຜູ້ທີ່ມີລາຍຮັບຕໍ່າສຸດ) ແຕ່ເຂົາເຈົ້າຍັງໄດ້ຮັບຜົນກະທົບໜ້ອຍກວ່າຈາກການປ່ຽນແປງຂອງຕະຫຼາດ. ເຖິງຢ່າງໃດກໍ່ຕາມ, ຈາກການເກັບກໍາຂໍ້ມູນໂດຍການສໍາພາດກຸ່ມຜູ້ຜະລິດຊາອິນຊີຢູ່ເມືອງປາກຊ່ອງ, ແຂວງຈໍາປາສັກເຫັນໄດ້ວ່າລາຍຮັບຂອງເຂົາເຈົ້າມີການ ເພິ່ງພິງອີງໃສ່ການເກັບກ່ຽວຕາມແຕ່ລະດູ ແລະ ຖ້າປະເມີນເບິ່ງທາງດ້ານລາຍຮັບແມ່ນໄດ້ຮັບຜົນດີ. ຈາກການສໍາພາດຍັງເຫັນໄດ້ວ່າລາຍຮັບໃນປີ 2020 ຈາກການປູກຊາອິນຊີໃນເຂດເມືອງປາກຊ່ອງ ສໍາລັບຊາດິບແມ່ນ1 ກິໂລ 6.000 ກີບ ແລະ ຊາສໍາເລັດຮູບແມ່ນ 1ກິໂລ 66.000 ກີບໃນລະດູຮ້ອນ, ສ່ວນລະດູຝົນເຫັນວ່າລາຄາແມ່ນມີການຫຼຸດລົງເລັກໜ້ອຍ ສໍາລັບຊາດິບແມ່ນ 1 ກິໂລ 4.000 ກີບ ແລະ ຊາສໍາເລັດຮູບແມ່ນ 1 ກິໂລ 45.000 ກີບ. ພ້ອມກັນນັ້ນ, ເຫັນໄດ້ວ່າການສົ່ງອອກຜະລິດຕະພັນຊາອິນຊີຂອງເມືອງປາກຊ່ອງແມ່ນມີຕະຫຼາດສົ່ງອອກໄປ ຝຣັ່ງ,ເນປານ ,ບຣາຊິນ ແລະໄທ.

**<u>ການຜະລິດຜັກປອດສານພິດ:</u>** ການຈັດສັນຕະຫຼາດຜັກອິນຊີແມ່ນພະແນກອຸດສະກໍາ ແລະ ການຄ້າໄດ້ຮ່ວມກັບພະແນກກະສິກໍາ-ປ່າໄມ້ເພື່ອເປັນເຈົ້າການສົ່ງເສີມການສັນຫາອຸປະກອນເຄື່ອງມື; ຈັດສັນຫາຕະຫຼາດເພື່ອຮອງຮັບຜົນຜະລິດ, ມີການແຍກຕະຫຼາດສະເພາະຜັກອິນຊີ ແລະຜັກທົ່ວໄປ ໂດຍມີການທຽບລາຄາກັນແລ້ວເຫັນວ່າມີຄວາມແຕກຕ່າງກັນພໍສົມຄວນ ຜັກບົ່ວອິນຊີແມ່ນ ລາຄາ 15.000ກີບ/1ກິໂລ, ຜັກບົ່ວທົ່ວໄປ ລາຄາ ແມ່ນ 7.000 /1ກິໂລ ຄວາມຕ້ອງການຂອງຕະຫຼາດແມ່ນມີຄວາມຕ້ອງການຜັກບົ່ວອິນຊີຫຼາຍກວ່າຜັກບົ່ວທົ່ວໄປເຫັນໄດ້ວ່າການສົ່ງອອກຂາຍພາຍໃນຍັງບໍ່ທັນພຽງພໍ ແລະ ຍັງຂາດຕະຫຼາດ, ເຖິງຢ່າງໃດກໍ່ຕາມ, ການສະໜອງອຸປະກອນວາງຂາຍກໍ່ຍັງບໍ່ທັນພຽງພໍຮອງຮັບຜົນຜະລິດ. ເຊິ່ງຜົນຜະລິດແມ່ນຂຶ້ນກັບເນື້ອທີ່ຂອງການປູກ ເຊິ່ງມີການປູກຫຼາຍຜົນຜະລິດກໍ່ໄດ້ຫຼາຍ ທາງຂະແໜງກະສິກໍາຂອງແຂວງແມ່ນໄດ້ສະເໜີຕໍ່ຜູ້ຮັບຜິດຊອບດ້ານກະສິກໍາອິນຊີໃນການສົ່ງອອກຂາຍໃຫ້ຈີນແຕ່ຂໍ້ຫຍຸ້ງຍາກໃນການພົບພໍ້ແມ່ນການຜະລິດຍັງມີຄວາມຊັກຊ້າ ເຊິ່ງເຮັດໃຫ້ການສົ່ງອອກບໍ່ພຽງພໍ, ເພາະເຫດນັ້ນການສົ່ງອອກຫອມບົ່ວແມ່ນຕົກຢູ່ 300-400 ກິໂລ/ມື້. ຕໍ່ກັບການຜະລິດດັ່ງກ່າວ, ຄວາມສາມາດໃນການສົ່ງອອກຂາຍຕະຫຼາດພາຍໃນ ນັ້ນແມ່ນ ບ້ານນາເຕີຍ ແລະ ບໍ່ເຕັນ(ເຂດເສດຖະກິດພິເສດ); ນອກຈາກນັ້ນ, ຍັງໄດ້ມີການແບ່ງສ່ວນການປູກ ເປັນຕົ້ນ: ບ້ານນໍ້າບຽດແມ່ນຈະປູກຫອມບົ່ວ, ບ້ານປ່າສັກຕ້ອງປູກຜັກກາດດອກ, ຜັກກາດຫໍ່ ແລະ ບ້ານນໍ້າທຸ່ງແມ່ນປູກກະລໍ່າປີ ຄາດຄະເນວ່າມື້ 1 ຕ້ອງປູກໄດ້ 500 ກິໂລກຼາມ ເຮັດໃຫ້ປັດໄຈການຜະລິດເປັນໄດ້ຕາມຄວາມຕ້ອງການ.

### 4.1.3 ການວິເຄາະການຜະລິດທຸລະກິດກະສິກໍາອິນຊີ ແລະ ການປ່ຽນແປງດິນຟ້າອາກາດ

- ການວິເຄາະກົນໄກທຸລະກິດກະສິກໍາອິນຊີ ແບບ TOWS matrix

ຈາກການສໍາພາດກຸ່ມຜູ້ຜະລິດຢູ່ແຂວງສາລາວັນ, ຈໍາປາສັກ ແລະ ຫຼວງນໍ້າທາ ສາມາດວິເຄາະ ເບິ່ງກົນການຜະລິດເຂົາເຈົ້າ ໂດຍການເຮັດເປັນກຸ່ມສົນທະນາ (Goup Discussion) ຕ່າງໜ້າແຕ່ລະກຸ່ມ ເຂົາເຈົ້າມີກົນໄກການຈັດຕັ້ງປະຕິບັດທີ່ເປັນລະບົບທີ່ດີ. ເຖິງຢ່າງໃດກໍ່ຕາມ, ເພື່ອໃຫ້ການວິເຄາະກ່ຽວກັບການຜະລິດກະສິກໍາອິນຊີໃຫ້ໄດ້ຮັບຄຸນນະພາບຢ່າງມີປະສິດທິຜົນ ທີມງານການຄົ້ນຄວ້າໄດ້ວິເຄາະກ່ຽວກັບການສ້າງກົນໄກຂອງການເຮັດທຸລະກິດກະສິກໍາອິນຊີໂດຍໃຊ້ເຄື່ອງມື TOWS matrix ແມ່ນຄ້າຍຄືກັນກັບການວິເຄາະ SWOT analysis ຫຼື ຈຸດແຂງ, ຈຸດອ່ອນ, ໂອກາດ ແລະ ອຸປະສັກ ມາໃຊ້ໃນການວາງແຜນເພື່ອພັດທະນາການເຮັດທຸລະກິດກະສິກໍາອິນຊີໃນ ສປປ ລາວ ໂດຍ

---

[14] ສາມາດເບິ່ງລາຍລະອຽດຂອງກຸ່ມການຜະລິດດັ່ງກ່າວໃນ https://jingjhai.coffee

ການນຳໃຊ້ຂໍ້ມູນຈາກການລົງສຳພາດກຸ່ມຜູ້ຜະລິດທີ່ຢູ່ຂັ້ນບ້ານ ແລະ ສະມາຄົມການຜະລິດທີ່ຢູ່ຂັ້ນເມືອງເຊິ່ງມັນສະແດງຜົນຂອງການວິເຄາະໄດ້ດັ່ງນີ້:

ຮູບສະແດງ 10: ການວິເຄາະກົນໄກທຸລະກິດກະສິກຳອິນຊີ

**ກາລະໂອກາດ(Opportunities)**

O1: ຜູ້ບໍລິໂພກຫັນມາເອົາໃຈໃສ່ສຸຂະພາບ
O2: ມູນຄ່າຕະຫຼາດອາຫານ OA ຂອງລາວມີການຂະຫຍາຍຕົວ
O3: ຜູ້ບໍລິໂພກມີການຮັບປະທານສິນຄ້າກະສິກຳປອດສານພິດຫຼາຍຂຶ້ນ
O4: ຜູ້ບໍລິໂພກເຂົ້າເຖິງການໂຄສະນາທາງອອນລາຍຫຼາຍຂຶ້ນ
O5: ເທັກໂນໂລຢີດ້ານກະສິກຳມີການພັດທະນາຂຶ້ນ
O6: ລັດຖະບານໄດ້ມີການອອກນະໂຍບາຍຕ່າງໆເພື່ອສະໜັບສະໜູນ ແລະ ສົ່ງເສີມການຜະລິດກະສິກຳອິນຊີ ລວມເຖິງຜູ້ປະກອບການ SMEs

**ອຸປະສັກ (Threats)**

T1: ຜູ້ຜະລິດທີ່ສາມາດເຂົ້າຫາຕະຫຼາດມີຫຼາຍຂັ້ນຕອນ
T2: ສິນຄ້າທີ່ເຂົ້າມາທົດແທນຍັງມີຈຳກັດ
T3: ຜູ້ບໍລິໂພກຍັງຂາດຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບສິນຄ້າກະສິກຳອິນຊີ

**ຈຸດແຂງ (Strengths)**

S1: ມີການຂົນສົ່ງທີ່ສະດວກສະບາຍ
S2:ມີການຮັກສາຄຸນະພາບຂອງສິນຄ້າກະສິກຳປອດສານພິດຢ່າງງ່າຍດາຍ
S3: ມີສິນຄ້າກະສິກຳອິນຊີແບບ Signature

**ກົນໄກທາງກົງ (S,O)**

S2, O5: ນຳໃຊ້ເທັກໂນໂລຢີດ້ານກະສິກຳເຂົ້າມາຊ່ວຍໃນການຜະລິດກະສິກຳອິນຊີ
S1,O1,O2,O3 :ມີການຂົນສົ່ງ ແລະ ການສົ່ງຈອງສິນຄ້າປອດສານພິດພາຍໃນມື້ດຽວ
S1,O4: ຈັດກິດຈະກຳສົ່ງເສີມການຂາຍເພື່ອໃຫ້ຜູ້ບໍລິໂພກຮູ້ຈັກກາໝາຍສິນຄ້າກະສິກຳອິນຊີ

**ກົນໄກທາງຄຸນະພາບ (S,O)**

S1, S3, T1: ມີການຂົນສົ່ງທີ່ວ່ອງໄວ ແລະ ສິນຄ້າກະສິກຳອິນຊີແບບ Signature ເພື່ອໃຫ້ຜູ້ບໍລິໂພກມີຄວາມເຊື່ອໃຈ.
S1, T2: ມີການເບິ່ງແຍ່ງ ແລະ ນຳໃຊ້ເທັກໂນໂລຢີເຂົ້າມາຊ່ວຍເພື່ອຫຼຸດຜ່ອນການຜະລິດເພື່ອເຮັດໃຫ້ລາຄາສິນຄ້າກະສິກຳອິນຊີຫຼຸດລົງ.

**ຈຸດອ່ອນ (Weaknesses)**

W1: ກາໝາຍສິນຄ້າກະສິກຳອິນຊີຍັງບໍ່ເປັນທີ່ຮູ້ຈັກ

**ກົນໄກໃນການແກ້ໄຂ(W,O)**

W1,O4: ໃຊ້ຊ່ອງທາງອອນລາຍໃນການຈັດກິດຈະກຳເພື່ອສົ່ງເສີມການຕະຫຼາດເປັນຕົ້ນ: Facebook, Instagram, Line ແລະ ອື່ນໆ.

**ກົນໄກໃນການພັດທະນາ(W,O)**

W3,T3: ໃຫ້ຄວາມຮູ້ດ້ານສຸຂະພາບ ແລະ ສິນຄ້າກະສິກຳອິນຊີຜ່ານຊ່ອງທາງອອນລາຍຕ່າງໆ..

ແຫຼ່ງຂໍ້ມູນ: ຜູ້ວິເຄາະ, 2021.

### ❖ ຜົນການວິເຄາະຜົນກະທົບການປ່ຽນແປງດິນຟ້າອາກາດຢູ່ແຂວງ ຫຼວງນ້ຳທາ, ສາລາວັນ ແລະ ຈຳປາສັກ.

ການປ່ຽນແປງຂອງດິນຟ້າອາກາດແມ່ນບັນຫາທີ່ທົ່ວໂລກໃຫ້ຄວາມສຳຄັນ. ອີງຕາມການຮວບຮວມຂໍ້ມູນ ຂອງອົງການນາຊາ (NASA)[15] ຈາກຫຼາຍຜົນການຄົ້ນຄວ້າທີ່ສຳຄັນໃນໂລກເຊັ່ນ: Met Office Hedley Centre/Climatic Research Unit, NOAA National Climatic Data Center, Japanese Meteorology Agency, Berkeley Earth ແລະ NASA Goddard Institute for Space Studies ໄດ້ໃຫ້ຮູ້ວ່າ ອຸນຫະພູມໂລກເພີ່ມສູງຂຶ້ນທຸກໆປີ (ພາວະໂລກຮ້ອນ). ການເພີ່ມສູງຂຶ້ນຂອງອຸນຫະພູມໂລກທີ່ໄວວາໃນສັດຕະວັດທີ່ຜ່ານມາ ສົ່ງຜົນໃຫ້ນ້ຳກ້ອນໃນຂົ້ວໂລກເປື່ອຍ, ການປ່ຽນແປງດິນຟ້າອາກາດ (Climate Change) ສົ່ງຜົນກະທົບຕໍ່ລະບົບນິເວດທີ່ຖືກເສຍຫາຍ, ສັດປ່າບາງປະເພດສູນພັນ, ເກີດພະຍາດລະບາດ, ໄພທຳມະຊາດ (ລົມພາຍຸ, ນ້ຳຖ້ວມ, ແຫ້ງແລ້ງ,....), ການເຮັດໃຫ້ກະສິກຳບໍ່ໄດ້ຮັບຜົນດີ, ໄພອຶດຫິວຕະຫຼອດຮອດການດຳລົງຊີວິດຂອງມະນຸດ.

ສຳລັບ ສປປ ລາວ ໄລຍະ 5 ປີຜ່ານມາ(2016-2020) ທົ່ວປະເທດມີເຫດການເກີດໄພພິບັດທີ່ສ້າງຜົນເສຍຫາຍໃຫ້ຂະແໜງການຕ່າງໆຂອງສັງຄົມ ເກີດຂຶ້ນທັງໝົດ 235 ຄັ້ງ ໃນນັ້ນ ສົ່ງຜົນກະທົບໂດຍກົງຕໍ່ປະຊາຊົນ 1.860.165 ຄົນ ເສຍຊີວິດ 121 ຄົນ ສູນຫາຍ 45 ຄົນ ສ້າງຄວາມເສຍຫາຍຕໍ່ຂະແໜງສັງຄົມ ເຊັ່ນ: ທີ່ຢູ່ອາໃສ, ການສຶກສາ, ສາທາລະນະສຸກ ແລະ ໂພຊະນາການ, ວັດທະນາທຳ, ການຜະລິດກະສິກຳ, ອຸດສາຫະກຳ, ການຄ້າ, ການທ່ອງທ່ຽວ, ໂຄ່ງລາງພື້ນຖານ, ຂົນສົ່ງ, ໄຟຟ້າ, ແລະ ສຸຂະພິບານ ແລະ ສະພາບທາງນ້ຳ ເຊິ່ງຄິດໄລ່ເປັນມູນຄ່າເສຍຫາຍປະມານ 5.538,24 ຕື້ກີບ ອັນພົ້ນເດັ່ນແມ່ນໄພພິບັດນ້ຳຖ້ວມທີ່ເກີດຈາກພາຍຸຊັນຕິນ ແລະ ຄູກັນນ້ຳເຂື່ອນໄຟຟ້າເຊປ່ຽນ-ເຊນໍ້ນ້ອຍແຕກຢູ່ແຂວງອັດຕະປືໃນປີ 2018 ແລະ ໄພນ້ຳຖ້ວມໃນປີ 2019 ໄດ້ສົ່ງຜົນກະທົບຕໍ່ກັບການພັດທະນາຢ່າງຫຼວງຫຼາຍ ໃນນີ້ ສະເພາະແຕ່ປີ 2018 ມີມູນຄ່າຄວາມເສຍຫາຍລວມຈາກໄພນ້ຳຖ້ວມ ປະມານ 3.166,9 ຕື້ກີບ ຫຼືປະມານ 2,1% ຂອງການຄາດຄະເນລວມຍອດຜະລິດຕະພັນພາຍໃນ (GDP) (FAO, 2020). ນອກຈາກນັ້ນ, ຍັງເກີດການລະບາດຂອງພະຍາດສັດ ແລະ ສັດຕູພືດຢູ່ຫຼາຍແຂວງ ເປັນຕົ້ນ ການລະບາດຂອງພະຍາດອະຫິວາໝູອາຟຣິກາປີ 2019 ໄດ້ສ້າງຄວາມເສຍຫາຍຕໍ່ການຜະລິດ ແລະ ຊັບສິນຂອງປະຊາຊົນຫຼາຍສົມຄວນ ແລະ ບັນຫາຜົນກະທົບຈາກການລະບາດຂອງພະຍາດ COVID-19 .

ອີງຕາມຂໍ້ມູນສະແດງໃຫ້ເຫັນໃນຮູບສະແດງ 1 ແລະ 2 ໂດຍການບັນທຶກຂອງສະຖານີອຸຕຸນິຍົມ ແລະ ອຸທົກກະສາດປະຈຳແຂວງຫຼວງນ້ຳທາ (ສະຖານີຫຼວງນ້ຳທາ), ສາລາວັນ (ສະຖານີສາລາວັນ), ແລະ ຈຳປາສັກ (ສະຖານີປາກເຊ) ເຊິ່ງອາດມີການຄາດເຄື່ອນ ເລັກໜ້ອຍຈາກການປະກົດຕົວຈິງຢູ່ເຂດປູກກາເຟ, ປູກຜັກປອດສານພິດ ໄດ້ລົງສຳຫຼວດໃນເບື້ອງຕົ້ນ, ໂດຍສະເພາະແມ່ນປາກຊ່ອງທີ່ມີອຸນຫະພູມຕົວຈິງອາດເປັນກວ່າເມືອງປາກຊ່ອງ ແລະ ມີອາກາດໜາວຢູ່ແຂວງຫຼວງນ້ຳທາ. ພ້ອມກັນນັ້ນ, ຈຳນວນຂໍ້ມູນຍັງມີໜ້ອຍ 3-4ປີເທົ່ານັ້ນ, ຈຶ່ງເຮັດໃຫ້ຄຳນວນຫາການປ່ຽນແປງອາດບໍ່ຊັດເຈນເທົ່າທີ່ຄວນ.

---

15 ແຫຼ່ງຂໍ້ມູນ: https://climate.nasa.gov

ຮູບສະແດງ 11: ການປ່ຽນແປງອຸນຫະພູມຢູ່ແຂວງຫຼວງນໍ້າທາ, ສາລາວັນ, ຈຳປາສັກ (Anomaly)




ແຫຼ່ງຂໍ້ມູນ: ຜູ້ວິເຄາະ 2021, ກົມອຸຕຸນິຍົມ ແລະ ອຸທົກກະສາດ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ຮູບສະແດງ 12: ປະລິມານນໍ້າຝົນຢູ່ແຂວງ ຫລວງນໍ້າທາ, ສາລາວັນ ແລະ ຈຳປາສັກ




ແຫຼ່ງຂໍ້ມູນ: ຜູ້ວິເຄາະ 2021, ກົມອຸຕຸນິຍົມ ແລະ ອຸທົກກະສາດ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ນອກຈາກນັ້ນ, ເມື່ອພິຈາລະນາຮູບທີ12 ຈະເຫັນໄດ້ວ່າມີການປ່ຽນແປງປະລິມານນໍ້າຝົນຢູ່ທັງສາມແຂວງ. ປະລິມານນໍ້າຝົນສະເລ່ຍໃນລະຫວ່າງປີ 2016-2019 ຢູ່ແຂວງຫຼວງນໍ້າທາແມ່ນປະມານ 679 mm ເຊິ່ງໜ້ອຍກວ່າ ແຂວງຈຳປາສັກ ( 2.203 mm) ແລະ ແຂວງສາລາວັນ (2,516 mm). ແຕ່ພິເສດແມ່ນປີ 2018 ເປັນປີທີ່ຝົນຕົກໜັກຫຼາຍເນື່ອງຈາດອິດທິພົນຂອງລົມພາຍຸ (ມັງຄຸດ) ປະມານ 2.487 mm ເຊິ່ງເພີ່ມຂຶ້ນເກືອບ 2 ທົບຈາກປີ 2017 ປະລິມານນໍ້າຝົນສະເລ່ຍພຽງແຕ່ 1.355 mm. ສິ່ງດັ່ງກ່າວໄດ້ສະແດງໃຫ້ເຫັນ ການປ່ຽນແປງດິນຟ້າອາກາດ (Climate Change) ສົ່ງຜົນກະທົບຕໍ່ການປ່ຽນແປງຂອງປະລິມານນໍ້າຝົນ ເຮັດໃຫ້ຝົນຕົກບໍ່ຖືກຕ້ອງຕາມລະດູການ ແລະ ເຂດທີ່ເຄີຍດົນດຳນໍ້າຊຸ່ມກໍ່ອາດເກີດແຫ້ງແລ້ງ ຫຼື ເກີດນໍ້າຖ້ວມ, ພ້ອມດຽວກັນນັ້ນກໍ່ຍັງມີປະກົດການອຸນຫະພູມ

ມີການປ່ຽນແປງ, ກາເຟ, ຊາ, ແລະ ຜັກປອດສານພິດ ໄດ້ຜົນຜະລິດໜ້ອຍ ແລະ ຍິ່ງກະຕຸ້ນໃຫ້ບັນດາຜູ້ຜະລິດກະສິກຳ ເລືອກທີ່ຈະໃຊ້ປຸ໋ຍເຄມີ ແລະ ສານເຄມີເພື່ອປາບສັດຕູພືດ ແລະ ເລັ່ງຜົນຜະລິດຫຼາຍຂຶ້ນ. ວິທີການຜະລິດດັ່ງກ່າວ ນອກຈາກທຳລາຍສະພາບແວດລ້ອມ ກໍ່ຄືດິນ ແລະ ແຫຼ່ງນໍ້າແລ້ວ ຍັງເປັນແນວທາງທີ່ບໍ່ຍືນຍົງອີກດວ້ຍ.

## 4.2 ສະຫຼຸບຜົນການຄົ້ນຄວ້າການຜະລິດກະສິກຳອິນຊີ

ຜົນຂອງການວິເຄາະການຜະລິດກະສິກຳອິນຊີໃນ ສປປ ລາວ ເຫັນວ່າ ປັດຈຸບັນການຈັດຕັ້ງການຜະລິດຍັງແມ່ນການຜະລິດຂະໜາດນ້ອຍ ແລະ ການສະໜັບໜູນຈາກພາກລັດຖະບານຍັງມີການຈຳກັດດ້ານງົບປະມານ, ເຕັກນິກການສະໜອງແນວພັນ ແລະ ອຸປະກອນ (ເຮືອນຮົ່ມ). ນອກຈາກນັ້ນ, ຄວາມຮັບຮູ້ຂອງຊາວກະສິກອນຍັງບໍ່ທັນມີຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບການຜະລິດສິນຄ້າກະສິກຳອິນຊີໃຫ້ເປັນລະບົບ, ການຊອກຫາຕະຫຼາດທັງພາຍໃນ ແລະ ຕ່າງປະເທດ, ການເຂົ້າຫາແຫຼ່ງທຶນ, ແລະ ນະໂຍບາຍຈາກພາກລັດຍັງບໍ່ທັນສອດຄ່ອງຕໍ່ກັບການຈັດຕັ້ງປະຕິບັດໃນການສ້າງກຸ່ມສະຫະກອນທີ່ເຂັ້ມແຂງ. ດັ່ງນັ້ນ, ຜົນການຄົ້ນຄວ້າຕໍ່ກັບການຜະລິດກະສິກຳອິນຊີໃນ ສປປ ລາວ ຈຶ່ງສາມາດໃຈແຍກເບິ່ງປັດໄຈໃດຕໍ່ການຜະລິດກະສິກຳອິນຊີ ແລະ ການສົ່ງເສີມການຜະລິດເປັນສິນຄ້າເພື່ອຈຳໜາຍເປັນຕົ້ນ:

ປັດໄຈຕໍ່ກັບຊາວກະສິກອນ

- ສະພາບຜົນຕອບຮັບຈາກການສ້າງຕັ້ງກຸ່ມຜະລິດຂອງປະຊາຊົນເຫັນໄດ້ວ່າໄດ້ຮັບການຕອບຮັບດີຫຼາຍໂດຍການອຳນວຍຄວາມສະດວກຈາກທາງແຂວງ ແລະ ເມືອງ ເຊິ່ງອີງຕາມດຳລັດ ແລະ ນະໂຍບາຍຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຕໍ່ກັບການສ້າງຕັ້ງກຸ່ມການຜະລິດ ແລະ ສະຫະກອນ. ເຖິງແນວໃດກໍ່ຕາມ, ໃນການສະໝັກເຂົ້າເປັນສະມາຊິກກຸ່ມການຜະລິດກະສິກຳອິນຊີໂດຍມີຄ່າສະໝັກແມ່ນ 500,000 ກີບ/ຄອບຄົວ ແລະ ຈະໄດ້ຮັບຄຳແນະນຳ ແລະ ປຶ້ມຄູ່ມືໃນການຜະລິດສິນຄ້າກະສິກຳອິນຊີ.

- ສະພາບການຈັດຕັ້ງການຜະລິດເພື່ອເຮັດໃຫ້ການຜະລິດກະສິກຳອິນຊີ ແລະ ເປັນມິດຕໍ່ກັບສິ່ງແວດລ້ອມ ແມ່ນອີງຕາມຄຳແນະນຳຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໂດຍສະເພາະກຳຈັດສັດຕູພືດແມ່ນນຳໃຊ້ຢາພື້ນເມືອງ, ການໃສ່ປຸ໋ຍຄອກ ແລະ ການເຂົ້າເຖິງລະບົບຊົນລະປະທານ. ນອກຈາກນັ້ນ, ການກວດກາຄຸນນະພາບການຜະລິດ ແລະ ການນຳເອົາສິນຄ້າກະສິກຳອອກສູ່ການຈຳໜ່າຍແມ່ນມີຄະນະປະຈຳເມືອງຮ່ວມກັບນາຍບ້ານລົງຕິດຕາມກວດກາເປັນປະຈຳ.

- ນອກຈາກນີ້, ຜົນການສຶກສາຍັງພົບວ່າ: ຊາວກະສິກອນມີຄວາມຫ້າວຫັນ, ມີການຜະລິດໄປຕາມຮູບແບບການຜະລິດ ແລະ ເປັນຕ່ອງໂສ້ການຜະລິດໂດຍອີງໃສ່ຂັ້ນຕອນ ແລະ ແຜນງານທີ່ໄດ້ກຳນົດໄວ້ຢ່າງເຂັ້ມງວດ ແລະ ສິ່ງຜົນໃຫ້ຊາວກະສິກອນສ່ວນຫຼາຍໄດ້ຮັບຜົນຜະລິດສູງຄິດເປັນ 100% ປູກໃນເຮືອນຮົ່ມ ແລະ ນອກເຮືອນຮົ່ມຂອງຜົນຜະລິດໃນຊ້ວງລະດູແລ້ງ ແລະ 70% ຂອງຜົນຜະລິດທີ່ໄດ້ຮັບໃນລະດູຝົນ. ເຖິງຢ່າງໃດກໍ່ຕາມ, ພາກລັດຈາກຂັ້ນແຂວງ ແລະ ເມືອງ ຍັງໄດ້ມີການສົ່ງເສີມໃນການສ້າງມາດຕະຖານ ແລະ ຫຼັກການລວມໃນການຈັດຕັ້ງປະຕິບັດການປູກກະສິກຳອິນຊີຂອງຊາວກະສິກອນ ເພາະຊາວກະສິກອນແມ່ນຜູ້ທີ່ມີມູນເຊື້ອອັນດຸໝັ່ນໃນການປູກຝັງ ແລະ ລ້ຽງສັດບວກກັບສິ່ງແວດລ້ອມທີ່ສະອາດ.

ການສົ່ງເສີມດ້ານການຕະຫຼາດ

ຈາກການສຳພາດສ່ວນໃຫຍ່ຜູ້ບໍລິໂພກແມ່ນຈະນິຍົມຊື້ສິນຄ້າກະສິກຳອິນຊີ(ຜັກປອດສານພິດ) ໂດຍໄດ້ຮັບຄຳແນະນຳຈາກຄົນອ້ອມຂ້າງ(ໝູ່ ແລະ ຄອບຄົວ) ແລະ ຈາກການໂຄສະນາເພື່ອຈຳໜ່າຍສິນຄ້າກະສິກຳອິນຊີ ໂດຍສະເພາະການໂຄສະນາທາງ (Social Media) ເປັນຕົ້ນ: Facebook, Instragam ແລະ TV. ນອກຈາກນັ້ນ, ການສົ່ງເສີມການ

ຜະລິດກະສິກຳອິນຊີເພື່ອເປັນສິນຄ້າແມ່ນຍັງໄດ້ມີການສົ່ງເສີມການຈຳໜ່າຍໃນຮູບແບບການວາງສະແດງໃນເທດສະການ, ງານບຸນປະເພນີຕ່າງໆ (ໂຄງການພັດທະນາກະສິກຳສະອາດ, 2020). ເພື່ອເປັນການສົ່ງເສີມການຂະຫຍາຍຕະຫຼາດກະສິກຳອິນຊີໃຫ້ມີການຂະຫຍາຍຕົວ. ເຖິງຢ່າງໃດກໍ່ຕາມ, ໃນນາມພາກລັດກໍ່ຄື ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ມີການສ້າງຕະຫຼາດກະສິກຳອິນຊີຂຶ້ນເພື່ອໃຫ້ມີການພົບປະລະຫວ່າງຊາວສວນ ແລະ ຜູ້ປະກອບການເຊິ່ງມີຈຸດປະສົງເພື່ອສ້າງໂອກາດ ແລະ ຂະຫຍາຍຊ່ອງທາງໃນການຂາຍ ສຳລັບຜູ້ປະກອບການທີ່ດຳເນີນທຸລະກິດເຊັ່ນ: ໂຮງແຮມ, ຮ້ານອາຫານ, ຮ້ານຂັບພະສິນຄ້າ ແລະ ຊາວສວນກະສິກຳອິນຊີ OA ໃນຫຼາຍແຂວງ, ເມືອງ ແລະ ບ້ານ ໃນການດຳເນີນທຸລະກິດຮ່ວມກັນ (ໂຄງການພັດທະນາກະສິກຳສະອາດ, 2019).

<u>ການສະໜັບສະໜູນຈາກພາກລັດ</u>

- ໄດ້ຮັບການສະໜັບສະໜູນຈາກພະແນກກະສິກຳ ແລະ ປ່າໄມ້ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ໂດຍການຊ່ວຍເຫຼືອທາງດ້ານເຕັກນິກອຸປະກອນ, ການອຳນວຍຄວາມສະດວກໃນການຈຳໜ່າຍໂດຍສະເພາະການເປັນຜູ້ຈັດຊື້, ຈຳໜ່າຍທັງພາຍໃນ ແລະ ຕ່າງແຂວງ. ນອກຈາກນັ້ນ, ຍັງໄດ້ມີການຈຳໜ່າຍສິນຄ້າກະສິກຳອິຊີຜ່ານທາງ Social media ໂດຍການສ້າງເປັນກຸ່ມເພື່ອຊອກຫາສິນຄ້າກະສິກຳ ແລະ ສົ່ງອອກສູ່ຕະຫຼາດພາຍໃນແຂວງ ແລະ ຕ່າງແຂວງ.

- ສະໜອງການຊ່ວຍເຫຼືອຢ່າງຮອບດ້ານບໍ່ວ່າຈະເປັນ ແນວພັນ, ເຕັກນິກ, ປຸ໋ຍ, ເປົາ, ພ້ອມທັງມີໂຄງການນຳໃຊ້ນ້ຳເຊິ່ງມີການຈັດສັນ ແລະ ນຳໃຊ້ຊັບລະປະທານຢ່າງມີປະສິດທິພາບ ແລະ ປະສິດທິຜົນໂດຍໂຄງການດັ່ງກ່າວເປັນປັດໃຈສຳຄັນເຮັດໃຫ້ປະຊາຊົນບ້ານດັ່ງກ່າວມີທ່າແຮງໃນການຜະລິດພືດກະສິກຳໄດ້ເປັນຢ່າງດີ.

- ຈາກການສຳພາດພາກລັດໂດຍສະເພາະ, ກົມປູກຝັງ, ກະຊວງກະສິກຳ ແລະ ປາໄມ່ ເຫັນໄດ້ວ່າເພິ່ນໄດ້ມີຄວາມເອົາໃຈໃສ່ຕໍ່ການພັດທະນາຜະລິດຕະພັນກະສິກຳອິນຊີລາວ ເຊິ່ງໄດ້ມີການສ້າງຄູ່ມືໃນການຂໍໃບຢັ້ງຢືນກະສິກຳອິຊີຂອງລາວ ເພື່ອເປັນຄູ່ມືແນະນຳ ແລະ ເປັນສິ່ງອຳນວຍຄວາມສະດວກໃຫ້ແກ່ຜູ້ຜະລິດ-ຜູ້ປະກອບການທີ່ມີຄວາມສົນໃຈທີ່ຈະຂໍການຢັ້ງຢືນກະສິກຳອິນຊີ ຕະຫຼອດສ້າງຄວາມສະດວກໃຫ້ແກ່ວິຊາການ ໃນການຮັບສະໝັກການຂໍຢັ້ງຢືນຂອງຜູ້ຜະລິດ ແລະ ຜູ້ປະກອບການ (MoAF, 2011).

- ເຖິງແນວໃດກໍ່ຕາມ, ພາກລັດຍັງເຫັນຄວາມສຳຄັນໃນການກະຕຸກຊຸກຍູ້ການຜະລິດສິນຄ້າກະສິກຳອິນຊີ ເຊິ່ງໄດ້ຊຸກຍູ້ໃຫ້ພາກສ່ວນເສດຖະກິດຕ່າງໆຊອກຫາຕະຫຼາດທັງພາຍໃນ ແລະ ຕ່າງປະເທດໂດຍການໂຄສະນາສິນຄ້າຜ່ານຊ່ອງທາງ Social Media ແລະ Wabside, ການເປີດການວາງສະແດງສິນຄ້າກະສິກຳ ແລະ ເປີດກວ້າງການພົວກັບສາກົນ ກ່ຽວກັບການຊື້-ຂາຍ, ແລກປ່ຽນສິນຄ້າກະສິກຳ. ນອກຈາກນັ້ນ, ພາກລັດຍັງຊຸກຍູ້ການຜະລິດກະສິກຳອິນຊີຂອງປະຊາຊົນດ້ວຍການເຮັດສັນຍາຜູກພັນ ລວມທັງສົ່ງເສີມການສ້າງຕັ້ງສະຫະກອນ ແລະ ບໍລິສັດຂອງລັດເພື່ອຜູກຜັນຊື້-ຂາຍຜົນຜະລິດກະສິກຳ (ສະພາແຫ່ງຊາດ, 1998).

ເພື່ອສ້າງຄວາມໝັ້ນໃຈ ທາງພາກລັດໄດ້ກຳນົດລະບຽບ ແລະ ແນວທາງຂອງການຢັ້ງຢືນຮັບຮອງ ກະສິກຳອິນຊີລາວ. ສະນັ້ນ, ຊາວສວນກະສິກຳອິນຊີ ທີ່ໄດ້ຮັບການຢັ້ງຢືນ ແລະ ນຳໃຊ້ລະບຽບຫຼັກການມາດຕະຖານອິນຊີ ເຂົ້າໃນການຜະລິດຂອງເຂົາເຈົ້າພ້ອມທັງ ກວດກາເຊິ່ງກັນ ແລະ ກັນ ເພື່ອຮັກສາຄວາມຖືກຕ້ອງຕາມມາດຕະຖານເຊິ່ງກັນ ແລະ ກັນ. ນອກຈາກນັ້ນ, ກຸ່ມຜະລິດກະສິກຳອິນຊີໃນ ສປປ ລາວ ຍັງໄດ້ຮັບການສະໜັບສູນໜູນທາງດ້ານເຕັກນິກ, ການເງິນ ແລະ ອຸປະກອນຕ່າງໆຈາກພາກລັດ ແລະ ອົງການຈັດຕັ້ງສາກົນ ເຂົ້າໃນການຈັດຕັ້ງປະຕິບັດ ເປັນຕົ້ນ: ໂຄງການພັດທະນາກະສິກຳສະອາດ JICA Clean Agriculture Development Project (CADP), ອົງການຮ່ວມມືສາກົນປະເທດຍີ່ປຸ່ນ Japan International Cooperation Agency (JICA), ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້

Department of Agriculture (DOA), Ministry of Agriculture and Forestry, ແລະ ພະແນກກະສິກຳ ແລະ ປ່າໄມ້ແຂວງ ທົ່ວປະເທດ.

<u>ປັດໄຈຕໍ່ກັບການປ່ຽນແປງດິນຟ້າອາກາດ</u>

- ບາງຄອບຄົວເທົ່ານັ້ນທີ່ສາມາດເຮັດການຜະລິດໄດ້ ເນື່ອງຈາກສະພາບແວດລ້ອມທີ່ບໍ່ເອື້ອອຳນວຍ ພ້ອມທັງຂາດລະບົບຊົນລະປະທານ ເຮັດໃຫ້ປະຊາຊົນບ້ານດັ່ງກ່າວຍັງອາໃສນ້ຳຈາກທຳມະຊາດ(ນ້ຳຝົນ)ເຂົ້າໃນການຜະລິດ ເຊິ່ງແຕ່ລະປີກໍພົບກັບບັນຫາ ແລະ ສິ່ງທ້າທ້າຍຕ່າງໆໂດຍສະເພາະໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ ເຮັດໃຫ້ຜົນຜະລິດກະສິກຳບໍ່ໄດ້ຮັບໝາກຜົນຢ່າງເຕັມເມັດເຕັມໜ່ວຍ ຫຼື ບາງປີກໍ່ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຈຶ່ງສົ່ງຜົນກະທົບຕໍ່ຜົນຜະລິດໃນການຈຳໜ່າຍ ແລະ ສະໜອງຕາມຄວາມຕ້ອງການຂອງທ້ອງຕະຫຼາດ.

- ການຜະລິດກະສິກຳອິນຊີຢູ່ໃນໂລກ ກໍ່ຄື ສປປ ລາວ ລ້ວນແລ້ວແຕ່ປະເຊີນກັບໄພທຳມະຊາດທີ່ເກີດຈາກການປ່ຽນແປງດິນຟ້າອາກາດບໍ່ວ່າຈະເປັນອຸທະພູມທີ່ສູງຂຶ້ນ, ຝົນຕົກບໍ່ຖືກຕ້ອງຕາມລະດູການ, ໄພນ້ຳຖ້ວມ, ໄພແຫ້ງແລ້ງ, ລົມພາຍຸ ແລະ ອື່ນໆ. ດັ່ງນັ້ນ, ລະດັບການປັບຕົວຂອງຜູ້ຜະລິດກະສິກຳອິນຊີຂະໜາດນ້ອຍຢູ່ ແຂວງຫຼວງນ້ຳທາ, ສາລາວັນ ແລະ ຈຳປາສັກແມ່ນຍັງຕ່ຳ. ການດັດປັບເຕັກນິກການຜະລິດຍັງບໍ່ສູງ ແລະ ເນັ້ນໜັກໃສ່ສານເຄມີເມື່ອເກີດພະຍາດ. ເຖິ່ງແນວໃດກໍ່ຕາມ, ການຕິດຕາມ ແລະ ໃຫ້ຄຳແນະນຳຈາກພາກລັດຍັງມີຈຳກັດສົ່ງຜົນໃຫ້ການຮັບມືກັບບັນຫາການປ່ຽນແປງດິນຟ້າອາກາດຈຶ່ງຊັກຊ້າ.

- ຕໍ່ກັບການຜະລິດກາເຟອິນຊີເຫັນໄດ້ວ່າການປັບຕົວຂອງຜູ້ຜະລິດກາເຟຍັງບໍ່ທັນຕໍ່ກັບສະພາບການຍ້ອນຂໍ້ຈຳກັດຫຼາຍຢ່າງ ຈຶ່ງສົ່ງຜົນຕໍ່ກັບຄຸນະພາບຂອງກາເຟຕະຫຼອດຮອດຊີວິດການເປັນຢູ່ຂອງຕົນເອງອີກດ້ວຍ. ນອກຈາກນັ້ນ, ການບໍລິຫານຈັດການສິ່ງເສດເຫຼືອຈາກຂະບວນການຜະລິດກາເຟກໍ່ດີກວ່າ. ໂດຍສະເພາະແມ່ນເນັ້ນການປູກກາເຟອິນຊີ-ປອດສາເຄມີ ບໍ່ເຮັດໃຫ້ດິນເສື່ອມຄຸນະພາບ ແລະ ຮັກສາສິ່ງແວດລ້ອມອີກດ້ວຍ. ອີກດ້ານໜຶ່ງ, ມາດຕະການຮັບມືໄພພິບັດຈາກພາກລັດຍັງບໍ່ທັນເຂັ້ມແຂງ ຈຶ່ງຈຳເປັນຕ້ອງໄດ້ຊອກຄົ້ນຕື່ມກ່ຽວກັບບັນຫາທີ່ທ້າທາຍໃນການປະເຊີນກັບການປ່ຽນແປງດິນຟ້າອາກາດ.

<u>ຂໍ້ຫຍຸ້ງຍາກ ແລະ ຂໍ້ຈຳກັດອື່ນໆ</u>

- ເຖິງຢ່າງໃດກໍຕາມ, ການພັດທະນາກຸ່ມຜະລິດກະສິກຳດັ່ງກ່າວຍັງຈັດຕັ້ງປະຕິບັດບໍ່ທັນໄດ້ດີເທົ່າທີ່ຄວນຍັງມີປະຊາຊົນອີກຫຼາຍຄອບຄົວບໍ່ທັນເຂົ້າເປັນສະມາຊິກກຸ່ມຜູ້ຜະລິດກະສິກຳເນື່ອງຈາກຍັງບໍ່ທັນເຂົ້າໃຈໃນຄວາມໝາຍ, ຄວາມສຳຄັນ ແລະ ພາລະບົດບາດຂອງການຈັດຕັ້ງກຸ່ມຜູ້ຜະລິດ ແລະ ສະຫະກອນຈະສ້າງຜົນປະໂຫຍດຫຍັງໃຫ້ແກ່ຊາວກະສິກຳ ໂດຍການທີ່ເຂົ້າເປັນສະມາຊິກກຸ່ມຜະລິດຈະສາມາດປັບປຸງການຜະລິດກະສິກຳຂອງຕົນໃຫ້ດີຂຶ້ນຄືແນວໃດລວມທັງການທີ່ຈະໄດ້ຮັບບູລິມະສິດຫຼັງຈາກທີ່ເຂົ້າເປັນສະມາຊິກຂອງກຸ່ມການຜະລິດເຊິ່ງປະຈຸບັນການຈັດຕັ້ງກໍ່ສ້າງກຸ່ມຜູ້ຜະລິດຍັງບໍ່ທັນສາມາດສ້າງຈຸດແຕກຕ່າງທີ່ເປັນແຮງຈູງໃຈໃຫ້ແກ່ປະຊາຊົນໃນການເຂົ້າເປັນສະມາຊິກກຸ່ມຜູ້ຜະລິດບໍ່ວ່າຈະເປັນທາງດ້ານເຕັກນິກວິຊາການ ໂດຍສະເພາະການຄ້ຳປະກັນທາງດ້ານລາຄາຍັງອາໃສລາຄາຕາມກົນໄກຕະຫລາດ ໂດຍທີ່ຄະນະຈັດຕັ້ງຂອງກຸ່ມຜະລິດກໍບໍ່ສາມາດຕໍ່ລອງ ແລະ ຄຸ້ມຄອງດ້ານລາຄາໄດ້.

- ອີກດ້ານໜຶ່ງໂກ້ຕ້າທີ່ຈະເຂົ້າເປັນສະມາຊິກກຸ່ມຜູ້ຜະລິດຍັງຈຳກັດ ບໍ່ສາມາດຮອງຮັບສະມາຊິກກຸ່ມການຜະລິດຈຳນວນຫຼວງຫຼາຍສືບເນື່ອງມາຈາກດ້ານງົບປະມານໃນການດຳເນີນໂຄງການທີ່ຈັດຕັ້ງປະຕິບັດສ້າງກຸ່ມຜູ້ຜະລິດຍັງມີໜ້ອຍ ແລະ ບໍ່ພຽງພໍ ຕາມຄວາມຕ້ອງການ ສະນັ້ນຈຳເປັນຕ້ອງເລືອກເຟັ້ນເອົາບາງຄອບຄົວທີ່ມີຄວາມສາມາດ ແລະ ທ່າແຮງທີ່ດີໃນການເຂົ້າເປັນສະມາຊິກເຊັ່ນ : ມີຄວາມດຸໝັ່ນ, ຫ້າວຫັນ, ມີຄວາມກະຕືລືລົ້ນ ແລະ ມີແນວຄິດປະດິດສ້າງ ທີ່ສຳຄັນແມ່ນມີ ເນື້ອທີ່ການຜະລິດທີ່ແນ່ນອນ ເພື່ອເປັນຄອບຄົວຕົວແບບໃນການລິເລີ່ມ ແລະ ທົດລອງສ້າງກຸ່ມ

ຜູ້ຜະລິດກະສິກຳຕ່າງໆ ເຊິ່ງປັດໃຈທີ່ກ້າວມາຂ້າງນີ້ເຮັດໃຫ້ຍັງມີຫຼາຍຄອບຄົວທີ່ບໍ່ສາມາດເຂົ້າເປັນສະມາຊິກກຸ່ມການຜະລິດ ແລະ ກໍ່ໃຫ້ເກີດ ເປັນອຸປະສັກ ແລະ ເປັນສິ່ງທ້າທາຍໃນການພັດທະນາກຸ່ມຜູ້ຜະລິດ ແລະ ສະຫະກອນຂອງບ້ານດັ່ງກ່າວ.

- ການນຳໃຊ້ອຸປະກອນເຕັກນິກທັນສະໄໝຍັງບໍ່ທັນໄດ້ດີໂດຍສະເພາະການຄົ້ນຄວ້າ ແລະ ສົ່ງເສີມທາງດ້ານເຕັກນິກວິຊາການຈາກພາກລັດບໍ່ທັນກັບຄວາມຮຽກຮ້ອງຕ້ອງການຕໍ່ການຜະລິດຂອງຊາວກະສິກອນຍັງມີການຈຳກັດຖ້າທຽບໃສ່ການປູກເຂົ້າ ແລະ ການລ້ຽງສັດ.

- ການຜະລິດກະສິກຳອິນຊີແມ່ນຍັງນຳໃຊ້ຕົ້ນທຶນສູງ ໂດຍສະເພາະໃນການກະກຽມດິນ ແລະ ປົວລະບັດຮັກສາ, ແຕ່ເຫັນວ່າ ການເຂົ້າເຖິງແຫຼ່ງທຶນຍັງພົບກັບຄວາມຫຍຸ້ງຍາກຄືກັນເປັນຕົ້ນແມ່ນລະບຽບການ ແລະ ເງື່ອນໄຂໃນການກູ້ຢືມຈາກທະນະຄານລັດ ເຊັ່ນ: ອັດຕາດອກເບັ້ຍສູງ, ໄລຍະເວລາຢືມສັ້ນ ແລະ ຈຳນວນເງິນກູ້ທີ່ຕໍ່າ .

- ຍັງມີບາງບ້ານ, ຫຼາຍຄອບຄົວປູກພືດເຄມີຢູ່ບໍລິເວນໃກ້ຄຽງກັບສະຖານທີປູກພືດຈຶ່ງສົ່ງຜົນກະທົບໃຫ້ບາງສິນຄ້າກະສິກຳບໍ່ໄດ້ຄຸນະພາບ

- ການໂຄສະນາເຜີຍແຜ່ບໍ່ທັນເປີດກວ້າງ ແລະ ຕໍ່ເນື່ອງ.

### 4.3 ກໍລະນີສຶກສາສະພາບການທ່ອງທ່ຽວອະນຸລັກນິເວດວິທະຍາ ແບບມີສ່ວນຮ່ວມ

#### 4.3.1 ສະພາບການທ່ອງທ່ຽວແຂວງຈຳປາສັກ

❖ **ທ່າແຮງ ແລະ ການຂະຫຍາຍຕົວຂອງການທ່ອງທ່ຽວແຂວງຈຳປາສັກ:** ແຂວງຈຳປາສັກ ມີສະຖານທີ່ທ່ອງທ່ຽວທັງໝົດ 216 ແຫຼ່ງ, ທຳມະຊາດ 116 ແຫຼ່ງ, ວັດທະນະທຳ 60 ແຫ່ງ ແລະ ປະວັດສາດ 40 ແຫ່ງ, ມີບໍລິສັດທ່ອງທ່ຽວ ທັງໝົດ 34 ຫົວໜ່ວຍ (ບໍລິສັດແມ່ 27 ຫົວໜ່ວຍ, ສາຂາ 7 ຫົວໜ່ວຍ), ໂຮງແຮມ 72 ແຫ່ງ (ໂຮງແຮມ 2 ດາວ 1 ແຫ່ງ, 3 ດາວ 5 ແຫ່ງ, 4 ດາວ 3 ແຫ່ງ ແລະ ໂຮງແຮມສີຂຽວອາຊຽນ 11 ແຫ່ງ), ມີບ້ານພັກ 219 ແຫ່ງ (ເຮືອນພັກ 2 ດອກຈຳປາ 1 ແຫ່ງ), ຣີສອດ 8 ແຫ່ງ, ຮ້ານອາຫານ 228 ແຫ່ງ, ຮ້ານກິນດື່ມ 243 ແຫ່ງ, ຮ້ານບັນເທີງ 38 ແຫ່ງ, ມີລົດບໍລິການທ່ຽວທ່ຽວ 119 ຄັນ (ລົດຂອງບໍລິສັດ 53 ຄັນ ແລະ ສັງກັດບໍລິສັດ 35 ຄັນ, ລົດກຸ່ມ 21 ຄັນ ແລະ ເຮືອບໍລິການທ່ອງທ່ຽວ 5 ລຳ, ມີພະນັກງານນຳທ່ຽວທັງໝົດ 249 ຄົນ, ຍິງ 108 ຄົນ,ຂັ້ນສູນກາງ 233 ຄົນ, ຍິງ 98 ຄົນ, ຂັ້ນແຂວງ 16 ຄົນ ຍິງ 10 ຄົນ.

ໄລຍະ 1 ປີຜ່ານມາ ມີນັກທ່ອງທ່ຽວເຂົ້າມາທ່ຽວແຂວງຈຳປາສັກທັງໝົດ 117,115 ຄົນ.ໃນນັ້ນ, ພາຍໃນ 57,613 ຄົນ, ຊາຍແດນ 41,695 ຄົນ, ສາກົນ 17,807 ຄົນ ທຽບໃສ່ໄລຍະດຽວຫຼຸດລົງ 89,13%, ທຽບໃສ່ແຜນປີປະຕິບັດໄດ້ 26% (ແຜນ 450.000 ເທື່ອຄົນ) ສ້າງລາຍຮັບໄດ້ 12,25 ລ້ານໂດລາສະຫາລັດ, ທຽບໃສ່ໄລຍະດຽວຫຼຸດລົງ 93,57%, ທຽບໃສ່ແຜນປີປະຕິບັດໄດ້ 19% (ແຜນ 64,8 ລ້ານໂດລາສະຫະລັດ) ສາເຫດແມ່ນຍ້ອນການລະບາດຂອງພະຍາດ ໂຄວິດ-19 ທີ່ໄດ້ສົ່ງຜົນກະທົບຢ່າງກວ້າງຂວາງ (ການຈັດຕັ້ງປະຕິບັດວຽກງານທ່ອງທ່ຽວປະຈຳປີ2020, 2021).

❖ **ທ່າແຮງ ແລະ ການຂະຫຍາຍຕົວຂອງການທ່ອງທ່ຽວເມືອງປາກຊ່ອງ:** ດັ່ງທີ່ຮູ້ກັນແລ້ວວ່າເມືອງປາກຊ່ອງ ກໍ່ແມ່ນ 1 ໃນ 9 ຕົວເມືອງ 1 ນະຄອນຂອງແຂວງຈຳປາສັກ ທີ່ມີຈຸດພິເສດແຕກຕ່າງຈາກເມືອງອື່ນໆ ພາຍໃນແຂວງແມ່ນທີ່ຕັ້ງພູມສັນຖານ ແລະ ອາກາດ ເຊິ່ງເປັນທ່າແຮງໄດ້ປຽບກ່ອນໝູ່ເໝາະສົມ ໃຫ້ແກ່ການຂະຫຍາຍຕົວຂອງຊີວະນາໆພັນ ແລະ ການລົງທຶນພັດທະນາເສດຖະກິດ-ສັງຄົມພາຍໃນ ເມືອງປາກຊ່ອງ. ການທ່ອງທ່ຽວເປັນວຽກງານໜຶ່ງສຳຄັນທີ່ສ້າງຜົນປະໂຫຍດແບບທະວີຄູນ ສາມາດສ້າງລາຍຮັບໃຫ້ແກ່ປະຊາ ຊົນບັນດາເຜົ່າເພີ່ມຂຶ້ນ,

ປະຈຸບັນທົ່ວເມືອງໄດ້ກຳນົດເປັນແຫຼ່ງທ່ອງທ່ຽວໄດ້ທັງໝົດ 77 ແຫ່ງ ໃນນີ້ ແຫຼ່ງທ່ອງທ່ຽວທຳມະຊາດ (ຕາດ) 37 ແຫ່ງ (ມີຈຳນວນ 8 ແຫ່ງໄດ້ຖືກຈັດຕັ້ງປະຕິບັດແລ້ວ), ທ່ອງທ່ຽວທຳມະຊາດພູຜາປ່າດົງ 8 ແຫ່ງ, ແຫຼ່ງທ່ອງທ່ຽວປະຫວັດສາດ 6 ແຫ່ງ, ແຫຼ່ງທ່ອງທ່ຽວທາງດ້ານວັດທະນະທຳ 12 ແຫ່ງ ແລະ ທ່ອງທ່ຽວກະສິກຳ 14 ແຫ່ງ ແຕ່ໃນບັນດາແຫຼ່ງທ່ອງທ່ຽວທັງໝົດນັ້ນ ແມ່ນໄດ້ມີການພັດທະນາພຽງ 25 ແຫ່ງເທົ່ານັ້ນ.

ໃນປີຜ່ານມາສາມາດດຶງດູດນັກທ່ອງທ່ຽວເຂົ້າມາທ່ຽວຊົມໄດ້ 958.258 ເທື່ອຄົນ, ທຽບໃສ່ໄລຍະດຽວເພີ່ມຂຶ້ນ 28,86%, ທຽບໃສ່ແຜນການ ເພີ່ມຂຶ້ນ 10%, ໃນນັ້ນ: ນັກທ່ອງທ່ຽວພາຍໃນ 356.309 ຄົນ, ນັກທ່ອງທ່ຽວຕ່າງປະເທດ 601.949 ຄົນ ສາມາດສ້າງລາຍຮັບໄດ້ທັງໝົດ 38 ຕື້ກີບ ຫຼື ເທົ່າກັບ 4,75 ລ້ານໂດລາສະຫະລັດ ທຽບໃສ່ແຜນການເພີ່ມຂຶ້ນ 8,5%, ມີຫົວໜ່ວຍຜູ້ປະກອບການທັງໝົດ 57 ຫົວໜ່ວຍ, ມີໂຮງແຮມ 2 ແຫ່ງ, ເຮືອນພັກ 12 ຫົວໜ່ວຍ, ໂຮມສະເຕ 4 ຫົວໜ່ວຍ, ຮ້ານອາຫານ 16 ແຫ່ງ, ຮ້ານບັນເທີງ 23 ແຫ່ງ ແລະ ສ້າງຜູ້ນຳທ່ຽວຂັ້ນບ້ານໄດ້ 8 ຄົນ (ແຜນການ5ປີຄັ້ງທີIX(2020-2024)ຫ້ອງການແຜນການເມືອງປາກຊ່ອງ, 2015).

- **ວິໄສທັດການພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທາ ແລະ ທ່ອງທ່ຽວ ເມືອງປາກຊ່ອງ ແຂວງຈຳປາສັກ 2014-2030:** " ພັດທະນາການທ່ອງທ່ຽວແນໃສ່ການສ້າງເມືອງປາກຊ່ອງໃຫ້ເປັນເມືອງສະຫວັນທາງດ້ານການທ່ອງທ່ຽວ ພັກຜ່ອນຢ່ອນໃຈ ແລະ ບໍລິໂພກອາຫານການກິນ ທີ່ສະອາດປອດສານພິດ " ວິໄສທັດແຕ່ປີ 2015-2030: ເພື່ອພັດທະນາເມືອງປາກຊ່ອງ ໃຫ້ກາຍເປັນສະຫວັນດ້ານການທ່ອງທ່ຽວພັກຜ່ອນຢ່ອນໃຈ ແລະ ບໍລິໂພກອາຫານການກິນທີ່ສະອາດປອດສານພິດ ແນໃສ່ເພື່ອພັດທະນາການທ່ອງທ່ຽວອະນຸລັກທຳມະຊາດໃຫ້ມີຄວາມຍືນຍົງແບບປະຊາຊົນມີສ່ວນຮ່ວມ, ເຮັດໃຫ້ເມືອງປາກຊ່ອງເປັນຈຸດໝາຍປາຍທາງໃນການທ່ອງທ່ຽວຂອງທົ່ວໂລກ, ເປັນພື້ນຖານເຊື່ອມໂຍງເຂົ້າກັບການທ່ອງທ່ຽວ 4 ແຂວງພາກໃຕ້ ທັງໃນລະດັບພາກພື້ນ ແລະ ສາກົນ. ເພື່ອພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ ໃຫ້ເປັນຂະແໜງເສດຖະກິດກາຍເປັນອຸດສາຫະກຳການທ່ອງທ່ຽວ ຊ່ວຍໃຫ້ປະຊາຊົນບັນດາເຜົ່າຫຼຸດພົ້ນອອກຈາກຄວາມທຸກຍາກຕາມນະໂຍບາຍຂອງລັດຖະບານ ໂດຍກຳນົດເອົາສະຖານທີ່ທ່ອງທ່ຽວທຳມະຊາດນ້ຳຕົກຕາດໃນທົ່ວເມືອງ, ຜະລິດຕະພັນພືດຜັກປອດສານພິດ, ກາເຟ, ໃບຊາ ເປັນ ໃຈກາງໃນການດຶງດູດນັກທ່ອງທ່ຽວ (ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານຫ້ອງການຖ.ວ.ທ, 2020).

- **ເປົ້າໝາຍການພັດທະນາການທ່ອງທ່ຽວຂອງເມືອງປາກຊ່ອງ ແຂວງຈຳປາສັກ:**

1. ສົ່ງເສີມ ແລະ ລົງທຶນພັດທະນາພື້ນຖານໂຄ່ງລ່າງແຫຼ່ງທ່ອງທ່ຽວໃນ 3 ເຂດ ທີ່ໄດ້ກຳນົດໃນແຜນພັດທະນາຂອງເມືອງໃຫ້ມີຄຸນນະພາບ, ທັນສະໄໝ ແລະ ຍືນຍົງ ໂດຍປຸກລະດົມໃຫ້ສັງຄົມມີສ່ວນຮ່ວມ.
2. ຍົກລະດັບບຸກຄະລາກອນ, ສະຖານທີ່ບໍລິການ ແລະ ປັດໄຈເອື້ອອຳນວຍຄວາມສະດວກ, ຮັບປະກັນຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ ໃຫ້ໄດ້ມາດຕະຖານສາກົນ.
3. ຖືເອົາການທ່ອງທ່ຽວທຳມະຊາດ, ລະບົບນິເວດວິທະຍາ, ມູນເຊື້ອວັດທະນະທຳປະຫວັດສາດ ໃຫ້ກາຍເປັນຂະແໜງເສດຖະກິດຕົ້ນຕໍຂອງເມືອງ, ສາມາດເຊື່ອມໂຍງເຂົ້າໃນອະນຸພາກພື້ນ-ສາກົນ ແລະ ຫັນໄປສູ່ອຸດສາຫະກຳການທ່ອງທ່ຽວທັນສະໄໝໄປເທື່ອລະກ້າວ.
4. ພັດທະນາການທ່ອງທ່ຽວອະນຸລັກທຳມະຊາດແບບປະຊາຊົນມີສ່ວນຮ່ວມ (ຕິດພັນກັບການພັດທະນາບ້ານ ແລະ ກຸ່ມບ້ານພັດທະນາ).
5. ພັດທະນາແຫຼ່ງທ່ອງທ່ຽວທຳມະຊາດ, ວັດທະນະທຳ, ປະຫວັດສາດ ແລະ ທ່ອງທ່ຽວຊົມການກະເສດປອດສານພິດ.

6. ປັບປຸງເສັ້ນທາງເຂົ້າສູ່ແຫຼ່ງທ່ອງທ່ຽວ, ປັບປຸງບ້ານພັກ-ໂຮງແຮມ ທີ່ມີຢູ່ແລ້ວໃຫ້ເຂົ້າສູ່ມາດຕະຖານການບໍລິການລະດັບສາກົນຂັ້ນເທື່ອລະກ້າວ.
7. ສົ່ງເສີມການກໍ່ສ້າງລີສອດ, ໂຮງແຮມລະດັບສາກົນ ຕິດພັນກັບການສ້າງສະໜາມກ໋ອບ 18 ຂຸມ ເພື່ອດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ.

- **ຜົນການສຳຫຼວດຕົວແບບແຫຼ່ງທ່ອງທ່ຽວອະນຸລັກນິເວດວິທະຍາແບບປະຊາຊົນມີສ່ວນຮ່ວມ:** ແຫຼ່ງທ່ອງທ່ຽວທຳມະຊາດເປັນແຫຼ່ງທ່ອງທ່ຽວອະນຸລັກແບບທຳມະຊາດ ເຊິ່ງສິ່ງທີ່ເປັນເອກະລັກຄືການທ່ຽວຊົມທຳມະຊາດ ເຊັ່ນ: ພູຜາປ່າໄມ້, ນ້ຳຕົກຕາດທຳມະຊາດທີ່ສວຍງາມ ໂດຍແຫຼ່ງທ່ອງທ່ຽວເຫຼົ່ານີ້ແມ່ນນອນຢູ່ໃນປ່າສະຫງວນແຫ່ງຊາດ ເມືອງປາກຊ່ອງ ແຂວງຈຳປາສັກ ເປັນແຫຼ່ງທ່ອງທ່ຽວໜຶ່ງທີ່ສວຍງາມຂອງແຂວງຈຳປາສັກ. ຊ່ວງໄລຍະຕໍ່ມາ ຈຶ່ງມີນັກລົງທຶນເຂົ້າມາສຳປະທານສ້າງໃຫ້ເປັນສະຖານທີ່ທ່ອງທ່ຽວແບບອະນຸລັກທຳມະຊາດ ໂດຍໄດ້ມີການເປີດບໍລິການແຫຼ່ງທ່ອງທ່ຽວທ້າຍປີ 2010 ຊຶ່ງເນື້ອທີ່ທັງໝົດກວມ 1.073 ເຮັກຕາ, ໃນນັ້ນ ມີແມ່ບ້ານ, ແມ່ຄົວ, ພະນັກງານ (ແຄັມ) ແລະ ພະນັກງານນຳທ່ຽວກວ່າ 50 ຄົນ ຊຶ່ງໄດ້ຮັບເງິນເດືອນສະເລ່ຍຄົນລະ 1400.000-1500.000 ກີບ/ເດືອນ. ສຳລັບຈຳນວນນັກທ່ອງທ່ຽວຊ່ວງໄລຍະກ່ອນຈະມີການແຜ່ລະບາດຂອງພະຍາດໂຄວິດ-19 ໄດ້ມີນັກທ່ອງທ່ຽວເຂົ້າມາຊົມທຳມະຊາດ ປະມານ 745 ຄົນ ສ່ວນໃຫຍ່ເປັນນັກທ່ອງທ່ຽວຄົນໄທ ແລະ ກຸ່ມປະເທດເອີຣົບ, ແຕ່ພາຍຫຼັງມີການແຜ່ລະບາດຂອງພະຍາດໂຄວິດ-19 ໃນປີ 2020 ເຫັນວ່ານັກທ່ອງທ່ຽວຫຼຸດລົງ ເຫຼືອພຽງແຕ່ 312 ຄົນເທົ່ານັ້ນ ຊຶ່ງໄດ້ເຮັດໃຫ້ລາຍຮັບຫຼຸດລົງເຫຼືອ 30% ຂອງລາຍຮັບທັງໝົດໃນປີ (ສ່ວນໃຫຍ່ຍັງເປັນກຸ່ມນັກທ່ອງທ່ຽວຄົນລາວ) ແລະ ເຫັນໄດ້ວ່າຄວາມສາມາດໃນການຈ່າຍເພື່ອຊົມທຳມະຊາດ ແລະ ກິດຈະກຳຕ່າງໆ ສະເລ່ຍຕໍ່ນັກທ່ອງທ່ຽວຄົນ 1 ແມ່ນຫຼຸດລົງ ຈ່າຍພຽງ 1.100.000ກີບ/ມື້ ເທົ່ານັ້ນ.

**ຈຸດດີຂອງແຫຼ່ງທ່ອງທ່ຽວດັ່ງກ່າວ**: ແມ່ນໄດ້ສົ່ງເສີມໃຫ້ປະຊາຊົນມີລາຍຮັບ ແລະ ມີສ່ວນຮ່ວມໃນການທ່ອງທ່ຽວ, ພັດທະນາແຫຼ່ງທ່ອງທ່ຽວໃຫ້ເປັນແຫຼ່ງທ່ອງທ່ຽວອານຸລັກແບບທຳມະຊາດ ໂດຍປະຊາຊົນມີສ່ວນຮ່ວມ, ປັບປຸງເສັ້ນທາງການເຂົ້າເຖິງແຫຼ່ງທ່ອງທ່ຽວ ແລະ ສິ່ງທີອຳນວຍຄວາມສະດວກ ເພື່ອດຶງດູດນັກທ່ອງທ່ຽວ ທັງພາຍໃນ ແລະ ຕ່າງປະເທດ. ນອກຈາກນີ້, ຍັງໄດ້ສົ່ງເສີມໃຫ້ປະຊາຊົນເຮັດກະສິກຳຕິດພັນກັບການ ທ່ອງທ່ຽວອີກດ້ວຍ. ພ້ອມກັນນັ້ນ, ກໍ່ຍັງມີການຝຶກອົບຮົມ ແລະ ການປຸງແຕ່ງອາຫານ, ມີການສອນນວດ ແລະ ເຕັກນິກຕ່າງໆ, ການສອນເປັນພະນັກງານນຳທ່ຽວໃຫ້ກຸ່ມບ້ານໃກ້ຄຽງມີສ່ວນຮ່ວມ ເຮັດໃຫ້ປະຊາຊົນທີ່ໄດ້ຮັບການຝຶກອົບຮົມຫັນມາໃຫ້ການອະນຸລັກປົກປັກຮັກສາສິ່ງແວດລ້ອມຊ່ວຍກັນ ເຊັ່ນ: ການບໍ່ຖິ້ມເສດຂີ້ເຫຍື້ອຕ່າງໆຊະຊາຍ, ປະຊາຊົນຢຸດຕິການຕັດໄມ້ທຳລາຍປ່າ ແລະ ຢຸດຕິການລ່າສັດ.

**ຂໍ້ຄົງຄ້າງທີ່ຕ້ອງໄດ້ຮັບການແກ້ໄຂ**: ດັ່ງທີ່ພວກເຮົາຮູ້ກັນແລ້ວວ່າ ຂໍ້ຫຍຸ້ງຍາກ ແລະ ບັນຫາທີ່ເກີດຂຶ້ນຄືຍັງມີປະຊາຊົນທີ່ຍັງບໍ່ເຂົ້າໃຈໃນການອະນຸລັກເຂົ້າໄປທຳການລ່າສັດໃນເຂດດັ່ງກ່າວຢູ່, ການຕັດໄມ້ທຳລາຍປ່າທີ່ບໍ່ສາມາດແກ້ໄຂ້ບັນຫາໄດ້ 100% (ປັດຈຸບັນກໍ່ຍັງມີຢູ່). ເຖິງຢ່າງໃດກໍ່ຕາມ, ທາງພາກລັດ ກໍຄືຂະແໜງກະສິກຳ-ປ່າໄມ້ເມືອງ ໄດ້ສົມທົບກັບກຸ່ມບ້ານທີ່ໃກ້ຄຽງແຫຼ່ງທ່ອງທ່ຽວຈັດແບ່ງຜຽງກັນອອກກວດກາເວນຍາມເພື່ອປ້ອງກັນ ແລະ ສະກັດກັ້ນ (ໃນ 1 ເດືອນມີການອອກກວດກາ 21 ເທື່ອ) ແຕ່ກໍ່ຍັງບໍ່ສາມາດແກ້ໄຂໄດ້ຮ້ອຍສ່ວນຮ້ອຍ, ແຕ່ເຖິງຢ່າງນັ້ນກໍຕາມ ທາງພາກລັດ ແລະ ປະຊາຊົນກໍ່ໄດ້ເອົາໃຈໃສ່ ເພື່ອອະນຸລັກປົກຮັກສາຊ່ວຍກັນເພື່ອຫຼຸດຜ່ອນການລ່າສັດ ແລະ ຕັດໄມ້ທຳລາຍປ່າ ທີ່ເປັນຜົນກະທົບຕໍ່ສິ່ງວດລ້ອມທາງທຳມະຊາດ.

4.3.2 ສະພາບການທ່ອງທ່ຽວແຂວງສາລະວັນ

- **ທ່າແຮງ ແລະ ການຂະຫຍາຍຕົວຂອງການທ່ອງທ່ຽວແຂວງສາລະວັນ:** ແຂວງສາລະວັນ ເປັນແຂວງໜຶ່ງທີ່ຕັ້ງຢູ່ພາກໃຕ້ຂອງ ສປປ ລາວ, ເປັນແຂວງທີ່ມີທ່າແຮງດ້ານຊັບພະຍາກອນການທ່ອງທ່ຽວທາງທຳມະຊາດ,

ວັດທະນະທຳ ແລະ ປະຫວັດສາດທີ່ໜ້າສົນໃຈ ເຊັ່ນ: ນ້ຳຕົກຕາດເລາະ-ຕາດຮັງ, ຕາດສູງ, ແກ້ງກຸ-ປາກເສັດ, ຕາດເທວະດາ, ອຸທິຍານພູຜາສຸກ, ຮອຍພະບາດ, ວັດໜອງສອງຫ້ອງ, ທຳໄຕວັດກາງ, ອະນຸສາວະລີອົງແກ້ວ, ຂົວສຸພານຸວົງ, ເສັ້ນທາງໂຮຈິມິນ, ວັດທະນະທຳເຜົ່າປະໂກະ-ຕະໂອ້ຍ (ເຮືອນຊົນເຜົ່າ), ມີບົດຟ້ອນ ແລະ ສຽງຂັບລຳ ທີ່ໂດດເດັ່ນ, ມີການບໍລິການປີ້ງໄກ່ນາປົ່ງ, ເຫຼົ້າຂາວເມືອງຄົງ ທີ່ລືຊື່ໂດດເດັ່ນ ແຕ່ແຫຼ່ງທ່ອງທ່ຽວດັ່ງກ່າວສາມາດເປີດໃຫ້ບໍລິການໄດ້ມີພຽງ 3-4 ແຫ່ງເທົ່ານັ້ນ ເຊັ່ນ: ແຫຼ່ງທ່ອງທ່ຽວຕາດເລາະ, ແຫຼ່ງທ່ອງທ່ຽວພູຜາສຸກ, ການທ່ອງທ່ຽວປະຊາຊົນມີສ່ວນຮ່ວມບ້ານສະນິມໃນ, ບ້ານຫ້ວຍຫູນ ແລະ ບ້ານນາປົ່ງ. ໃນປະຈຸບັນ ວຽກງານການທ່ອງທ່ຽວກຳລັງມີທ່າກ້າວການຂະຫຍາຍຕົວ ແລະ ເປັນຂະແໜງການໜຶ່ງທີ່ສຳຄັນໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ກໍ່ຄືຂອງແຂວງສູງສົມຄວນ, ສາມາດສ້າງວຽກເຮັດງານທຳໃຫ້ປະຊາຊົນທ້ອງຖິ່ນ, ສົ່ງເສີມວັດທະນະທຳອັນດີງາມ, ປົກປັກຮັກສາມູນມໍລະດົກແຫ່ງຊາດ ພ້ອມກັບການສ້າງລາຍຮັບເພີ່ມໃຫ້ປະຊາຊົນ. ສຳລັບແຂວງ ສາລະວັນແລ້ວ ການລົງທຶນພັດທະນາການທ່ອງທ່ຽວແຂວງ ໄດ້ສະໜອງງົບປະມານໃນການສ້າງພື້ນຖານໂຄງລ່າງ ເຊັ່ນ: ທາງ 15 A ແລະ B ແລະເສັ້ນທາງອື່ນໆ, ລະດົມນັກລົງທຶນໃນກິດຈະການພັກແຮມ ໂດຍສະເພາະເຂດຕາດເລາະ, ເຂດຈຸດແວ່ນາປົ່ງ, ການຍົກລະດັບດ່ານທຳມະຊາດໃຫ້ກາຍເປັນດ່ານສາກົນ ທາງເບື້ອງ ສສ ຫວຽດນາມ ແລະ ລາຊາອະນາຈັກໄທ ໃນອະນາຄົດລວມທັງຂົວຂ້າມແມ່ນ້ຳຂອງ ທີ່ເມືອງລະຄອນເພັງ ຫຼື ເມືອງຄົງເຊໂດນ ເພື່ອກຽມຄວາມພ້ອມເຂົ້າສູ່ປະຊາຄົມເສດຖະກິດອາຊຽນ ແລະ ເຮັດໃຫ້ການທ່ອງທ່ຽວເຊື່ອມໂຍງກັນໄດ້ (ວິໄສທັດຮອດປີ2030, 2015).

ໃນປີ 2020 ມີນັກທ່ອງທ່ຽວເຂົ້າມາທ່ຽວແຂວງສາລະວັນ 35,484 ເທື່ອຄົນ, ໃນນັ້ນນັກທ່ອງທ່ຽວພາຍໃນ 20,779 ເທື່ອຄົນ, ນັກທ່ອງທ່ຽວສາກົນ 3,116 ເທື່ອຄົນ, ນັກທ່ອງທ່ຽວຊາຍແດນ 11,589 ເທື່ອຄົນ. ມີລາຍຮັບຈາກການທ່ອງທ່ຽວທັງໝົດ 7,89 ລ້ານໂດລາສະຫະລັດ ທຽບໃສ່ແຜນການປີແມ່ນປະຕິບັດໄດ້ 49% (ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານຖ.ວ.ທແຂວງສາລະວັນ, 2020). ປັດຈຸບັນມີແຫຼ່ງທ່ອງທ່ຽວທີ່ໄດ້ຮັບການສຳຫຼວດລວມທັງໝົດ 96 ແຫ່ງ ຄື: ແຫຼ່ງທ່ອງທ່ຽວທຳມະຊາດ 53 ແຫ່ງ, ທາງປະຫວັດສາດ 6 ແຫ່ງ ແລະ ທາງວັດທະນະທຳ 37 ແຫ່ງ ໂດຍມີແຫຼ່ງທ່ອງທ່ຽວສຳຄັນທີ່ໄດ້ຮັບການປັບປຸງ ແລະ ຄຸ້ມຄອງຢູ່ 2ຈຸດຄື: ແຫຼ່ງທ່ອງທ່ຽວແບບອະນຸລັກອຸທິຍານພູຜາສຸກ ແລະ ແຫຼ່ງທ່ອງທ່ຽວຕາດເລາະ ຊຶ່ງປັດຈຸບັນນີ້ໄດ້ກໍ່ສ້າງສິ່ງອຳນວຍຄວາມສະດວກ ແລະ ພື້ນຖານໂຄງລ່າງບາງບ່ອນ (ບົດສະຫຼຸບແຜນພັດທະນາເສດຖະກິດ-ສັງຄົມ, 2020). ໃນປະຈຸບັນທົ່ວແຂວງ ມີໂຮງແຮມ 7 ແຫ່ງ, ເຮືອນພັກ 52 ແຫ່ງ, ຮ້ານອາຫານ 52 ແຫ່ງ ແລະ ບໍລິສັດທ່ອງທ່ຽວ 1 ບໍລິສັດ. ນອກນັ້ນ, ຍັງມີໂຮງແຮມ ແລະ ເຮືອນພັກ ໄດ້ຮັບການຈັດລຳດັບຂັ້ນດາວ ແລະ ດອກຈຳປາ (ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານຖ.ວ.ທແຂວງສາລະວັນ, 2020).

- ❖ **ທ່າແຮງ ແລະ ການຂະຫຍາຍຕົວຂອງການທ່ອງທ່ຽວເມືອງເລົ່າງາມ:** ການທ່ອງທ່ຽວອະນຸລັກແບບຍືນຍົງ ແລະ ປະຊາຊົນມີສ່ວນຮ່ວມໄດ້ຮັບການຈັດຕັ້ງປະຕິບັດເປັນຢ່າງດີຢູ່ພາຍໃນເມືອງ, ການເຊື່ອມໂຍງການທ່ອງທ່ຽວລະຫວ່າງເມືອງກັບເມືອງ ແມ່ນໄດ້ຮັບການຊຸກຍູ້ນັບມື້ນັບກວ້າງຂວາງ, ການພັດທະນາ, ການຄຸ້ມຄອງ, ການໂຄສະນາປະຊາສຳພັນ ແລະ ການຝຶກອົບຮົມການທ່ອງທ່ຽວ ກໍ່ໄດ້ຮັບການຈັດຕັ້ງປະຕິບັດເປັນຢ່າງເປັນຮູບປະທຳ. ນອກນັ້ນ, ທາງເມືອງຍັງໄດ້ເອົາໃຈໃສ່ສ້າງແຜນຍຸດທະສາດພັດທະນາການທ່ອງທ່ຽວ, ແຜນການດຳເນີນການທ່ອງທ່ຽວຂອງເມືອງ, ແຜນຄຸ້ມຄອງແຫຼ່ງທ່ອງທ່ຽວ, ຄົ້ນຄວ້າວິໄຈສ້າງແຜນພັດທະນາການທ່ອງທ່ຽວຄົບວົງຈອນ, ພ້ອມທັງກໍ່ສ້າງພື້ນຖານສິ່ງອຳນວຍຄວາມສະດວກ ເພື່ອຮອງຮັບໃຫ້ແກ່ນັກທ່ອງທ່ຽວທີ່ຈະເຂົ້າມາທ່ອງທ່ຽວພາຍໃນເມືອງ ໂດຍໄດ້ຍົກລະດັບຄຸນນະພາບການບໍລິການ ແລະ ຕິດຕາມຄຸ້ມຄອງບັນດາຫົວໜ່ວຍທຸລະກິດຜູ້ປະກອບການດ້ານການທ່ອງທ່ຽວໃນທົ່ວເມືອງ ໃຫ້ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວກັບວຽກງານການທ່ອງທ່ຽວ ແລະ ພ້ອມທັງໄດ້ສົ່ງພະນັກງານຜູ້ຮັບຜິດຊອບວຽກງານການທ່ອງທ່ຽວເຂົ້າຝຶກອົບຮົມການນຳທ່ຽວ ໂດຍສະເພາະການທ່ອງທ່ຽວແບບວິຖີຊີວິດຊາວບ້ານ ໂດຍປະຊາຊົນມີສ່ວນຮ່ວມ ແລະ ທ່ຽວຊົມທຳມະຊາດນາງໆພັນຕ່າງໆ (ບົດ

ສະຫຼຸບວຽກງານຖ.ວ.ທເມືອງເລົ່າງາມ, 2020).

ສຳລັບເມືອງເລົ່າງາມ ປະຈຸບັນມີການບໍລິການແຫຼ່ງທ່ອງທ່ຽວທັງໝົດ 38 ແຫ່ງ: ແຫຼ່ງທ່ອງທ່ຽວທາງທຳມະຊາດ 32 ແຫ່ງ, ແຫຼ່ງທ່ອງທ່ຽວທາງວັດທະນະທຳ 6 ແຫ່ງ, ທີ່ວເມືອງມີເຮືອນພັກ 5 ແຫ່ງ, ໂຮມສະເຕ 3 ແຫ່ງ, ຮ້ານອາຫານ 7 ແຫ່ງ ແລະ ຮ້ານກິນດື່ມ 8 ແຫ່ງ. ໃນປີ 2020 ມີນັກທ່ອງທ່ຽວເຂົ້າມາທ່ຽວທົ່ວເມືອງ 33.200 ເທື່ອຄົນ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 3,07% ແລະ ສາມາດສ້າງລາຍຮັບໃຫ້ທົ່ວສັງຄົມໄດ້ຫຼາຍກວ່າ 140.000 ໂດລາສະຫະລັດ (ບົດລາຍງານຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, 2020).

❖ **ຜົນການສຳຫຼວດຕົວແບບແຫຼ່ງທ່ອງທ່ຽວອະນຸລັກນິເວດວິທະຍາແບບປະຊາຊົນມີສ່ວນຮ່ວມ ໂຮມສະເຕ ບ້ານຫ້ວຍຫຸນໃຕ້ ເມືອງເລົ່າງາມ:** ທຸລະກິດໂຮມສະເຕເປັນຮູບແບບໜຶ່ງທີ່ສົ່ງເສີມການທ່ອງທ່ຽວໄດ້ດີ ເນື່ອງຈາກສ່ວນໃຫຍ່ນັກທ່ອງທ່ຽວເຂົ້າມາທ່ຽວປະເທດລາວເຮົາ ປັດໃຈທຳອິດຄືການໄດ້ພັກຜ່ອນ, ທ່ຽວຊົມທຳມະຊາດ, ວັດທະນາະທຳ ແລະ ຮີດຄອງປະເພນີດັ່ງເດີມຂອງລາວ. ສຳລັບການໃຫ້ບໍລິການຮູບແບບໂຮມສະເຕດັ່ງກ່າວ ກິດຈະກຳຫຼັກໆແມ່ນການກິນກາເຟ, ຍ່າງຊົມສວນກາເຟ, ຂາຍເຄື່ອງຫັດຖະກຳ ແລະ ກິດຈະກຳອື່ນໆ ອີກຫຼວງຫຼາຍ ພ້ອມທັງມີເຮືອນຊົນເຜົ່າໃຫ້ນັກທ່ອງທ່ຽວ ເຂົ້າທ່ຽວຊົມເບິ່ງຮີດຄອງປະເພນີນຳອີກດ້ວຍ. ຈາກການລົງເກັບກຳຂໍ້ມູນ ນຳເຈົ້າຂອງທຸລະກິດໂຮມສະເຕດັ່ງກ່າວ ໄດ້ເວົ້າເຖິງແຮງບັນດານໃຈທີ່ລິເລີ່ມເຮັດໂຮມສະເຕ ແມ່ນຍ້ອນໝູ່ຊາວຕ່າງປະເທດ ໄດ້ເຂົ້າມາທ່ອງທ່ຽວ ແລະ ໄດ້ແນະນຳໃຫ້ສ້າງໂຮມສະເຕຫຼັງນີ້ຂຶ້ນມາ ເພື່ອເປັນບ່ອນພັກເຊົາ ແລະ ສ້າງໃຫ້ກາຍເປັນແຫຼ່ງທ່ອງທ່ຽວ.

ທຸລະກິດໂຮມສະເຕດັ່ງກ່າວແມ່ນໄດ້ສ້າງຕັ້ງແຕ່ປີ 2012 ແລະ ເລີ່ມເປີດກິດຈະການ ປີ 2014 ໂດຍເປັນຮູບແບບທຸລະກິດຄອບຄົວ ບໍ່ມີການຈ້າງງານ ທຸກຢ່າງແມ່ນເລີ່ມຕົ້ນຈາກການຂະຫຍາຍທຸລະກິດໄປເທື່ອລະໜ້ອຍ ຊຶ່ງເຫັນໄດ້ວ່າການທ່ອງທ່ຽວແບບໂຮມສະເຕນັ້ນ ແມ່ນໄດ້ຮັບຄວາມນິຍົມ ແລະ ມີນັກທ່ອງທ່ຽວເຂົ້າມາຫຼາຍຂຶ້ນເລື້ອຍໆໃນທຸກໆປີ ໂດຍສະເພາະແມ່ນຊາວຕ່າງປະເທດ ທີ່ມັກທ່ຽວຊົມວິຖີຊີວິດຂອງປະຊາຊົນໃນຊຸມຊົນ ໂດຍສະເລ່ຍແລ້ວໃນ 1 ປີ ມີນັກທ່ອງທ່ຽວເຂົ້າມາຢ້ຽມຊົມ ແລະ ພັກເຊົາ ປະມານ 5.000 ຄົນ ສາມາດສ້າງລາຍຮັບໄດ້ປະມານ 50-60 ລ້ານກີບ/ປີ ແລະ ປະຊາຊົນໃນເຂດນັ້ນກໍ່ໄດ້ມີການຮ່ວມມືໃນການປົກປັກຮັກສາຮີດຄອງປະເພນີ ແລະ ຮັກສາສິ່ງແວດລ້ອມຊ່ວຍກັນ ເຊັ່ນ: ປະຊາຊົນຍັງຮັກສາການຕຳສົ້ນແຜ່ນແພທີ່ເປັນເອກະລັກວັດທະນະທຳດັ່ງເດີມໄວ້ເປັນປົກກະຕິ ແລະ ມີການປົກປັກຮັກສາສະພາບແວດລ້ອມຮ່ວມກັນ.

ສຳລັບຂໍ້ຫຍຸ້ງຍາກຂອງການທ່ອງທ່ຽວໂຮມສະເຕດັ່ງກ່າວ ເຫັນວ່າ: ສ່ວນໃຫຍ່ປະຊາຊົນແມ່ນຍັງບໍ່ເຂົ້າໃຈໃນການໄດ້ຮັບຜົນປະໂຫຍດຈາກການທ່ອງທ່ຽວດີເທົ່າທີ່ຄວນ. ສະນັ້ນ, ທາງພາກລັດ ແລະ ຜູ້ປະກອບການໂຮມສະເຕ ຕ້ອງໄດ້ເອົາໃຈໃສ່ ເພື່ອໃຫ້ປະຊາຊົນມີສ່ວນຮ່ວມຫຼາຍກວ່ານີ້ ແລະ ໃຫ້ເຂົາເຈົ້າມີກິດຈະກຳຮ່ວມກັນເພື່ອສ້າງລາຍຮັບໃຫ້ເຂົາເຈົ້າ.

4.3.3 ສະພາບການທ່ອງທ່ຽວແຂວງຫຼວງນໍ້າທາ

❖ **ທ່າແຮງ ແລະ ການຂະຫຍາຍຕົວຂອງການທ່ອງທ່ຽວແຂວງຫຼວງນໍ້າທາ:** ພາຍຫຼັງໄດ້ສ້າງຕັ້ງຫ້ອງການທ່ອງທ່ຽວແຂວງ ແລະ ໜ່ວຍງານທ່ອງທ່ຽວເມືອງຂຶ້ນ ໃນປີ 1994 ການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວຢູ່ແຂວງຫຼວງນໍ້າທາ ກໍ່ເລີ່ມມີໜໍ່ແໜງຂຶ້ນ ແລະ ບັນຍາກາດຂອງການທ່ອງທ່ຽວເລີ່ມຕົ້ນເປັນຕົນເປັນໂຕຂຶ້ນມາ. ມາໃນປີ 1996-1997 ອົງການທ່ອງທ່ຽວແຫ່ງຊາດ ສົມທົບກັບອົງການຢູເນັດສະໂກ ໄດ້ສຶກສາຄວາມເປັນໄປໄດ້ໃນການພັດທະນາໂຄງການທ່ອງທ່ຽວແບບອະນຸລັກນໍ້າຫ້າ ແລະ ຕໍ່ມາໃນປີ 1999-2002 ໂຄງການທ່ອງທ່ຽວອະນຸລັກນໍ່າຫ້າ

"NamHa Eco-Tourism Project (NHETP)" ກໍ່ໄດ້ຖືກຈັດຕັ້ງປະຕິບັດໂດຍການຮ່ວມມືລະຫວ່າງອົງການທ່ອງທ່ຽວແຫ່ງຊາດ ກັບ ອົງການຢູເນັດສະໂກ ພາຍໃຕ້ການສະໜັບສະໜູນທຶນ ຈາກລັດຖະບານນິວຊີແລນ ແລະ ຍີ່ປຸ່ນ ໂດຍຜ່ານສະຖາບັນການເງິນລະຫວ່າງປະເທດ "International Finance Corporation". ໂຄງການດັ່ງກ່າວ ໄດ້ປູພື້ນຖານຊຸກຍູ້ໃຫ້ພາກສ່ວນທຸລະກິດ ເຮັດໃຫ້ມີຄວາມກະຕືລືລົ້ນໃນການເຂົ້າຮ່ວມການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວດ້ວຍຄວາມຕັ້ງໜ້າ ແລະ ມີຜົນສຳເລັດຕະຫຼອດມາ.

ພາຍຫຼັງເປີດການທ່ອງທ່ຽວລາວ 1999-2000 ວຽກງານທ່ອງທ່ຽວຢູ່ແຂວງຫຼວງນ້ຳທາ ໄດ້ມີການຂະຫຍາຍຕົວຢ່າງກວ້າງຂວາງ ແລະ ມີລັກສະນະເຕີບໂຕຢ່າງວ່ອງໄວ. ໃນແຕ່ລະສະໄໝກອງປະຊຸມໃຫຍ່ອົງຄະນະພັກແຂວງ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ກໍ່ໄດ້ໃຫ້ຄວາມສຳຄັນແກ່ວຽກງານທ່ອງທ່ຽວ ໂດຍໄດ້ກຳນົດເອົາວຽກງານທ່ອງທ່ຽວເຂົ້າໃນແຜນຍຸດທະສາດການພັດທະນາເສດຖະກິດ-ສັງຄົມແຂວງ. ດ້ວຍສະພາບແວດລ້ອມຂອງແຂວງຫຼວງນ້ຳທາ ທີ່ມີຄວາມອຸດົມສົມບູນທາງດ້ານຊັບພະຍາກອນທຳມະຊາດ, ມີຄວາມຫຼາກຫຼາຍທາງດ້ານສີສັນວັດທະນາທຳຊົນເຜົ່າ ແລະ ທີ່ຕັ້ງຍຸດທະສາດທີ່ເຊື່ອມໂຍງກັບເຂດອານຸພາກພື້ນຂອງແມ່ນ້ຳຂອງ ເຮັດໃຫ້ທີມີການດຶງດູດເອົານັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ເຂົ້າມາລົງທຶນພັດທະນາວຽກງານທ່ອງທ່ອງ ເປັນຕົ້ນແມ່ນ: ນັກລົງທຶນຈາກ ສປ. ຈີນ ເຂົ້າມາສຳປະທານພັດທະນາເຂດເສດຖະກິດ ບໍ່ເຕັນແດນງາມ ຊຶ່ງມີມູນຄ່າການລົງທຶນ 500 ລ້ານໂດລາສະຫະລັດ (ໃນນີ້ມີແຜນປະຕິບັດພັດທະນາແຫຼ່ງທ່ອງທຳມະນາດ 4 ແຫ່ງ, ວັດທະນະທຳ 1 ແຫ່ງ, ສວນສາທາລະນະ 1 ແຫ່ງ, ສະໜາມກ໊ອຟ, ໂຮງແຮມ-ລີສອດສະດັບ 5 ດາວ ອີກຈຳນວນໜຶ່ງ), ສຳລັບນັກທຸລະກິດລາວກໍ່ໄດ້ລົງທຶນສ້າງຕັ້ງບໍລິສັດ-ໜ່ວຍບໍລິການນຳທ່ຽວ, ໂຮງແຮມ-ຣີສອດ, ເຮືອນພັກ, ຮ້ານບັນເທີງ, ພັດທະຄານ, ຮ້ານອາຫານ, ສວນອາຫານ, ຮ້ານກິນດື່ມ, ສະຖານທີ່ທ່ອງທ່ຽວ ແລະ ສູນຂໍ້ມູນຂ່າວສານການທ່ອງທ່ຽວ. ພ້ອມກັນນັ້ນ, ກໍ່ໄດ້ສົ່ງເສີມປະຊາຊົນມີສ່ວນຮ່ວມໃນການພັດທະນາການທ່ອງທ່ຽວແບບອະນຸລັກ, ສ້າງທີ່ພັກແຮມ ແລະ ຜະລິດສິນຄ້າທີ່ລະນຶກ (ວິໄສທັດປີ2035,ແຜນຍຸດທະສາດປີ2030, 2020).

ໃນ 5 ປີທີ່ຜ່ານມາ (2016-2020) ແຂວງຫຼວງນ້ຳທາມີນັກທ່ອງທ່ຽວເຂົ້າມາ ແລະ ທ່ອງທ່ຽວ 3.188.630 ເທື່ອຄົນ ທຽບໃສ່ 5 ປີຜ່ານມາ ເພີ່ມຂຶ້ນ 11,14% ສ້າງລາຍຮັບທາງກົງ ແລະ ທາງອ້ອມໄດ້ 15 ລ້ານກວ່າໂດລາສະຫະລັດ ເພີ່ມຂຶ້ນ 12,40%, ມີນັກທ່ອງທ່ຽວເຂົ້າມາຊົມໃຊ້ລາຍການທ່ອງທ່ຽວຊົມທຳມະຊາດ ແລະ ວິຖີຊີວິດໂດຍສະເພາະແມ່ນເຂດປ່າສະຫງວນແຫ່ງຊາດນ້ຳຫ້າ ມີທັງໝົດ 42.652 ເທື່ອຄົນ, ສ້າງລາຍຮັບໃຫ້ແກ່ປະຊາຊົນທ້ອງຖິ່ນ 4,2 ລ້ານໂດລາສະຫະລັດ (ທຽບໃສ່ 5 ປີຜ່ານມາ ເພີ່ມຂຶ້ນ 10,57%) ຊຶ່ງໄດ້ປະກອບສ່ວນສ້າງລາຍຮັບ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ທີ່ມີສ່ວນຮ່ວມກັບການທ່ອງທ່ຽວໃຫ້ດີຂຶ້ນເທື່ອລະກ້າວ. ປະຈຸບັນທົ່ວແຂວງໄດ້ຂຶ້ນບັນຊີຊັບພະຍາກອນ ແລະ ແຫຼ່ງທ່ອງທ່ຽວທົ່ວແຂວງ ທັງໝົດ 109 ແຫ່ງ, ໃນນີ້ ມີແຫຼ່ງທ່ອງທ່ຽວທຳມະຊາດ 5 ແຫ່ງ, ແຫຼ່ງທ່ອງທ່ຽວວັດທະນະທຳ 44 ແຫ່ງ ແລະ ແຫຼ່ງທ່ອງທ່ຽວປະຫວັດສາດ 10 ແຫ່ງ. ນັບແຕ່ປີ 2016 ຫາປະຈຸບັນ ມີນັກທ່ອງທ່ຽວເຂົ້າ ແລະ ຜ່ານແຂວງຫຼວງນ້ຳທາ ທັງໝົດ 3,188 ລ້ານເທື່ອຄົນ ທຽບໃສ່ 5 ປີຜ່ານມາ ເພີ່ມຂຶ້ນ 2,40%, ຖ້າທຽບໃສ່ແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ VIII ຂອງແຂວງ (2016-2020) ທີ່ຮັບຮອງໂດຍຜູ້ແທນກອງປະຊຸມໃຫຍ່ຄັ້ງທີ VII ຂອງອົງຄະນະພັກແຂວງ ເພີ່ມຂຶ້ນ 2,87% (ແຜນພັດທະນາແລະສົ່ງເສີມການທ່ອງທ່ຽວ5ປີ(2021-2025), 2020).

❖ **ຍຸດທະສາດພັດທະນາວຽກງານທ່ອງທ່ຽວຂອງແຂວງ (2021-2030)** (ຍຸດທະສາດຮອດປີ2030, 2020)

1. ພັດທະນາການທ່ອງທ່ຽວດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດຂອງແຂວງຫຼວງນ້ຳທາ ໂດຍການມີສ່ວນຮ່ວມຂອງປະຊາຊົນ ຕາມທິດສີຂຽວ ແລະ ໃຫ້ມີຄວາມຍືນຍົງ.

2. ເຮັດໃຫ້ແຂວງຫຼວງນໍ້າທາ ເປັນປະຕູຕ້ອນຮັບນັກທ່ອງທ່ຽວຈາກ ສປ ຈີນ, ມີຄວາມສາມາດເຊື່ອມໂຍງການທ່ອງທ່ຽວກັບບັນດາແຂວງ, ໃນປະເທດພາກພື້ນ ແລະ ສາກົນ ເປັນຕົ້ນ: ສປ ຈີນ, ສສ ຫວຽດນາມ ແລະ ໄທ. ກາຍເປັນຈຸດໝາຍປາຍທາງຂອງນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ເຂົ້າມາທ່ອງທ່ຽວນັບມື້ນັບຫຼາຍຂຶ້ນ.

3. ສ້າງແຜນພັດທະນາແຫຼ່ງທ່ອງທ່ຽວ "ສຳຫຼວດ, ຈັດສັນ, ປັກຫຼັກໝາຍ ແລະ ອອກແບບ" ພ້ອມທັງປັບປຸງສິ່ງທີ່ມີແລ້ວໃຫ້ມີຄຸນນະພາບ ແລະ ພັດທະນາແຫຼ່ງທ່ອງທ່ຽວໃໝ່ ໃຫ້ສາມາດຕອບສະໜອງກັບຄວາມຕ້ອງການຂອງນັກທ່ອງທ່ຽວ, ເນັ້ນການບໍລິການໃຫ້ໄດ້ມາດຕະຖານລະດັບຊາດ ແລະ ອາຊຽນ ເທື່ອລະກ້າວ.

4. ສົ່ງເສີມໃຫ້ພາກລັດ, ພາກເອກະຊົນພາຍໃນ ແລະ ຕ່າງປະເທດ ມາລົງທຶນເຂົ້າໃນການພັດທະນາການທ່ອງທ່ຽວ ຄື: ສະຖານທີ່ທ່ອງທ່ຽວ, ທີ່ພັກແຮມ, ສະຖານທີ່ບໍລິການອາຫານ, ສະຖານທີ່ບັນເທີງ, ການບໍລິການຂົນສົ່ງໂດຍສານ ທີ່ໄດ້ມາດຕະຖານ, ສະຖານທີ່ອົບນວດ (ນວດແຜນບູຮານ), ປັບປຸງຜະລິດຕະພັນການທ່ອງທ່ຽວທີ່ມີແລ້ວໃຫ້ມີຄຸນນະພາບ ແລະສ້າງຜະລິດຕະພັນໃໝ່ອື່ນໆ ໃຫ້ມີຄວາມຫຼາກຫຼາຍທັງທາງດ້ານປະລິມານ ແລະ ຄຸນນະພາບ, ຮັກສາໄດ້ມໍລະດົກວັດທະນະທຳ ທີ່ເປັນເອກະລັກຂອງທ້ອງຖິ່ນ.

5. ພັດທະນາການທ່ອງທ່ຽວ, ຄຸ້ມຄອງການທ່ອງທ່ຽວ, ໂຄສະນາ ແລະ ສົ່ງເສີມການທ່ອງທ່ຽວໃຫ້ກາຍເປັນບູລິມະສິດໜຶ່ງຂອງເສດຖະກິດປະກອບສ່ວນສ້າງລາຍຮັບທາງກົງ-ທາງອ້ອມໃຫ້ແກ່ທ້ອງຖິ່ນເພື່ອຫຼຸດຜ່ອນຄວາມທຸກຍາກໃຫ້ແກ່ປະຊາຊົນແຂວງຫຼວງນໍ້າທາ.

6. ປັບປຸງ ແລະ ສ້າງນິຕິກຳຄຸ້ມຄອງວຽກງານການທ່ອງທ່ຽວ, ມາດຕະຖານການທ່ອງທ່ຽວຂອງແຂວງ ແລະ ລະບຽບການທ່ອງທ່ຽວທີ່ຈຳເປັນ, ພ້ອມທັງຈັດຕັ້ງການເຜີຍແຜ່ໃຫ້ທົ່ວເຖິງດ້ວຍຫຼາຍຮູບຫຼາຍແບບ. ດຳເນີນການກວດກາ ແລະ ປະເມີນຜົນ ບັນດາຫົວໜ່ວຍທຸລະກິດບໍລິການທີ່ກ່ຽວຂ້ອງກັບການທ່ອງທ່ຽວ ເພື່ອຈັດລະດັບມາດຕະຖານ ແລະ ລະດັບປະເພດ ຢ່າງພາວະວິໄສ. ເປັນການຢັ້ງຢືນກ່ຽວກັບມາດຕະຖານ ແລະ ປະເພດລະດັບແຂວງ, ປະເທດ ແລະ ລະດັບພາກພື້ນ, ພ້ອມທັງໃຊ້ມາດຕະການຕໍ່ຜູ້ລະເມີດລະບຽບການຢ່າງເຂັ້ມງວດ ແລະ ມີນະໂຍບາຍຕໍ່ຜູ້ມີຜົນງານຕາມລະບຽບການ.

7. ປັບປຸງກົນໄກການບໍລິຫານຄຸ້ມຄອງທຸລະກິດບໍລິການທ່ອງທ່ຽວ ແລະ ທຸລະກິດທີ່ຕິດພັນກັບການທ່ອງທ່ຽວໃຫ້ມີປະສິດທິພາບ. ສະກັດກັ້ນປະກົດການຫຍໍ້ທໍ້ຕ່າງໆທີ່ຈະສົ່ງຜົນກະທົບທາງລົບຕໍ່ວຽກງານການທ່ອງທ່ຽວ, ເຮັດໃຫ້ວຽກງານທ່ອງທ່ຽວມີສະຖຽນລະພາບ, ຮັບປະກັນຄວາມສະຫງົບ, ຄວາມປອດໄພຕໍ່ຊີວິດ ແລະ ຊັບສິນຂອງນັກທ່ອງທ່ຽວ ກໍ່ຄືຜູ້ປະກອບການທຸລະກິດທ່ອງທ່ຽວ.

8. ປັບປຸງເນື້ອໃນການໂຄສະນາການທ່ອງທ່ຽວໃຫ້ເປັນລະບົບ ແລະ ສົມບູນ ທັງພາສາລາວ, ພາສາອັງກິດ ແລະ ພາສາຈີນ ພ້ອມທັງນຳມາໂຄສະນາຜ່ານສິ່ງສື່ພິມ ແລະ ສື່ອີເລັກໂທນິກໃຫ້ເຂົ້າເຖິງກຸ່ມຕະຫຼາດເປົ້າໝາຍ, ສ້າງສິ່ງອຳນວຍຄວາມສະດວກພາຍໃນແຫຼ່ງທ່ອງທ່ຽວ ແລະ ສະຖານທີ່ທ່ອງທ່ຽວ ໂດຍການສ້າງປ້າຍຊີ້ບອກທາງ, ປ້າຍນຳສະເໜີຂໍ້ມູນການທ່ອງທ່ຽວ, ປັບປຸງ ແລະ ສ້າງຫ້ອງຂໍ້ມູນຂ່າວສານການທ່ອງທ່ຽວບ່ອນທີ່ມີເງື່ອນໄຂ ພ້ອມທັງປະກອບອຸປະກອນຄົບຊຸດ.

9. ສົ່ງເສີມກິດຈະກຳການທ່ອງທ່ຽວ ໂດຍເຂົ້າຮ່ວມງານວາງສະແດງຜະລິດຕະພັນການທ່ອງທ່ຽວ ແລະ ເຄື່ອງຫັດຖະກຳ ຢູ່ພາຍໃນແຂວງ, ບັນດາແຂວງ ແລະ ຕ່າງປະເທດ. ສົ່ງເສີມການຈັດງານເທດສະການ, ນິທັດສະການ, ງານບຸນປະເພນີຂອງປະຊາຊົນບັນດາເຜົ່າພາຍໃນແຂວງໃຫ້ເປັນປົກກະຕິ, ສົ່ງເສີມການຜະລິດເຄື່ອງທີ່ລະນຶກ ແລະ ຫັດຖະກຳຂອງທ້ອງຖິ່ນໃຫ້ກວ້າງຂວາງ.

10. ສ້າງແຜນຍຸດທະສາດການຕະຫຼາດ, ການສຶກສາ ແລະ ວິໄຈກຸ່ມເປົ້າໝາຍການທ່ອງທ່ຽວ ສຳລັບແຂວງຫຼວງນ້ຳທາ ທັງຕະຫຼາດເກົ່າ ແລະ ຕະຫຼາດໃໝ່ ເພື່ອເປັນບ່ອນອີງໃນການພັດທະນາການທ່ອງທ່ຽວໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ.
11. ຈັດຕັ້ງການເກັບເງິນກອງທຶນການທ່ອງທ່ຽວໃຫ້ໄດ້ຕາມແຜນການທີ່ວາງໄວ້, ຄຸ້ມຄອງເງິນກອງທຶນການທ່ອງທ່ຽວໃຫ້ເຂົ້າສູ່ລະບົບ, ນຳໃຊ້ເງິນກອງທຶນການທ່ອງທ່ຽວຢ່າງມີຈຸດສຸມ ແລະ ຖືກເປົ້າໝາຍ. ປັບປຸງ ແລະ ກໍ່ສ້າງຕະຫຼາດກາງຄືນໃໝ່ຢູ່ບັນດາເມືອງທີ່ມີເງື່ອນໄຂ ພ້ອມທັງຄຸ້ມຄອງ-ບໍລິຫານຕະຫຼາດກາງຄືນ ໃຫ້ມີປະສິດທິພາບ ແລະ ຍືນຍົງ.
12. ພັດທະນາບຸກຄະລະກອນໃນຂະແໜງການທ່ອງທ່ຽວ ທັງພາກລັດ, ພາກທຸລະກິດ ແລະ ປະຊາຊົນຜູ້ທີ່ມີສ່ວນຮ່ວມກັບການທ່ອງທ່ຽວທັງໄລຍະສັ້ນ, ກາງ ແລະ ຍາວ ໃຫ້ມີຄຸນນະພາບ, ສາມາດຄຸ້ມຄອງບໍລິຫານດ້ານມະຫາພາກ ແລະ ຕອບສະໜອງການບໍລິການ ທີ່ປະທັບໃຈແກ່ນັກທ່ອງທ່ຽວ.

❖ **ທ່າແຮງ ແລະ ການຂະຫຍາຍຕົວຂອງການທ່ອງທ່ຽວເມືອງຫຼວງນ້ຳທາ:** ເມືອງຫຼວງນ້ຳທາຕັ້ງຢູ່ທິດຕາເວັນອອກຂອງແຂວງຫຼວງນ້ຳທາ ທັງເປັນທີ່ຕັ້ງຂອງເທດສະບານແຂວງ, ມີເນື້ອທີ່ທັງໝົດ 230.400 ເຮັກຕາ (ເນື້ອທີ່ເຂດພູດອຍ ກວມ 75%), ມີເນື້ອທີ່ປ່າສະຫງວນ 112.910 ເຮັກຕາ, ເນື້ອທີ່ປ່າປ້ອງກັນ 62.910 ເຮັກຕາ, ເນື້ອທີ່ປ່າຜະລິດ 11.000 ເຮັກຕາ. ມີປະຕູດ່ານອອກໄປສູ່ຕ່າງປະເທດ 1 ດ່ານ ຄື: ດ່ານສາກົນບໍ່ເຕ່ນ ໄປຫາ ສ ປ ຈີນ; (ສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, 2020). ທົ່ວເມືອງຫຼວງນ້ຳທາມີແຫຼ່ງທ່ອງທ່ຽວທັງໝົດ 19 ແຫ່ງ: ແຫຼ່ງທ່ອງທ່ຽວທາງດ້ານທຳມະຊາດ ມີ 9 ແຫ່ງ (ສຳຫຼວດແລ້ວ 6 ແຫ່ງ ແລະ ເປີດບໍລິການແລ້ວ 3 ແຫ່ງ), ແຫຼ່ງທ່ອງທ່ຽວທາງດ້ານວັດທະນະທຳ ມີ 8 ແຫ່ງ (ໄດ້ສຳຫຼວດ ແລະ ເປີດບໍລິການໝົດແລ້ວ), ແຫຼ່ງທ່ອງທ່ຽວປະຫວັດສາດມີ 2 ແຫ່ງ (ສຳຫຼວດແລ້ວ 2 ແຫ່ງ ແຕ່ບໍ່ທັນໄດ້ພັດທະນາເປັນສະຖານທີ່ທ່ອງທ່ຽວເທື່ອ). ໃນປີ 2020 ມີນັກທ່ອງທ່ຽວຜ່ານດ່ານ, ສະໜາມບິນ, ຄິວລົດ ແລະ ພັກແຮມ ໄດ້ທັງໝົດ 200.986 ຄົນ (ຄົນລາວ 108.965 ຄົນ ແລະ ຄົນຕ່າງປະເທດ 92.021 ຄົນ) ສາມາດສ້າງລາຍຮັບທາງກົງ ແລະ ທາງອ້ອມໄດ້ທັງໝົດ 7.804.726 ໂດລາສະຫະລັດ (ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານຖ.ວ.ທປະຈຳປີ, 2020).

❖ **ຜົນການສຳຫຼວດຕົວແບບແຫຼ່ງທ່ອງທ່ຽວນິເວດວິທະຍາແບບປະຊາຊົນມີສ່ວນຮ່ວມ ບ້ານນາລັນ ເມືອງຫຼວງນ້ຳທາ ແຂວງຫຼວງນ້ຳທາ:** ເຫັນວ່າພາຍໃນແຂວງໄດ້ມີຄວາມເອົາໃຈໃສ່ໃນການພັດທະນາການທ່ອງທ່ຽວອະນຸລັກນິເວດວິທະຍາ ໂດຍສະເພາະການສ້າງແຫຼ່ງທ່ອງທ່ຽວອະນຸລັກນິເວດວິທະຍາແບບປະຊາຊົນມີສ່ວນຮ່ວມ ຢູ່ບ້ານນາລັນ ຊຶ່ງທາງທີມງານຄົ້ນຄວ້າຂອງພວກເຮົາ ກໍ່ໄດ້ຍົກເອົາບ້ານດັ່ງກ່າວເປັນກໍລະນີສຶກສາໃນຄັ້ງນີ້: ບ້ານນາລັນໄດ້ມີການພັດທະນາການທ່ອງທ່ຽວຕັ້ງແຕ່ປີ 1999 ໃນເບື້ອງຕົ້ນໄດ້ຮັບທຶນສະໜັບສະໜູນການທ່ອງທ່ຽວຈາກໂຄງການພັດທະນາການທ່ອງທ່ຽວແບບອະນຸລັກນ້ຳທາ ເຊິ່ງໄດ້ສ້າງເປັນເຮືອນພັກລວມບ້ານ ໂດຍມີການຈັດຕັ້ງອອກເປັນກຸ່ມບໍລິການຄື: ກຸ່ມບໍລິການເຮືອນພັກແຮມ, ກຸ່ມແຕ່ງກິນ, ກຸ່ມພະນັກງານນຳທ່ຽວ. ໃນໄລຍາຜ່ານມາ ບ້ານດັ່ງກ່າວໄດ້ຮັບຄວາມນິຍົມຈາກນັກທ່ອງທ່ຽວຈຳນວນຫຼວງຫຼາຍ ໂດຍສະເພາະຈາກນັກທ່ອງທ່ຽວຕ່າງປະເທດ ແລະ ໄດ້ກາຍເປັນບ້ານຕົ້ນແບບໃນການເຮັດວຽກການບໍລິການທ່ອງທ່ຽວອະນຸລັກແບບປະຊາຊົນມີສ່ວນຮ່ວມຂອງປະເທດລາວ. ມາຮອດປີ 2017 ບ້ານດັ່ງກ່າວ ໄດ້ປ່ຽນຮູບແບບການບໍລິການເຮືອນລວມບ້ານ ມາເປັນເຮືອນພັກແຮມກັບປະຊາຊົນ ເຮັດໃຫ້ບ້ານດັ່ງກ່າວ ໄດ້ຮັບການຢັ້ງຢືນວ່າເປັນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ, ພ້ອມທັງໄດ້ຮັບການຢັ້ງຢືນເປັນເຮືອນພັກແຮມມາດຕະຖານຂອງແຂວງຫຼວງນ້ຳທາ.

ປັດຈຸບັນ ການພັດທະນາການທ່ອງທ່ຽວໄດ້ຮັບການພັດທະນາຂຶ້ນເລື້ອຍໆມາ ປະຊາຊົນມີສ່ວນຮ່ວມເຮັດກິດຈະກຳຫຼາຍໆຢ່າງເປັນຕົ້ນແມ່ນ: ສ້າງໂຮມສະເຕໃຫ້ນັກທ່ອງທ່ຽວມາພັກເຊົາ ຊຶ່ງມີທັງໝົດ 14 ຫຼັງ, ສາມາດສ້າງ

ລາຍຮັບໃຫ້ກັບປະຊາຊົນໄດ້ເປັນຢ່າງດີ ສະເລ່ຍລາຍຮັບສະເພາະທຸລະກິດໂຮມສະເຕ ແມ່ນຢ່າງຕໍ່າຫຼັງລະ 800,000-1,000,000 ກີບ/ເດືອນ ແລະ ມີກິດຈະກໍາແມ່ນພານັກທ່ອງທ່ຽວຊົມການສະແດງສິນລະປະ, ຍິງໜ້າເກັກ, ຕໍາເຂົ້າ, ຟ້ອນດາບ, ຕີເຫັກ ແລະ ອື່ນໆ ຊຶ່ງປະຊາຊົນພາຍໃນບ້ານໄດ້ແບ່ງຫນ້າທີ່ກັນຈັດແບ່ງເປັນກຸ່ມ ເຊັ່ນ: ກຸ່ມນໍາທ່ຽວ, ກຸ່ມແຕ່ງກິນ, ກຸ່ມຮັກສາເຮືອນພັກ ແລະ ກຸ່ມສິນລະປະ ແລະ ສິ່ງສໍາຄັນກວ່ານັ້ນ ແມ່ນປະຕິບັດໃຫ້ຮູ້ເຖິງການທ່ອງທ່ຽວແບບທໍາມະຊາດໄປພ້ອມໆກັນ. ສໍາລັບສະຖິຕິຂອງຈໍານວນນັກທ່ອງທ່ຽວທີ່ເຂົ້າມາທ່ອງທ່ຽວໃນບ້ານນາລັນ ແມ່ນເຫັນວ່າມີການຂະຫາຍຕົວຂຶ້ນເລື້ອຍໆ ໃນປີ 2017 ມີຈໍານວນນັກທ່ອງທ່ຽວເຂົ້າມາທ່ຽວ ທັງໝົດປະມານ 1.231 ຄົນ ສ້າງລາຍຮັບເຂົ້າບ້ານປະມານ 72 ລ້ານກີບ, ປີ 2018 ມີນັກທ່ອງທ່ຽວເຂົ້າມາທ່ອງທ່ຽວປະມານ 1.016 ຄົນ ແລະ ປີ 2019 ມີນັກທ່ອງທ່ຽວເຂົ້າມາທ່ອງທ່ຽວປະມານ 1.869 ຄົນ ພ້ອມທັງສ້າງລາຍຮັບເຂົ້າບ້ານ 205 ລ້ານກີບ.

### 4.4 ສະຫຼຸບຜົນການຄົ້ນຄວ້າການທ່ອງທ່ຽວອະນຸລັກນິເວດວິທະຍາແບບປະຊາຊົນມີສ່ວນຮ່ວມ

ຈາການລົງເກັບກໍາຂໍ້ມູນຕົວຈິງຈາກການປຶກສາຫາລືກັບອໍານາດການປົກຄອງຂັ້ນແຂວງ, ຂັ້ນເມືອງ ແລະ ສະຖານທີ່ ທີ່ຕິດພັນກັບການທ່ອງທ່ຽວຂອງເຂດກໍລະນີສຶກສາ ພົບວ່າ:

**<u>ຈຸດດີ ແລະ ທ່າແຮງບົ່ມຊ້ອນ:</u>**

– ສະພາບພື້ນທີ່ ແມ່ນຍັງຮັກສາໄດ້ເຖິງຄວາມອຸດົມສົມບູນທາງທໍາມະຊາດ ແລະ ມີທ່າແຮງດ້ານກະສິກໍາປອດສານພິດ ຍ້ອນຄຸນນະພາບຂອງດິນທີ່ຍັງອຸດົມສົມບູນ ແລະ ສະພາບດິນຟ້າອາກາດເອື້ອອໍານວຍ, ພ້ອມນັ້ນອໍານາດການປົກຄອງກໍ່ຍັງໄດ້ເອົາໃຈໃສ່ໃນການພັດທະນາການທ່ອງທ່ຽວເປັນຢ່າງດີ ໂດຍສະເພາະໄດ້ອະນຸຍາດໃຫ້ນັກລົງທຶນພາຍໃນ ແລະ ຕ່າງປະເທດ ເຂົ້າມາລົງທຶນພັດທະນາແຫຼ່ງທ່ອງທ່ຽວຫຼາຍແຫ່ງ ບົນພື້ນຖານການລົງທຶນຂອງພາກທຸລະກິດ. ນອກຈາກນັ້ນ, ອໍານາດການປົກຄອງຂັ້ນແຂວງ ແລະ ເມືອງ ກໍ່ໄດ້ຊຸກຍູ້ໃຫ້ປະຊາຊົນໃນທ້ອງຖິ່ນເຂົ້າມາມີສ່ວນຮ່ວມໃນການພັດທະນາບັນດາແຫຼ່ງທ່ອງທ່ຽວ ຕົວຢ່າງໃນເມືອງປາກຊ່ອງ ແຂວງຈໍາປາສັກ ໄດ້ພັດທະນາແຫຼ່ງທ່ອງທ່ຽວກຸ່ມຕາດບ້ານໜອງຫຼວງ, ກຸ່ມຕາດແຫຼ່ງທ່ອງທ່ຽວພູກ້ອນເສົ້າ ເຂດບ້ານຫຼັກ 33, ຈຸດຊົມວິວດ້ານສະຫວັນແກ່ງລູ, ກຸ່ມຕາດເຜົ່າສໍາພັນ ບ້ານໜອງເທືອມ ແລະ ຈຸດຊົມວິວປາກພູໄຟເທວະດາ ໃຫ້ເປັນການທ່ອງທ່ຽວອະນຸລັກແບບມີຄວາມຍືນຍົງ.

– ວຽກງານການທ່ອງທ່ຽວທາງທໍາມະຊາດ, ວັດທະນະທໍາ, ປະຫວັດສາດ ແລະ ປະຊາຊົນມີສ່ວນຮ່ວມ ແມ່ນໄດ້ຮັບການຈັດຕັ້ງປະຕິບັດເປັນຢ່າງດີ, ການທ່ອງທ່ຽວລະຫວ່າງເມືອງກັບເມືອງ ແມ່ນມີການເຊື່ອມໂຍງ ແລະ ຊຸກຍູ້ສົ່ງເສີມການທ່ອງທ່ຽວນັບມື້ນັບກວ້າງຂວາງ, ການພັດທະນາ, ການເຜີຍແຜ່, ການຄຸ້ມຄອງ, ການປະຊາສໍາພັນ ແລະ ການຝຶກອົບຮົມການທ່ອງທ່ຽວ ກໍ່ໄດ້ຮັບການຈັດຕັ້ງປະຕິບັດເປັນຢ່າງຕໍ່ເນື່ອງ. ນອກຈາກນັ້ນ, ການໃຫ້ບໍລິການດ້ານການທ່ອງທ່ຽວທີ່ໄດ້ມີການປັບປຸງໃຫ້ສະດວກສະບາຍຂຶ້ນກວ່າແຕ່ກ່ອນເຊິ່ງກໍ່ເປັນປັດ ໃຈທີ່ສໍາຄັນທີ່ສາມາດດຶງດູດນັກທ່ອງທ່ຽວ ເປັນຕົ້ນແມ່ນ ການສ້າງສິ່ງທີ່ອໍານວຍຄວາມສະດວກດ້ານທີ່ພັກໂຮງແຮມ, ຮ້ານອາຫານ ແລະ ລີສອດແບບໂຮມສະເຕ ໃນຂອບເຂດເມືອງ.

– ໂຄງລ່າງພື້ນຖານສໍາລັບການທ່ອງທ່ຽວຫຼາຍຢ່າງ ແມ່ນໄດ້ຮັບການປັບປຸງໃຫ້ສະດວກສະບາຍຂຶ້ນ ໂດຍສະເພາະແມ່ນເສັ້ນທາງເຂົ້າຫາແຫຼ່ງທ່ອງທ່ຽວຕ່າງໆ ເຮັດໃຫ້ນັກທ່ອງທ່ຽວສາມາດເຂົ້າມາທ່ຽວໄດ້ງ່າຍຂຶ້ນ. ພ້ອມກັນນັ້ນ, ສະຖານທີ່ແຫຼ່ງທ່ອງທ່ຽວເອງກໍ່ໄດ້ປັບປຸງສິ່ງອໍານວຍຄວາມສະດວກດີຂຶ້ນຫຼາຍຢ່າງ ເຊັ່ນ: ການໃຫ້ບໍລິການທີ່ພັກເຊົ່າ, ການສ້າງປ້າຍບອກທາງ, ການບໍລິການສາທາລະນຸປະໂພກ ແລະ ອື່ນໆ.

– ປະຊາຊົນໃນທ້ອງຖິ່ນໄດ້ເຂົ້າມາມີບົດບາດຫຼາຍຂຶ້ນ ໃນການຮ່ວມຕັດສິນໃຈພັດທະນາແຫຼ່ງທ່ອງທ່ຽວໃນເຂດທີ່

ພວກເຂົາອາໄສຢູ່ ໂດຍມີອຳນາດການປົກຄອງບ້ານ ແລະ ເມືອງ ສົມທົບກັນລົງສຳຫຼວດເກັບກຳຂໍ້ມູນ ແລະ ຂຽນແຜນພັດທະນາແຫຼ່ງທ່ອງທ່ຽວ, ຖືເອົາປະຊາຊົນພາຍໃນບ້ານເປັນຜູ້ພັດທະນາ ແລະ ສ້າງຕັ້ງກຸ່ມທ່ອງທ່ຽວຂອງບ້ານນັ້ນຂຶ້ນ ເພື່ອຄຸ້ມຄອງນຳໃຊ້ ແລະ ປົກປັກຮັກສາແຫຼ່ງທ່ອງທ່ຽວໃນຊຸມຊົນທ້ອງຖິ່ນ, ພ້ອມກັນນັ້ນ, ການມີສ່ວນຮ່ວມຂອງປະຊາຊົນໃນການອະນຸລັກປົກປັກຮັກສາສິ່ງແວດລ້ອມກໍ່ນັບມື້ນັບເພີ່ມຂຶ້ນ ເຊັ່ນ: ການຢຸດຕິການຕັດໄມ້ທຳລາຍປ່າ, ຢຸດຕິການລ່າສັດ ແລະ ອື່ນໆ.

**<u>ກົນໄກການສົ່ງເສີມ ແລະ ນະໂຍບາຍໃນການອຳນວຍຄວາມສະດວກຂອງພາກລັດ:</u>**

- ທາງອຳນາດການປົກຄອງຂັ້ນແຂວງ ແລະ ຂັ້ນເມືອງ ໄດ້ກຳນົດຂອບເຂດເນື້ອທີ່ ເຊັ່ນ: ເຂດກັນຊົນ, ເຂດສະຫງວນ, ເຂດອະນຸລັກ ແລະ ເຂດບໍລິການ. ນອກນັ້ນ, ຍັງໄດ້ສຶກສາເບິ່ງທ່າແຮງໃນການພັດທະນາການທ່ອງທ່ຽວ, ສຶກສາສິ່ງອຳນວຍຄວາມສະດວກດ້ານຕ່າງໆທີ່ມີໃນປະຈຸບັນ ແລະ ຄວາມຕ້ອງການທາງດ້ານສິ່ງອຳນວຍຄວາມສະດວກໃນອະນາຄົດ ພ້ອມທັງກຳນົດທິດທາງການພັດທະນາການທ່ອງທ່ຽວ, ທິດທາງການຈັດຕັ້ງ ແລະ ການຄຸ້ມຄອງການທ່ອງທ່ຽວໃນເຂດດັ່ງກ່າວອີກດ້ວຍ.
- ພາກລັດໄດ້ເອົາໃຈໃສ່ຊຸກຍູ້ປະຊາຊົນໃຫ້ມີອາຊີບໂດຍສ້າງລາຍຮັບໃຫ້ກັບຕົນເອງ ແລະ ກໍ່ຍັງໄດ້ຝຶກອົບຮົມທັກສະຕ່າງໆໃຫ້ປະຊາຊົນທີ່ອາໄສຢູ່ໃກ້ເຂດແຫຼ່ງທ່ອງທ່ຽວໄດ້ມີສ່ວນຮ່ວມໃຫ້ຫຼາຍຂຶ້ນ ເປັນຕົ້ນ: ສົ່ງພະນັກງານນຳທ່ຽວແຕ່ແຂວງລົງມາຝຶກອົບຮົມໃຫ້ປະຊາຊົນ ເພື່ອໃຫ້ກາຍເປັນພະນັກງານນຳທ່ຽວ, ຝຶກດ້ານວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບ ແລະ ການປະຖົມພະຍາບານຂັ້ນຕົ້ນ.
- ໄດ້ສົ່ງເສີມການເຜີຍແຜ່ໂຄສະນາການທ່ອງທ່ຽວ ເພື່ອດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດດ້ວຍຫຼາຍຮູບແບບເຊັ່ນ: ຜ່ານສື່ງພິມ, ວິທະຍຸ, ໂທລະພາບ, ເວັບໄຊ, ວາລະສານການທ່ອງທ່ຽວ, ປຶ້ມຄູ່ມືການທ່ອງ ທ່ຽວ, ປ້າຍໂຄສະນາການທ່ອງທ່ຽວ ແລະ ອື່ນໆ. ນອກນັ້ນ, ກໍ່ຍັງໄດ້ປັບປຸງສະຖານທີ່ທ່ອງທ່ຽວໃຫ້ມີຄຸນນະພາບເປັນຕົ້ນແມ່ນ: ທີ່ພັກແບບໂຮມສະເຕ (Home Stay) ທີ່ພັກສະອາດ, ການຍ່າງຊົມສວນ, ສົ່ງເສີມໃຫ້ປະຊາຊົນທີ່ຢູ່ບໍລິເວນເຂດໄກ້ຄຽງສະຖານທີ່ທ່ອງທ່ຽວໃຫ້ແຕ່ງກາຍນຸ່ງຖືຊຸດປະຈຳຊົນເຜົ່າຂອງຕົນ ພ້ອມທັງໃຫ້ຍັງຄົງຮັກສາວັດທະນະທຳຮີດຄອງດັ້ງເດີມໄວ້.
- ນອກຈາກນີ້, ຍັງໄດ້ສົ່ງເສີມໃຫ້ປະຊາຊົນຜະລິດສິນຄ້າ ODOP ມາປະກອບສ່ວນເຂົ້າໃນການທ່ອງທ່ຽວ, ພ້ອມທັງຈັດສັນໃຫ້ມີບ່ອນວາງສະແດງຜະລິດຕະພັນຂອງທ້ອງຖິ່ນ ແລະ ໃຫ້ປະຊາຊົນທີ່ອາໄສຢູ່ເຂດໃກ້ຄຽງແຫຼ່ງທ່ອງທ່ຽວມີກິດຈະກຳຮ່ວມກັນເຊັ່ນ: ການຟ້ອນລຳ, ການຕຳສົ້ມ, ການນຸ່ງເຄື່ອງຊົນເຜົ່າທີ່ເປັນເຊີງອານຸລັກຮີດຄອງປະເພນີ ແລະ ອື່ນໆ.

**<u>ການພັດທະນາການທ່ອງທ່ຽວຂອງພາກເອກະຊົນ:</u>**

- ບໍລິສັດທ່ອງທ່ຽວໄດ້ສົ່ງເສີມໃຫ້ປະຊາຊົນມີລາຍຮັບ ແລະ ມີສ່ວນຮ່ວມໃນກິດຈະກຳການທ່ອງທ່ຽວ, ຫຼາຍບໍລິສັດໄດ້ພັດທະນາແຫຼ່ງທ່ອງທ່ຽວ ໃຫ້ກາຍເປັນແຫຼ່ງທ່ອງທ່ຽວໃນຮູບແບບການທ່ອງທ່ຽວອະນຸລັກທຳມະຊາດໂດຍມີປະຊາຊົນມີສ່ວນຮ່ວມຫຼາຍຂຶ້ນ, ພ້ອມນັ້ນຍັງໄດ້ສົ່ງເສີມປະຊາຊົນເຮັດກະສິກຳສະອາດ ເພື່ອຕິດ ພັນກັບການທ່ອງທ່ຽວອີກດ້ວຍ.
- ຜູ້ພັດທະນາຍັງໄດ້ປັບປຸງພັດທະນາພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກດ້ານຕ່າງໆໃນແຫຼ່ງທ່ອງທ່ຽວໃຫ້ຄ່ອຍໆສະດວກສະບາຍຫຼາຍຂຶ້ນ ເປັນຕົ້ນແມ່ນ: ເສັ້ນທາງເຂົ້າເຖິງສະຖານທີ່ທ່ອງທ່ຽວ, ຫ້ອງນ້ຳສາທາລະນະ,

ບ່ອນຈອດລົດ, ປ້າຍຊີ້ບອກທາງຕ່າງໆ, ໂຮງແຮມ, ເຮືອນພັກ, ລີສອດ, ໂຮມສະເຕ, ຮ້ານອາຫານ, ສະຖານທີ່ຂາຍເຄື່ອງທີ່ລະນຶກ ແລະ ອື່ນໆ ຊຶ່ງມັນໄດ້ສະແດງໃຫ້ເຫັນເຖິງຄວາມເອົາໃຈໃສ່ຂອງທາງພາກລັດ ແລະ ພາກທຸລະກິດ ໃນການຮ່ວມພັດທະນາອຸດສາຫະກຳການທ່ອງທ່ຽວໃຫ້ມີການຂະຫຍາຍຕົວເປັນກ້າວໆ.

– ນອກຈາກນັ້ນ, ຍັງໄດ້ຈັດຝຶກອົບຮົມສອນວິທີການປຸງແຕ່ງອາຫານ, ຝຶກອົບຮົມປະຊາຊົນໃນເຂດໃກ້ຄຽງແຫຼ່ງທ່ອງທ່ຽວໃຫ້ກາຍເປັນພະນັກງານນໍາທ່ຽວ ແລະ ຝຶກວິທີການບໍລິການຕ່າງໆ ໃຫ້ແກ່ປະຊາຊົນໃນກຸ່ມບ້ານໃກ້ຄຽງ ພ້ອມນັ້ນຍັງຝຶກອົບຮົມໃຫ້ປະຊາຊົນປົກປັກຮັກສາສິ່ງແວດລ້ອມໃນເຂດທົ່ວແຫຼ່ງທ່ອງທ່ຽວນໍາອີກ.

– ເຫັນວ່າມີຫຼາຍແຫຼ່ງທ່ອງທ່ຽວມີລັກສະນະພົ້ນເດັ່ນເປັນພິເສດ ໂດຍສະເພາະບັນດາກິດຈະກໍາຕ່າງໆ ທີ່ພາກທຸລະກິດໄດ້ພັດທະນາໃນຂອບເຂດແຫຼ່ງທ່ອງທ່ຽວ ເປັນຕົ້ນແມ່ນ: ເຂດປ່າສະຫງວນແຫ່ງຊາດດົງຫົວສາວ ບ້ານໜອງຫຼວງ ເມືອງປາກຊ່ອງ ທີ່ໄດ້ມີກິດຈະກໍາຂີ່ສາຍສະລິງ, ການພັກແຮມຢູ່ເຮືອນເທິງຕົ້ນໄມ້, ການພັກແຮມນໍາເຮືອນປະຊາຊົນ (ໂຮມສະເຕ), ການນໍາທ່ຽວຊົມທໍາມະຊາດແບບຍ່າງປ່າ ໂດຍນໍາໃຊ້ພະນັກງານນໍາທ່ຽວຂັ້ນບ້ານ, ການບໍລິການອາຫານ ແລະ ບໍລິການໃຫ້ເຊົ່າເຄື່ອງປະຊາຊົນໃນທ້ອງຖິ່ນ.

**ການມີສ່ວນຮ່ວມຂອງປະຊາຊົນໃນຊຸມຊົນ:**

– ປະຊາຊົນໃນເຂດໃກ້ຄຽງແຫຼ່ງທ່ອງທ່ຽວແມ່ນມີຄວາມຕື່ນໂຕ, ຫ້າວຫັນ ແລະ ໃຫ້ການຮ່ວມມືໃນການປະກອບສ່ວນປົກປັກຮັກສາສະພາບແວດລ້ອມຂອງແຫຼ່ງທ່ອງທ່ຽວຫຼາຍຂຶ້ນ, ພ້ອມກັນນັ້ນ, ແມ່ນມີຄວາມເຂົ້າໃຈ ແລະ ຫັນເຂົ້າມາມີສ່ວນຮ່ວມຫຼາຍຂຶ້ນໃນວຽກງານການທ່ອງທ່ຽວອະນຸລັກທໍາມະຊາດ ແບບປະຊາຊົນມີສ່ວນຮ່ວມ ເຊິ່ງເຫັນໄດ້ຈາກການປັບປຸງເອົາເຮືອນຂອງຕົນເອງມາເປັນໂຮມສະເຕ, ການເປັນພະນັກງານນໍາທ່ຽວ, ການຂາຍເຄື່ອງທີ່ລະນຶກໃນເຂດແຫຼ່ງທ່ອງທ່ຽວ, ການອະນຸລັກຮັກສາຮີດຄອງປະເພນີດັ່ງເດີມຂອງຊົນເຜົ່າຕົນເອງ ແລະ ອື່ນໆ.

– ທຸລະກິດໂຮມສະເຕເປັນຮູບແບບໜຶ່ງທີ່ສົ່ງເສີມການທ່ອງທ່ຽວ ແລະ ສ້າງໃຫ້ປະຊາຊົນໃນເຂດໃກ້ຄຽງໄດ້ຮັບຜົນປະໂຫຍດໄດ້ດີ ເນື່ອງຈາກນັກທ່ອງທ່ຽວສ່ວນໃຫຍ່ທີ່ເຂົ້າມາທ່ຽວປະເທດລາວ ປັດໃຈທໍາອິດຄືການໄດ້ພັກຜ່ອນ ແລະ ທ່ຽວຊົມທໍາມະຊາດ, ວັດທະນາທໍາ ແລະ ຮີດຄອງປະເພນີດັ່ງເດີມຂອງລາວ.

– ແຫຼ່ງທ່ອງທ່ຽວພູກ້ອນເສົ້າ ເຂດບ້ານຫຼັກ 33, ກຸ່ມຕາດເຜົ່າສໍາພັນ ບ້ານໜອງເທືອມ ທັງ 2 ຈຸດນີ້ແມ່ນໄດ້ສ້າງຕັ້ງເປັນແຫຼ່ງທ່ອງທ່ຽວຂອງຊຸມຊົນ ໂດຍແມ່ນປະຊາຊົນໃນບ້ານດັ່ງກ່າວເປັນຜູ້ຄຸ້ມຄອງນໍາໃຊ້ ແລະ ພັດທະນາຕາມຄວາມອາດສາມາດ. ສະນັ້ນ, ກິດຈະກໍາຕົ້ນຕໍແມ່ນຖືເອົາການຍ່າງປ່າຊົມທໍາມະຊາດສຶກສາຊີວະນາໆພັນເປັນຫຼັກຕິດພັນກັບກິດຈະກໍາ ເຊັ່ນ: ຢ້ອນໂຕລິງໜ້າຜາ ແລະ ກິດຈະກໍາອື່ນໆ.

– ດ້ານການສ້າງລາຍຮັບໃຫ້ແກ່ຊຸມຊົນ ແລະ ປະຊາຊົນ ແມ່ນເຫັນວ່າປະຊາຊົນສ່ວນຫຼາຍມີລາຍຮັບ ແລະ ມີຊີວິດການເປັນຢູ່ທີ່ດີຂຶ້ນສໍາລັບຜູ້ທີ່ມີສ່ວນຮ່ວມໃນກິດຈະກໍາຂອງການທ່ອງທ່ຽວ, ແຕ່ກໍ່ຍັງມີບາງສ່ວນທີ່ຍັງບໍ່ໄດ້ຮັບຜົນປະໂຫຍດ ໂດຍສະເພາະກຸ່ມຄົວເຮືອນທຸກຍາກ ເນື່ອງຈາກເຂົາເຈົ້າບໍ່ໄດ້ມີສ່ວນຮ່ວມ ແລະ ມີລາຍຮັບຈາກການທ່ອງທ່ຽວ ຍ້ອນບໍ່ມີຄວາມຮູ້ດ້ານການຜະລິດເຮັດໃຫ້ບໍ່ສາມາດສະໜອງສິນຄ້າໃຫ້ແກ່ຕະຫຼາດທ່ອງທ່ຽວ,

**ອຸປະສັກ ແລະ ສິ່ງທ້າທາຍ:**

– ຄວາມເປັນເຈົ້າການຂອງອົງການຈັດຕັ້ງຕ່າງໆ ໃນການເຮັດໜ້າທີ່ການເມືອງຂອງຕົນຍັງບໍ່ທັນສາມາດລວມສູນ ການປະສານງານລະຫວ່າງຂະແໜງການທີ່ຮັບຜິດຊອບ ແລະ ການກະຕຸກຊຸກຍູ້ໃຫ້ພາກສ່ວນຕ່າງໆມາຮ່ວມມືກັນຍັງບໍ່ລ່ອງຊ່ອງໄປທາງດຽວກັນໄດ້ເທື່ອ, ສ່ວນຫຼາຍແມ່ນຕ່າງຄົນຕ່າງເຮັດ ລວມທັງນັກທຸລະກິດເອງກໍ່ຍັງເຮັດພໍໃຜລາວບໍ່ມີການຮ່ວມກຸ່ມກັນດີເທົ່າທີ່ຄວນ.

- ການສົ່ງເສີມ ແລະ ຄຸ້ມຄອງນັກທຸລະກິດພາຍໃນກໍ່ຍັງເຮັດບໍ່ທັນໄດ້ດີ, ການຮ່ວມມືລະຫວ່າງນັກທຸລະກິດລາວ ແລະ ຕ່າງປະເທດ ຍັງບໍ່ຮັດແໜ້ນ-ສາມັກຄີກັນ ໂດຍສະເພາະການບໍລິຫານຈັດທົວນັກທ່ອງທ່ຽວທີ່ມາຈາກຕ່າງປະເທດ ທີ່ຈຳກັດໃຫ້ນັກທ່ອງທ່ຽວຂອງເຂົາເຈົ້າໄປໃຊ້ການບໍລິການຂອງທຸລະກິດຂອງເຂົາເຈົ້າເອງທັງໝົດຕາມແຜນການທ່ອງທ່ຽວຂອງເຂົາເຈົ້າ ເຊິ່ງເຮັດໃຫ້ທຸລະກິດໃນທ້ອງຖິ່ນນັ້ນໆບໍ່ໄດ້ຮັບຜົນປະໂຫຍດເທົ່າທີ່ຄວນຈາກທົວທ່ອງທ່ຽວດັ່ງກ່າວ.
- ຄວາມບໍ່ສົມດຸນລະຫວ່າງການຂະຫຍາຍຕົວຢ່າງໄວວາຂອງຂະແໜງການທ່ອງທ່ຽວ ແລະ ການປັບປຸງອົງການຄຸ້ມຄອງການທ່ອງທ່ຽວ ໂດຍສະເພາະການຄຸ້ມຄອງບຸກຄະລາກອນໃນການທ່ອງທ່ຽວ ເຮັດໃຫ້ການຄຸ້ມຄອງການຂະຫຍາຍຕົວຂອງທຸລະກິດການທ່ອງທ່ຽວມີຄວາມສັບສົນ ແລະ ຂະຫຍາຍຕົວບໍ່ໄປຕາມເປົ້າໝາຍທິດທາງຂອງແຂວງ ແລະ ທາງເມືອງທີ່ວາງໄວ້.
- ໂຄງລ່າງພື້ນຖານສຳລັບການທ່ອງທ່ຽວຫຼາຍອັນຍັງບໍ່ສະດວກສະບາຍ ໂດຍສະເພາະແມ່ນເສັ້ນທາງເຂົ້າຫາແຫຼ່ງທ່ອງທ່ຽວຕ່າງໆ. ພ້ອມກັນນັ້ນ, ໃນຕົວຂອງແຫຼ່ງທ່ອງທ່ຽວທຳມະຊາດເອງຫຼາຍແຫ່ງທີ່ໄດ້ເປີດໃຫ້ບໍລິການແລ້ວ ກໍ່ຍັງບໍ່ທັນໄດ້ຮັບການພັດທະນາເທົ່າທີ່ຄວນ.
- ການເຊື່ອມຕໍ່ຖະໜົນຫົນທາງລະຫວ່າງແຂວງຕໍ່ແຂວງ, ລະຫວ່າງລາວກັບບັນດາປະເທດໃກ້ຄຽງ, ພ້ອມທັງ ເສັ້ນທາງເຂົ້າສູ່ສະຖານທີ່ທ່ອງທ່ຽວ ແມ່ນເປັນປັດໄຈສຳຄັນທີ່ເປັນແຮງດຶງດູດໃຫ້ນັກທ່ອງທ່ຽວເຂົ້າມາທ່ອງທ່ຽວ ແຕ່ຍັງເຫັນວ່າມີການພັດທະນາບໍ່ເຊື່ອມຈອດກັນ ແລະ ຍັງບໍ່ທັນສະດວກສະບາຍເທົ່າທີ່ຄວນ, ພ້ອມທັງການບໍລິການການຂົນສົ່ງໂດຍສານ ທັງຮູບແບບທາງບົກ ແລະ ທາງອາກາດກໍ່ຍັງຕ້ອງໄດ້ມີການປັບປຸງຕື່ມອີກ.
- ຄຽງຄູ່ກັບການເຊື່ອມໂຍງ ແລະ ການຮ່ວມມື, ລະດັບການແຂ່ງຂັນໃນຂະແໜງນີ້ນັບມື້ນັບສູງຂຶ້ນ ເພາະແຕ່ລະປະເທດໄດ້ນຳໃຊ້ເຕັກໂນໂລຢີທີ່ທັນສະໄໝ ແລະ ຍົກລະດັບຄຸນນະພາບມາດຕະຖານ ແລະ ການບໍລິການຂອງພວກເຂົາ ເພື່ອດຶງດູດນັກທ່ອງທ່ຽວເຂົ້າມາໃນປະເທດຂອງຕົນ. ສະນັ້ນ, ສິ່ງນີ້ໄດ້ກາຍເປັນສິ່ງທ້າທາຍອີກອັນໜຶ່ງ ສຳລັບການທ່ອງທ່ຽວລາວ.
- ທັງພາກລັດ ແລະ ເອກະຊົນ, ລວມໄປເຖິງປະຊາຊົນໃນເຂດໃກ້ຄຽງແຫຼ່ງທ່ອງທ່ຽວ ຍັງບໍ່ທັນມີບົດຮຽນ ແລະ ບໍ່ທັນມີຕົວແບບໃນການພັດທະນາການທ່ອງທ່ຽວອະນຸລັກນິເວດວິທະຍາ ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດພົບຄວາມຫຍຸ້ງຍາກໃນຫຼາຍດ້ານ. ອີກດ້ານໜຶ່ງ ຜູ້ພັດທະນາແຫຼ່ງທ່ອງທ່ຽວໄດ້ມີການດັດແປງທຳມະຊາດຫຼາຍ ແລະ ບໍ່ພ້ອມພຽງກັນໃນການອະນຸລັກ, ລວມໄປເຖິງ ຄວາມຮັບຮູ້, ຄວາມເຂົ້າໃຈຂອງປະຊາຊົນ ກ່ຽວກັບການ ທ່ອງທ່ຽວອະນຸລັກນິເວດວິທະຍາຍັງບໍ່ທັນເລິກເຊິ່ງ ເຮັດໃຫ້ແຫຼ່ງທ່ອງທ່ຽວດັ່ງກ່າວກາຍເປັນສິ່ງທີ່ບໍ່ໜ້າດຶງດູດໃຈສຳລັບນັກທ່ອງທ່ຽວຈາກຕ່າງປະເທດ ໂດຍສະເພາະນັກທ່ອງທ່ຽວແຖບທະວີບເອີຣົບ.
- ຂໍ້ຫຍຸ້ງຍາກຂອງການທ່ອງທ່ຽວໂຮມສະເຕສ່ວນໃຫຍ່ ແມ່ນປະຊາຊົນຍັງບໍ່ເຂົ້າໃຈເວລານັກທ່ອງທ່ຽວຂໍຖ່າຍຮູບເຂົາເຈົ້າ ແລະ ຜ່ານມາເຂົາເຈົ້າ ກໍ່ຍັງບໍ່ທັນໄດ້ຮັບຜົນປະໂຫຍດຈາກການທ່ອງທ່ຽວດີເທົ່າທີ່ຄວນ ແຕ່ເຖິງຢ່າງໃດກໍ່ຕາມ, ທາງພາກລັດ ແລະ ຜູ້ປະກອບການໂຮມສະເຕ ຕ້ອງໄດ້ເອົາໃຈໃສ່ໃນການສ້າງຄວາມເຂົ້າໃຈກັບປະຊາຊົນໃນຊຸມຊົນເພື່ອໃຫ້ປະຊາຊົນມີສ່ວນຮ່ວມຫຼາຍກວ່ານີ້ ແລະ ໃຫ້ເຂົາເຈົ້າມີກິດຈະກຳຮ່ວມກັນ ເພື່ອສ້າງລາຍຮັບໃຫ້ເຂົາເຈົ້າເຊັ່ນກັນ.

# V. ສະຫຼຸບ ແລະ ຂໍ້ສະເໜີແນະ

## 5.1 ບົດສະຫຼຸບຕໍ່ກັບການຜະລິດກະສິກຳແບບຍືນຍົງ (ກະສິກຳອິນຊີ)

ການຜະລິດກະສິກຳອິນຊີໃນລາວເຮົາຍັງມີພື້ນຖານວັດຖຸ – ເຕັກນິກການຜະລິດທີ່ອ່ອນນ້ອຍ, ການຜະລິດມີຂະໜາດນ້ອຍ ແລະ ເປັນລັກສະນະກະແຈກກະຈາຍ, ບໍ່ສາມາດແຂ່ງຂັນດ້ານປະລິມານ ແລະ ຄຸນນະພາບ ເຮັດໃຫ້ການຜະລິດເປັນສິນຄ້າຍັງປະເຊີນກັບອຸປະສັກ ແລະ ສິ່ງທ້າທາຍຫຼາຍຢ່າງ. ດັ່ງນັ້ນ, ມັນຮຽກຮ້ອງໃຫ້ລາວເຮົາຕ້ອງໄດ້ສຸມໃສ່ການປັບປຸງໂຄງປະກອບການຜະລິດຫຼາຍຢ່າງ ເປັນຕົ້ນແມ່ນ: ໂຄງລ່າງພື້ນຖານ, ລະບຽບການຄຸ້ມຄອງມາດຕະຖານການຜະລິດ, ຄຽງຄູ່ກັບການສ້າງບຸກຄະລາກອນເພື່ອມາປັບປຸງຄຸນນະພາບການຜະລິດທີ່ສາມາດແຂ່ງຂັນໄດ້ທັງດ້ານປະລິມານ, ຄຸນນະພາບ, ມີຄວາມປອດໄພ ແລະ ສິ່ງສຳຄັນແມ່ນລາຄາທີ່ສາມາດແຂ່ງຂັນໄດ້. ເຖິງຢ່າງໃດກໍຕາມ, ໃນປັດຈຸບັນຜູ້ບໍລິໂພກມີຄວາມຕ້ອງການບໍລິໂພກຜົນຜະລິດກະສິກຳອິນຊີທີ່ມີຄຸນນະພາບ, ມີຄວາມປອດໄພ ແລະ ການຜະລິດທີ່ເປັນມິດກັບສິ່ງແວດລ້ອມນັບມື້ສູງຂຶ້ນ. ດັ່ງນັ້ນ, ຕ້ອງຫັນປ່ຽນຮູບແບບການຜະລິດເຂົ້າສູ່ລະບົບມາດຕະຖານເພື່ອຮອງຮັບທ່າອ່ຽງຂອງສັງຄົມ ພ້ອມໃຫ້ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນໄດ້.

ຕໍ່ກັບຜົນການຄົ້ນຄວ້າ ໂດຍສະເພາະການບໍລິການສົ່ງເສີມກະສິກຳໃນຊົນນະບົດ ເຊິ່ງສະໜັບສະໜູນການຜັນຂະຫຍາຍກະສິກຳແບບຍືນຍົງ. ການສົ່ງເສີມກະສິກຳສີຂຽວນີ້ ປະກອບດ້ວຍວິທີການຕ່າງໆເພື່ອສົ່ງເສີມບັນດາຮູບແບບຕ່າງໆຕາມແຕ່ລະຫົວຂໍ້. ເຖິງຢ່າງໃດກໍ່ຕາມ, ການສຳຫຼວດ ແລະ ວິທີການເຫຼົ່ານີ້ແມ່ນຄ້າຍຄືກັນກັບການຮຽນຮູ້ດ້ານສັງຄົມ ແລະ ນິເວດວິທະຍາເປັນຕົ້ນ: ການສະໜັບສະໜູນຊາວກະສິກອນໃຫ້ຮູ້ຈັກວິເຄາະບັນຫາ ແລະ ໂອກາດຕ່າງໆໃນທ້ອງຖິ່ນລວມທັງການທົດລອງທາງເລືອກຜະລິດຕະພັນໃໝ່ ທີ່ເໝາະສົມກັບເງື່ອນໄຂຕົວຈິງຂອງແຕ່ລະທ້ອງຖິ່ນ.

ຜົນການຄົ້ນຄວ້າ ຍັງໄດ້ສະແດງໃຫ້ເຫັນກ່ຽວກັບ ຜົນສຳເລັດ ຫຼື ຄວາມລົ້ມເຫຼວຂອງການສົ່ງເສີມກະສິກຳສີຂຽວ (ລິງເລີກກະສິກຳອິນຊີ) ໃນ 4 ແຂວງທີ່ໄດ້ເຮັດເປັນກໍລະນີສຶກສາ ເປັນຕົ້ນ ແມ່ນຂຶ້ນກັບສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການສົ່ງເສີມກະສິກຳແບບຍືນຍົງ. ຄວາມຮູ້ ແລະ ທັກສະ ບໍ່ແມ່ນປັດໄຈຢ່າງດຽວທີ່ກຳນົດພຶດຕິກຳໃນຂະແໜງການນີ້; ການຕັດສິນໃຈຂອງຊາວກະສິກອນ ແລະ ທຸລະກິດກະສິກຳຕ່າງໆ ໂດຍອີງໃສ່ຜົນຕອບແທນທາງດ້ານການເງິນ ກໍເປັນປັດໄຈໜຶ່ງທີ່ສຳຄັນ. ສະນັ້ນ, ຖ້າຫາຕ້ອງການຜັນຂະຫຍາຍກະສິກຳແບບຍືນຍົງໃນລາວ(ກະສິກຳອິນຊີ), ຈຳເປັນຕ້ອງມີນະໂຍບາຍ ແລະ ມາດຕະການປະຕິບັດ ໂດຍເຮັດໃຫ້ກະສິກຳອິນຊີສາມາດສ້າງຜົນກຳໄລໃຫ້ຜູ້ຜະລິດຂະໜາດນ້ອຍທີ່ມີເປັນຈຳນວນຫຼວງຫຼາຍ.

ຄວາມພະຍາຍາມໃນການສົ່ງເສີມກະສິກຳແບບຍືນຍົງໃນອານາຄົດ ບໍ່ສາມາດອາໃສການສົ່ງເສີມກະສິກຳສີຂຽວພຽງຢ່າງດຽວໄດ້. ຂະແໜງກະສິກຳ ແລະ ປ່າໄມ້ ຕ້ອງໄດ້ມີການສຶກສາຄົ້ນຄວ້າ ແລະ ການພັດທະນາ ເພື່ອຊອກຫາວິທີຊ່ວຍຫຼຸດຜ່ອນຄ່າໃຊ້ຈ່າຍ ແລະ ເພີ່ມຜົນປະໂຫຍດທາງດ້ານການເງິນ ສຳລັບການຜະລິດກະສິກຳອິນຊີ ແລະ ກະສິກຳທີ່ດີ ແລະ ລວມທັງມີມາດຕະການທີ່ກ່ຽວຂ້ອງກັບການຄຸ້ມຄອງຕ່ອງໂສ້ການເພີ່ມມູນຄ່າ, ການເກັບພາສີ, ການຢັ້ງຢືນ ແລະ ຄ້ຳປະກັນລາຄາ.

- ເປົ້າໝາຍດ້ານນະໂຍບາຍ: ເພື່ອຕອບສະໜອງຕໍ່ສິ່ງທ້າທາຍທີ່ເກີດຂຶ້ນເນື່ອງຈາກການຫັນເປັນທັນສະໄໝໃນຂະແໜງກະສິກຳ, ລັດຖະບານ ແຫ່ງ ສປປ ລາວ ຈຶ່ງໄດ້ກຳນົດເອົາການພັດທະນາແບບຍືນຍົງ ແລະ ປົກປັກຮັກສາສິ່ງແວດລ້ອມ ເປັນເສົາຄ້ຳທີສຳຄັນ ໃນແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ ແລະ ເປົ້າໝາຍຂອງນະໂຍບາຍ"ການຫັນໄປສູ່ເສດຖະກິດສີຂຽວ ແລະ ເປັນມິດຕໍ່ສິ່ງແວດລ້ອມ" ໃນລະດັບຂະແໜງການ, ກະຊວງກະສິກຳແລະປ່າໄມ້ ໄດ້ນຳເອົາ "ການພັດທະນາກະສິກຳສະອາດ, ປອດໄພ ແລະ ຍືນຍົງ" ເຊິ່ງ

ຍຸດທະສາດດັ່ງກ່າວ ໄດ້ກໍານົດເອົາການຜະລິດກະສິກໍາທີ່ດີ (GAP) ແລະ ການຜະລິດກະສິກໍາອິນຊີ (OA) ເປັນວິທີການຕົ້ນຕໍ່ເພື່ອໃຫ້ບັນລຸເປົ້າໝາຍດັ່ງກ່າວ.

- ການຈັດຕັ້ງປະຕິບັດ: ເພື່ອສົ່ງເສີມການຜະລິດຫຼາຍຮູບແບບກະສິກໍາຍືນຍົງ ໂດຍສະເພາະແມ່ນພາກລັດ (ຂະແໜງກະສິກໍາ) ໄດ້ມີການປຶກສາຫາລືກັບບັນດາຊາວກະສິກອນ, ພະນັກງານພາກສະໜາມ, ຜູ້ຮັບຜິດຊອບໂຄງການ ແລະ ຜູ້ວາງນະໂຍບາຍ ແມ່ນໄດ້ມີການກໍານົດຂອບການຈັດຕັ້ງປະຕິບັດສໍາລັບການສົ່ງເສີມການຜະລິກະສິກໍາສີຂຽວເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

ຕາຕະລາງ ໑: ຫຼັກການ ແລະ ການຈັດຕັ້ງປະຕິບັດການສົ່ງເສີມກະສິກໍາສີຂຽວ

| ຫຼັກການ ການສົ່ງເສີມກະສິກໍາສີຂຽວ (ກະສິກໍາອິນຊີ) | ການຈັດຕັ້ງປະຕິບັດ |
|---|---|
| ການວິເຄາະລະບົບນິເວດແບບມີສ່ວນຮ່ວມ | ຄອບຄົວຊຸມນະບົດ ໄດ້ບັນທຶກ ແລະ ສ້າງເປັນລາຍການຊັບພະຍາກອນທີ່ມີ ແລະ ເປັນແຜນອາດຂຶ້ນມາ |
| ການວາງແຜນໃນຊຸມຊົນ | ວິເຄາະບັນດາໂອກາດ ແລະ ຂໍ້ຄົງຄ້າງຕ່າງໆ ແລ້ວຕົກລົງເປັນເອກະພາບກ່ຽວກັບນະວັດຕະກໍາທີ່ເປັນບູລິມະສິດ |
| ການຄົ້ນຄວ້າທົດລອງດ້ວຍການເຮັດຕົວຈິງ | ທົດລອງເຮັດນະວັດຕະກໍາໃໝ່; ມີການສົມທຽບ ແລະ ປຽບທຽບລະຫວ່າງທາງເລືອກຕ່າງໆ, ຊຸມຊົນມີການເກັບກໍາຂໍ້ມູນ ແລະ ວິເຄາະຜົນໄດ້ຮັບ |
| ການຮຽນຮູ້ລະຫວ່າງຊາວກະສິກອນດ້ວຍກັນ | ມີການແລກປ່ຽນປະສົບການລະຫວ່າງຄົວເຮືອນ ແລະ ຊຸມຊົນ, ມີການຖ່າຍທອດຄວາມຮູ້ ແລະ ທັກສະໃຫ້ກັນ ແລະ ກັນ |
| ການພັດທະນາອົງກອນ | ເຄືອຂ່າຍບໍ່ເປັນທາງການ ແລະ ກຸ່ມທີ່ເປັນທາງການ ຖືກສ້າງຕັ້ງຂຶ້ນເພື່ອຮັກສາ ແລະ ຜັນຂະຫຍາຍນະວັດຕະກໍາຕ່າງໆ. |

- ຄວາມອາດສາມາດໃນການຈັດຕັ້ງປະຕິບັດ: ຂະແໜງພາກລັດ ແລະ ຊາວກະສິກອນ ໄດ້ຮັບການຝຶກອົບຮົມ ແລະ ໄດ້ຮັບການເຮັດທົດລອງໂດຍຜ່ານບັນດາເຕັກນິກຕ່າງໆ. ນອກຈາກນັ້ນ, ຜົນໄດ້ຮັບຍັງໄດ້ນໍາມາສ້າງເປັນປຶ້ມຄູ່ມືໃນການຜະລິດກະສິກໍາ, ວິດີໂອ ແລະ ໂພສເຕີ ເພື່ອໃຫ້ເຫັນເຖິງການຜະລິດກະສິກໍາທີ່ດີ ແລະ ແບບມີສ່ວນຮ່ວມໃຫ້ຫຼາຍຂຶ້ນຈາກພາກລັດ.
- ອຸປະສັກໃນການຈັດຕັ້ງປະຕິບັດ: ການຈັດຕັ້ງປະຕິບັດໂຄງການຕ່າງໆທີ່ສະໜັບສະໜູນຈາກພາກລັດ ແລະ ອົງການຈັດຕັ້ງສາກົນ ຍັງມີຄວາມຈໍາກັດໃນຫຼາຍດ້ານ ໂດຍສະເພາະການໃຫ້ທຶນແມ່ນບໍ່ມີຄວາມຕໍ່ເນື່ອງກັນ, ການໝູນວຽນ ຫຼື ສັບປ່ຽນພະນັກງານເຂົ້າໄປປະຈໍາການຍັງບໍ່ພຽງພໍ, ການຜະລິດເປັນສິນຄ້າຂອງຊາວກະສິກອນຍັງເປັນຂະໜາດນ້ອຍ ແລະ ບໍ່ສາມາດຂະຫຍາຍອອກເປັນວົງກວ້າງໄດ້.
- ການສະໜັບສະໜູນຂັ້ນແຂວງ: ຂັ້ນແຂວງຕ້ອງເປັນເຈົ້າການນໍາພາ ໂດຍສະເພາະ ຂະແໜງກະສິກໍາຂັ້ນແຂວງຄວນເປັນເຈົ້າການໃນການວາງແຜນ ແລະ ການປະສານກ່ຽວກັບການສົ່ງເສີມກະສິກໍາສີຂຽວ. ພ້ອມດຽວກັນນັ້ນ, ຖ້າຫາກຕ້ອງການຊັບພະຍາກອນເພີ່ມ ຂັ້ນແຂວງຄວນດຶງດູດ ແລະ ຮັບເອົາພະນັກງານຈາກຂັ້ນສູນກາງ

ເຂົ້າມາມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ແລະ ແລກປ່ຽນບົດຮຽນ, ປະສົບການ ຈາກບັນດາແຂວງພາຍໃນ ແລະ ທົ່ວປະເທດ; ການຊອກຫາແຫຼ່ງທຶນ ແລະ ສິ່ງອຳນວຍຄວາມສະດວກທີ່ຕ້ອງການ ເພື່ອໃຫ້ສຳເລັດໃນການຈັດຕັ້ງປະຕິບັດ ຂັ້ນແຂວງແມ່ນຈະຕ້ອງມີການວາງຍຸດທະສາດທີ່ຈະແຈ້ງ ແລະ ມີກົນໄກການຕິດຕາມ ແລະ ປະເມີນຜົນ.

- ສິ່ງທ້າທາຍໃນການສະໜັບສະໜູນກະສິກຳອິນຊີ: ຂໍ້ຄົງຄ້າງຂອງການສົ່ງເສີມກະສິກຳອິນຊີ ແມ່ນຂຶ້ນຢູ່ກັບສະພາບແວດລ້ອມທີ່ເອື້ອອຳນວຍໃນການສົ່ງເສີມກະສິກຳແບບຍືນຍົງ. ການເພີ່ມຄວາມຮູ້ ແລະ ທັກສະບໍ່ສາມາດນຳໄປສູ່ການປ່ຽນແປງໃນພາກປະຕິບັດໄດ້ດີເທົ່າທີ່ຄວນຫາກບໍ່ມີປັດໄຈອື່ນເຂົ້າມາມີສ່ວນຮ່ວມ. ປັດຈຸບັນຊາວກະສິກອນ ແມ່ນເປັນຜູ້ຜະລິດສິນຄ້າ ຫຼາຍກ່ວາຜະລິດເພື່ອບໍລິໂພກ. ດັ່ງນັ້ນ, ການຜະລິດກະສິກຳຈຶ່ງຕິດພັນຢ່າງຫຼວງຫຼາຍກັບຜົນຕອບແທນທາງດ້ານການເງິນ. ເຖິງຢ່າງໃດກໍ່ຕາມ, ຍັງມີສິ່ງທ້າທາຍຫຼາຍຢ່າງ ແລະ ປັດໄຈຕ່າງໆທີ່ສົ່ງຜົນຕໍ່ການເລືອກວິທີການຜະລິດຂອງຊາວກະສິກອນ ເຊັ່ນວ່າ: ການຜະລິດກະກຳອິນຊີ ຫຼື ການນຳໃຊ້ຢາປາບສັດຕູພືດ ໂດຍອີງໃສ່ແຮງງານທີ່ມີ, ເງິນໝູນວຽນໃນຄົວເຮືອນ, ລາຄາພິເສດທີ່ໄດ້ຮັບຕໍ່ຜົນຜະລິດ, ຄວາມຕ້ອງການຂອງຕະຫຼາດ ແລະ ລະບົບການຄຸ້ມຄອງຕ່ອງໂສ້ມູນຄ່າເພີ່ມ.

## 5.2 ຂໍ້ສະເໜີແນະຕໍ່ກັບການຜະລິດກະສິກຳແບບຍືນຍົງ (ກະສິກຳອິນຊີ)

- ເພື່ອແກ້ໄຂບັນຫາ ແລະ ຊຸກຍູ້ຊາວກະສິກອນໃຫ້ສາມາດເຮັດການຜະລິດຮັບໃຊ້ສັງຄົມໃຫ້ທົ່ວເຖິງ. ຄຽງຄູ່ກັນນັ້ນ, ກໍຕ້ອງມີມາດຕະການທີ່ເຂັ້ມງວດ ເປັນຕົ້ນ: ປະຕິບັດມາດຕະການຢູ່ດ່ານນຳເຂົ້າໃຫ້ເຂັ້ມງວດຢ່າງແທ້ຈິງ. ນອກຈາກນີ້, ກໍຕ້ອງມີແຜນການໃນການດັດສົມຕະຫຼາດພືດຜັກ, ຈັດຫາ ຫຼື ຈັດສັນຕະຫຼາດຂາຍພືດຜັກ ແລະ ໝາກໄມ້ປອດສານພິດໃນບັນດາຕະຫຼາດໃດໜຶ່ງທີ່ມີເງື່ອນໄຂ ເພື່ອສົ່ງເສີມຜູ້ຊົມໃຊ້ໃຫ້ເຫັນ ຄວາມສຳຄັນຂອງກະສິກຳອິນຊີ ແລະ ຊຸກຍູ້ໃຫ້ຜູ້ປະກອບການທຸລະກິດຫ້າງສັບພະສິນຄ້າ, ສູນການຄ້າ ແລະ ຮ້ານສະດວກຊື້ ຮັບເອົາຜະລິດຕະພັນລາວເຂົ້າຈຳໜ່າຍໃນຫ້າງຮ້ານ ໂດຍສ້າງກາໝາຍ ຫຼື ການຫຸ້ມຫໍ່ທີ່ມີມາດ ຕະຖານກະສິກຳອິນຊີ ເພື່ອຈຳແນກ ແລະ ຊຸກຍູ້ສິນຄ້າກະສິກຳອິນຊີໃຫ້ມີຄວາມແຕກຕ່າງກັບສິນຄ້າທົ່ວໄປ.
- ຄວນມີການສ້າງຕັ້ງເຄືອຂ່າຍຊາວກະສິກອນລາວ ເພື່ອອຳນວຍຄວາມສະດວກໃນການແລກປ່ຽນການຮຽນຮູ້ລະຫວ່າງຊາວກະສິກອນດ້ວຍກັນ ກ່ຽວກັບອົງການຈັດຕັ້ງຊາວກະສິກອນ ໂດຍການສ້າງຕົວແບບຂອງການເຮັດວຽກເປັນກຸ່ມ ທີ່ສະໜັບສະໜູນຄວາມສົນໃຈ ແລະ ການດຳລົງຊີວິດທີ່ດີຂອງຊາວກະສິກອນ.
- ພາກລັດຕ້ອງມີນະໂຍບາຍ ແລະ ມາດຕະການຕ່າງໆ ໂດຍສະເພາະພັດທະນານະໂຍບາຍກ່ຽວກັບກະສິກຳອິນຊີ ແລະ ກະສິກຳທີ່ດີ ຫຼື ກົດໝາຍ ວ່າດ້ວຍກະສິກຳທີດີ ແລະ ກະສິກຳອິນຊີ ເພື່ອເຮັດໃຫ້ກະສິກຳອິນຊີສາມາດສ້າງຜົນກຳໄລ່ໃຫ້ຊາວກະສິກອນຂະໜາດນ້ອຍ. ນອກຈາກນັ້ນ, ຂະແໜງພາກລັດຕ້ອງໄດ້ສຶກສາກ່ຽວກັບແຮງງານກະສິກຳທີ່ຕິດພັນກັບການຜະລິດກະສິກຳເປັນສິນຄ້າຢູ່ ສປປ ລາວ ລວມເຖິງຄວາມສຳຄັນຂອງການຮັບຈ້າງເຮັດວຽກໃນພາກກະສິກຳ, ສຶກສາກ່ຽວກັບການເຂົ້າຫາແຫຼ່ງທຶນ ແລະ ການເກັບພາສີອາກອນ ທີ່ເປັນທາງການ ແລະ ບໍ່ເປັນທາງການ ຕໍ່ຜົນກຳໄລ່.
- ເຜີຍແຜ່ ແລະ ສັງລວມບັນດາກໍລະນີທີ່ປະສົບຜົນສຳເລັດກ່ຽວກັບການຜະລິດກະສິກຳສີຂຽວ ແລະ ທຸລະກິດຂະໜາດນ້ອຍໂດຍຜ່ານກອງປະຊຸມກຸ່ມຂະແໜງການຍ່ອຍຊາວກະສິກອນ ແລະ ທຸລະກິດກະສິກຳ ແລະ ເຄືອຂາຍຊາວກະສິກອນລາວ.
- ສົ່ງເສີມໃຫ້ມີລະບົບຮັບປະກັນຄຸນະພາບຜະລິດຕະພັນ ສຳລັບ ສປປ ລາວ ຍັງບໍ່ມີອົງການຮັບປະກັນຄຸນະພາບ ແລະ ແຫຼ່ງກຳເນີດຂອງຜະລິດຕະພັນ ທີ່ໄດ້ມາດຕະຖານສາກົນ ເພື່ອກວດກາຜະລິດຕະພັນສົ່ງ

ອອກ. ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນໃນການພິຈາລະນາທາງເລືອກ ເພື່ອແກ້ໄຂບັນຫາດັ່ງກ່າວ, ລວມທັງການສ້າງນິຕິກຳ ເພື່ອຈັດຕັ້ງລະບົບຮັບປະກັນຄຸນະພາບທີ່ໄດ້ມາດຕະຖານສາກົນ ເປັນຕົ້ນ: ລະບົບ ISO 9000 ແລະ ISO14000 ທີ່ມີສິດອອກໃບຢັ້ງຢືນ ແລະ ຮັບປະກັນໃຫ້ແກ່ພາກສ່ວນທີ່ຕ້ອງການນຳໃຊ້.

- ຊຸກຍູ້ນະໂຍບາຍ ແລະ ລະບຽບການ-ນະໂຍບາຍ ແລະ ລະບົບກົດໝາຍໃນປັດຈຸບັນແມ່ນຍັງບໍ່ພຽງພໍ. ໃນບາດກ້າວຕໍ່ໄປວຽກງານທີ່ສຳຄັນທີ່ສຸດສຳລັບ ລັດຖະບານ ສປປ ລາວ ແລະ ການພັດທະນາກະສິກຳອິນຊີແມ່ນການຮ່າງດຳລັດ ແລະ ລະບຽບການຕ່າງໆ ເພື່ອຈັດຕັ້ງປະຕິບັດ ແລະ ບັງຄັບໃຫ້ມີການນຳໃຊ້ກົດໝາຍ ແລະ ນະໂຍບາຍທາງດ້ານກະສິກຳອິນຊີ, ຄວາມປອດໄພຂອງອາຫານ ແລະ ການຮັບປະກັນຄຸນະພາບອາຫານ. ສຳລັບວຽກງານທີ່ສຳຄັນແມ່ນການສຶກສາມາດຕະຖານ ແລະ ກົດລະບຽບ ທີ່ນຳໃຊ້ໂດຍບັນດາປະເທດຄູ່ຄ້າທີ່ສຳຄັນຂອງ ສປປ ລາວ ເປັນຕົ້ນ: ປະເທດໃນກຸ່ມ ASEAN, ຈີນ, ຍີ່ປຸ່ນ, ສະຫະລັດອາເມຣິກາ ແລະ ສະຫະພາບເອີຣົບ.
- ຮັບປະກັນຜົນກະທົບທາງດ້ານບວກຂອງກະສິກຳອິນຊີຕໍ່ກັບສິ່ງແວດລ້ອມ-ຂໍ້ສະເໜີແນະທີ່ກ່າວມາຂ້າງເທິງນີ້ແມ່ນເພື່ອສົ່ງເສີມການພັດທະນາກະສິກຳອິນຊີ ເຊິ່ງມີການຄາດຄະເນວ່າຜະລິດຕະພັນກະສິກຳອິນຊີ ແມ່ນຈະມີຜົນດີຕໍ່ກັບສິ່ງແວດລ້ອມ. ເຖິງຢ່າງໃດກໍ່ຕາມ, ຜົນກະທົບດ້ານລົບ ເປັນຕົ້ນ: ການຖາງປ່າ ແລະ ການບຸກລຸກປ່າສະຫງວນ ຫຼື ການປ່ຽນແປງຂອງລະບົບນິເວດຈາກການນຳໃຊ້ເນື້ອທີ່ດິນແມ່ນສາມາດເກີດຂຶ້ນໄດ້. ດັ່ງນັ້ນ, ຈຶ່ງມີຄວາມສຳຄັນ ແລະ ຈຳເປັນທີ່ຈະຕ້ອງໄດ້ຮັບຮູ້ເຖິງຜົນກະທົບດ້ານລົບດັ່ງກ່າວ ແລະ ເຮັດໃຫ້ເກີດຂຶ້ນໃນລະດັບຕ່ຳສຸດ.

### 5.3 ບົດສະຫຼຸບຕໍ່ກັບການທ່ອງທ່ຽວອະນຸລັກນິເວດວິທະຍາແບບປະຊາຊົນມີສ່ວນຮ່ວມ

ຈາກຜົນການສຶກສາກ່ຽວກັບການທ່ອງທ່ຽວອະນຸລັກນິເວດວິທະຍາແບບປະຊາຊົນມີສ່ວນຮ່ວມ ໃນ 4 ແຂວງກຳລະນີສຶກສາ ຄື: ເມືອງປາກຊ່ອງ ແຂວງຈຳປາສັກ, ເມືອງເລົ່າງາມ ແຂວງສາລະວັນ, ເມືອງ ໄຊ ແຂວງ ອຸດົມໄຊ ແລະ ເມືອງຫຼວງນ້ຳທາ ແຂວງຫຼວງນ້ຳທາ ສາມາດສະຫຼຸບໄດ້ວ່າ: ການທ່ອງທ່ຽວອະນຸລັກນິເວດວິທະຍາແບບປະຊາຊົນມີສ່ວນຮ່ວມ ແມ່ນໜຶ່ງໃນຂະແໜງອຸດສາຫະກຳ ທີ່ສາມາດສະໜອງວຽກເຮັດງານທຳໃໝ່ໃຫ້ກັບປະຊາຊົນໃນຊຸມຊົນເປັນຈຳນວນຫຼາຍ, ສ້າງໃຫ້ມີທຸລະກິດຫຼາກຫຼາຍຂຶ້ນ (ຂາຍເຄື່ອງທີ່ລະລຶກ, ເຮືອນພັກ, ບໍລິສັດນຳທ່ຽວ ແລະ ອື່ນໆ), ພ້ອມທັງຍົກສູງຄຸນນະພາບ ແລະ ລາຄາສິນຄ້າຂອງຊຸມຊົນທ້ອງຖິ່ນ ແລະ ນຳເອົາຜົນປະໂຫຍດຫຼາຍເຂົ້າມາປະເທດຢ່າງມະຫາສານ. ສຳລັບຈຸດແຂງຂອງການພັດທະນາການທ່ອງທ່ຽວອະນຸລັກນິເວດວິທະຍາແບບປະຊາຊົນມີສ່ວນຮ່ວມແມ່ນການໄດ້ຮັບນະໂຍບາຍສະໜັບສະໜູນຈາກລັດຖະບານ ກໍ່ຄືອົງການທ່ອງທ່ຽວແຫ່ງຊາດລາວ. ນອກນັ້ນ, ຍັງມີບັນດາອົງການຈັດຕັ້ງສາກົນຕ່າງໆໃຫ້ການສະໜັບສະໜູນທາງດ້ານທຶນຮອນໃນການພັດທະນາການທ່ອງທ່ຽວຮູບແບບດັ່ງກ່າວ, ພ້ອມທັງການໃຫ້ຝຶກອົບຮົມທາງດ້ານຄວາມຮູ້ໃນການທ່ອງທ່ຽວແບບອະນຸລັກນຳອີກ. ອີກດ້ານໜຶ່ງກໍ່ແມ່ນສະພາບທາງດ້ານການເມືອງ ທີ່ມີຄວາມສະຫງົບສຸກ, ໝັ້ນຄົງ, ລວມທັງມີເສັ້ນທາງໄປມາທີ່ຂ້ອນຂ້າງສະດວກ ແລະ ເຂົ້າເຖິງງ່າຍ, ມີສະພາບອາກາດທີ່ດີ, ທັດສະນີຍະພາບທີ່ສວຍສົດງົດງາມ, ຄວາມເປັນມິດໄມຕີຕ້ອນຮັບນັກທ່ອງທ່ຽວຂອງປະຊາຊົນໃນຊຸມຊົນ ແລະ ການທີ່ຍັງຄົງຮັກສາເອກະລັກທາງດ້ານວັດທະນະທຳ ແລະ ວິຖີຊີວິດແບບດັ່ງເດີມໄວ້ຢ່າງດີ ຊຶ່ງທັງໝົດນີ້ແມ່ນຈຸດເດັ່ນທີ່ເປັນປັດໄຈໃນການດຶງດູດນັກທ່ອງທ່ຽວເຂົ້າມາສູ່ ສປປ ລາວ. ແຕ່ເຖິງຢ່າງໃດກໍ່ຕາມ, ກໍ່ຍັງຕ້ອງມີບາງຢ່າງທີ່ຕ້ອງແກ້ໄຂໂດຍດ່ວນ ເຊັ່ນ: ບຸກຄະລາກອນທາງການທ່ອງທ່ຽວແມ່ນຕ້ອງໄດ້ຮັບການຝຶກອົບຮົມຢ່າງເອົາຈິງເອົາຈັງ ເພື່ອເຮັດໃຫ້ຄຸ້ມຄອງ ແລະ ການພັດທະນາການທ່ອງທ່ຽວອະນຸລັກນິເວດວິທະຍາແບບປະຊາຊົນມີສ່ວນຮ່ວມໃຫ້ໄດ້ຮັບຜົນດີ, ແຕ່ກໍ່ບໍ່ພຽງແຕ່ຈະຍົກສູງບຸກຄະລາກອນຂອງພະນັກງານພາກລັດໃນຂັ້ນທ້ອງຖິ່ນ ແລະ ພະນັກງານຂອງທຸລະກິດການທ່ອງທ່ຽວເທົ່ານັ້ນ ຫາກຍັງຕ້ອງເອົາໃສ່ໃຫ້ຄວາມຮູ້ແກ່ປະຊາຊົນໃນຊຸມຊົນໄກ້

ຄຽງນໍາອີກ. ນອກນັ້ນ, ຍັງຕ້ອງໄດ້ເອົາໃຈໃສ່ໃນການພັດທະນາຄຸນນະພາບຂອງຜະລິດຕະພັນສິນຄ້າ, ການບໍລິການ ແລະ ຄວາມສະອາດ (ລະບົບການຄຸ້ມຄອງຂີ້ເຫຍື້ອ) ທີ່ຍັງບໍ່ທັນປະຕິບັດໄດ້ດີ ຊຶ່ງສິ່ງເຫຼົ່ານີ້ແມ່ນໄດ້ສ້າງຜົນກະທົບທາງລົບຕໍ່ການທ່ອງທ່ຽວ ແລະ ເຮັດໃຫ້ສິ່ງແວດລ້ອມໃນແຫຼ່ງທ່ອງທ່ຽວມີການເສື່ອມໂຊມນໍາອີກ, ພ້ອມນັ້ນກໍ່ຍັງຕ້ອງເອົາໃຈໃສ່ໃນການແກ້ໄຂປັງປຸງພື້ນຖານໂຄງລ່າງຕື່ມ ເຊັ່ນ: ການສະໜອງນໍ້າສະອາດ, ວິດຖ່າຍສາທາລະນະ, ບ່ອນພັກເຊົາ, ບ່ອນຈອດລົດ ແລະ ການບໍລິການຂົນສົ່ງ ແລະ ສຸດທ້າຍແມ່ນການໃຫ້ຂໍ້ມູນຂ່າວສານແກ່ນັກທ່ອງທ່ຽວ ແລະ ການຕະຫຼາດທີ່ຍັງຕ້ອງເອົາໃຈໃສ່ປັບປຸງຕື່ມອີກ.

ສໍາລັບກາລະໂອກາດຂອງການພັດທະນາການທ່ອງອະນຸລັກນິເວດວິທະຍາແບບປະຊາຊົນມີສ່ວນຮ່ວມນັ້ນ ຖືເປັນກາລະໂອກາດທີ່ດີຂອງປະເທດລາວເຮົາ ໂດຍສະເພາະຢູ່ໃນ 3 ແຂວງກໍລະນີສຶກສານີ້ ເນື່ອງຈາກທັງສາມແຂວງເປັນແຂວງທີ່ມີຊາຍແດນຕິດຈອດກັບປະເທດທີ່ມີຄວາມຕ້ອງການໃນການທ່ອງທ່ຽວຮູບແບບດັ່ງກ່າວສູງ.
ສະນັ້ນ, ກາລະໂອກາດທີ່ຈະມີນັກທ່ອງທ່ຽວເຂົ້າມາທ່ຽວນັ້ນກໍ່ຈະມີສູງເຊັ່ນດຽວກັນ, ພ້ອມນັ້ນກໍ່ເຫັນວ່າໃນພາກທຸລະກິດເອງກໍ່ຍັງມີແນວໂນ້ມເຂົ້າມາລົງທຶນໃນຂະແໜງການທ່ອງທ່ຽວຮູບແບບດັ່ງກ່າວນັບມື້ນັບຫຼາຍຂຶ້ນອີກດ້ວຍ.
ນອກຈາກນີ້, ປະຊາຊົນໃນທ້ອງຖິ່ນກໍ່ຈະມີໂອກາດໃນການເລີ່ມຕົ້ນເຮັດທຸລະກິດໃໝ່ໆ ເພື່ອສ້າງລາຍຮັບເພີ່ມຂຶ້ນ ແລະ ຊ່ວຍໃຫ້ພວກເຂົາຍົກລະດັບຊີວິດການເປັນຢູ່ດີຂຶ້ນ ແລະ ໃນທີ່ສຸດ ກໍ່ຈະຊ່ວຍໃຫ້ພວກເຂົາກ້າວໄປສູ່ການຫຼຸດຜ່ອນຈາກຄວາມທຸກຈົນໃນອະນາຄົດ. ແຕ່ເຖິງຢ່າງໃດກໍ່ຕາມ, ຕາມການລົງເກັບກໍາຂໍ້ມູນຕົວຈິງຍັງເຫັນວ່າມີສິ່ງທ້າທາຍຫຼາຍຢ່າງ ຕ້ອງໄດ້ຮັບການປັບປຸງໂດຍດ່ວນ ເຊັ່ນ: ພື້ນຖານໂຄງລ່າງຍັງບໍ່ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການໃນການພັດທະນາການທ່ອງທ່ຽວ, ການບໍລິການຂົນສົ່ງຍັງບໍ່ທັນສະດວກສະບາຍເທົ່າທີ່ຄວນ ພ້ອມທັງມີລາຄາສູງນໍາອີກ, ການເກັບຄ່າບໍລິການ ແລະ ຄ່າທໍານຽມຕ່າງໆແມ່ນຍັງສູງຢູ່ຖ້າທຽບໃສ່ກັບປະເທດອ້ອມຂ້າງ ແລະ ສິ່ງທ້າທາຍອີກອັນໜຶ່ງແມ່ນ ນັກທຸລະກິດ ທີ່ກໍາລັງດໍາເນີນທຸລະກິດດ້ານການທ່ອງທ່ຽວ ແລະ ປະຊາຊົນທ້ອງຖິ່ນ ແມ່ນກໍາລັງປະເຊີນກັບເງິນທຶນທີ່ບໍ່ພຽງພໍ, ຍັງຂາດປະສົບການ ແລະ ມີທັກສະວິຊາຊີບທີ່ຈໍາກັດໃນການຕອບສະໜອງຕາມຄວາມຕ້ອງການດ້ານການທ່ອງທ່ຽວໃນອະນາຄົດ.

**ການມີສ່ວນຮ່ວມລະຫວ່າງພາກລັດ, ເອກະຊົນ ແລະ ປະຊາຊົນໃນທ້ອງຖິ່ນ:** ຈາກການລົງເກັບກໍາຂໍ້ມູນນໍາປະຊາຊົນທີ່ອາໄສຢູ່ເຂດໄກ້ຄຽງແຫຼ່ງທ່ອງທ່ຽວ ແມ່ນພວກເຂົາມີຄວາມເຫັນດີ ແລະ ມີຄວາມເຊື່ອໝັ້ນວ່າການທ່ອງ ທ່ຽວອະນຸລັກນິເວດວິທະຍາແບບປະຊາຊົນມີສ່ວນຮ່ວມ ເປັນກອບແນວຄວາມຄິດທີ່ດີ ເນື່ອງຈາກເປັນການທ່ອງທ່ຽວທີ່ມີຄວາມຍືນຍົງ ແລະ ເປັນການປົກປັກຮັກສາສະພາບແວດລ້ອມໃນຂອບເຂດພື້ນທີ່ຂອງພວກເຂົາໃຫ້ມີຍືນຍົງ, ພາຍຫຼັງປະຊາຊົນໃນຊຸມຊົນໄດ້ເຂົ້າມາມີສ່ວນຮ່ວມ ແລະ ຮູ້ຈັກກ່ຽວກັບການທ່ອງທ່ຽວອະນຸລັກນິເວດວິທະຍາຫຼາຍຂຶ້ນ ປະຊາຊົນສ່ວນໃຫຍ່ໄດ້ມີຄວາມຮັບຮູ້ ແລະ ເຫັນພາບໄດ້ຊັດເຈນຫຼາຍຂຶ້ນກ່ຽວກັບຄວາມສໍາຄັນຂອງການປົກຮັກສາສິ່ງແວດລ້ອມ, ຮັກສາວັດທະນະທໍາຮີດຄອງປະເພນີທີ່ເປັນເອກະລັກ, ຮັກສາວິຖີການດໍາລົງຊີວິດແບບດັ່ງເດີມ ແລະ ຮັກສາຄວາມເປັນເອກະລັກຂອງຜະລິດຕະພັນ, ພ້ອມນີ້ພວກເຂົາໄດ້ບອກຕື່ມອີກວ່າ ການທ່ອງທ່ຽວອະນຸລັກນິເວດວິທະຍາ ຍັງຊ່ວຍປັບປຸງສິ່ງອໍານວຍຄວາມສະດວກຕ່າງໆໃນຊຸມຊົນ ແລະ ເຮັດໃຫ້ຊີວິດການເປັນຢູ່ໄດ້ຮັບການພັດທະນາຂຶ້ນໄປເປັນກ້າວໆ. ນອກຈາກນີ້, ປະຊາຊົນທ້ອງຖິ່ນຍັງໄດ້ບອກຕື່ມອີກວ່າ ການທ່ອງທ່ຽວອະນຸລັກນິເວດວິທະຍາໄດ້ກະຕຸ້ນໃຫ້ເຂົາເຈົ້າຮຽນພາສາຕ່າງປະເທດ (ພາສາອັງກິດ) ຕື່ມອີກ. ແຕ່ເຖິງຢ່າງໃດກໍ່ຕາມ, ຍັງສັງເກດເຫັນວ່າການມີສ່ວນຮ່ວມຈາກຊຸມຊົນທ້ອງຖິ່ນໃນກິດຈະກໍາການທ່ອງທ່ຽວດັ່ງກ່າວ ຍັງບໍ່ທັນໄດ້ມີການຈັດການ ແລະ ການວາງແຜນໃນການຈັດຕັ້ງປະຕິບັດຮ່ວມກັນ ລະຫວ່າງຊຸມຊົນ ແລະ ເຈົ້າຂອງທຸລະກິດການທ່ອງທ່ຽວດີເທົ່າທີ່ຄວນ ເຮັດໃຫ້ປະຊາຊົນໃນຊຸມຊົນເຂດໃກ້ຄຽງແຫຼ່ງທ່ອງທ່ຽວດັ່ງກ່າວ ບໍ່ໄດ້ຮັບຜົນປະໂຫຍດຢ່າງທົ່ວເຖິງ ໂດຍສະເພາະ ຄົວເຮືອນທຸກຍາກຍິ່ງບໍ່ມີສ່ວນຮ່ວມໃນກິດຈະກໍາສ້າງລາຍຮັບຫຍັງເລີຍຕໍ່ການທ່ອງທ່ຽວໃນເຂດດັ່ງກ່າວ.

ພ້ອມນັ້ນ, ທາງພາກລັດ, ເອກະຊົນ ແລະ ປະຊາຊົນໃນຊຸມຊົນ ທີ່ຢູ່ໃກ້ຄຽງກັບໂຄງການທ່ອງທ່ຽວ ຕ້ອງເພີ່ມທະວີການຮ່ວມມືກັນໃນການອະນຸລັກປົກປັກຮັກສາສິ່ງແວດລ້ອມໃນເຂດບໍລິເວນແຫຼ່ງທ່ອງທ່ຽວ ເປັນຕົ້ນແມ່ນການແກ້ໄຂບໍ່ໃຫ້ມີຜົນກະທົບຕໍ່ຊຸມຊົນທີ່ຢູ່ປາຍນໍ້າຂອງໂຄງການ, ການກໍາຈັດບັນຫາເລື່ອງຂີ້ເຫຍື້ອ, ການລັກລອບລ່າສັດໃນເຂດປ່າສະຫງວນຂອງປະຊາຊົນທົ່ວໄປ ພ້ອມທັງຮ່ວມມືກັນພັດທະນາພື້ນຖານໂຄງລ່າງ ແລະ ສິ່ງອໍານວຍຄວາມສະດວກດ້ານຕ່າງໆໃນແຫຼ່ງທ່ອງທ່ຽວໃຫ້ສາມາດຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງນັກທ່ອງທ່ຽວໄດ້. ພາກລັດ ແລະ ເອກະຊົນ ຕ້ອງເອົາໃຈໃສ່ຢ່າງແຂງຂັນໃນການຍົກລະດັບຂອງບຸກຄະລາກອນທີ່ຕິດພັນກັບການທ່ອງທ່ຽວໃຫ້ມີຄຸນນະພາບສູງຂຶ້ນ ໂດຍສະເພາະແມ່ນເລື່ອງການບໍລິຫານຈັດການ, ການບໍລິການ, ການສ້າງຜະລິດຕະພັນການທ່ອງທ່ຽວທີ່ເປັນເອກະລັກຂອງທ້ອງຖິ່ນໃຫ້ຫຼາກຫຼາຍ ໂດຍສະເພາະແມ່ນການຂາຍເຄື່ອງຂອງທີ່ລະລຶກ ແລະ ອາຫານການກິນທີ່ເປັນເອກະລັກສະເພາະ ແລະ ປອດສານພິດຕົກຄ້າງ.

### 5.4 ຂໍ້ສະເໜີແນະຕໍ່ກັບການທ່ອງທ່ຽວອະນຸລັກນິເວດວິທະຍາແບບປະຊາຊົນມີສ່ວນຮ່ວມ

1. ການສ້າງສະພາບແວດລ້ອມທີ່ດີໃນດ້ານການເມືອງ ແລະ ເສດຖະກິດແມ່ນພື້ນຖານອັນໃຫຍ່ຫຼວງ ສໍາລັບຂະແໜງການທ່ອງທ່ຽວ ໂດຍສະເພາະການທ່ອງທ່ຽວອະນຸລັກນິເວດວິທະຍາແບບປະຊາຊົນມີສ່ວນຮ່ວມນີ້. ດັ່ງນັ້ນ, ເຮົາຄວນປູກຈິດສໍານຶກກ່ຽວກັບການທ່ອງທ່ຽວດັ່ງກ່າວ ໃຫ້ແກ່ພະນັກງານລັດຖະກອນ, ປະຊາຊົນ ແລະ ທົ່ວສັງຄົມໃຫ້ເປັນຂະບວນກວ້າງຂວາງ ເພື່ອເພີ່ມທະວີການປົກປັກຮັກສາ ແລະ ພັດທະນາສະຖານທີ່ທ່ອງທ່ຽວທາງທໍາມະຊາດ, ປະຫວັດສາດ ແລະ ວັດທະນະທ□າໃນ ສປປ ລາວ ໃຫ້ມີຄວາມຫຼາກຫຼາຍ ແລະ ສວຍສົດງົດງາມ. ເປັນຕົ້ນແມ່ນປົກປັກຮັກສາຮີດຄອງປະເພນີ, ວິຖີການດໍາລົງຊີວິດຂອງປະຊາຊົນບັນດາເຜົ່າ ແລະ ອື່ນໆ ເພື່ອດຶງດູດໃຫ້ນັກທ່ອງທ່ຽວມາພັກເຊົາຢູ່ປະເທດລາວເຮົາຍາວຂຶ້ນ.
2. ເພີ່ມທະວີໃນການຊຸກຍູ້, ສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງ ການທ່ອງທ່ຽວອະນຸລັກແບບມີສ່ວນຮ່ວມຢ່າງກວ້າງຂວາງຈາກປະຊາຊົນ ແລະ ຊຸມຊົນຢູ່ໃນທ້ອງຖິ່ນເຂດທ່ອງທ່ຽວນັ້ນໆ ພ້ອມທັງຮັບປະກັນການສ້າງວຽກເຮັດງານທໍາ, ການສ້າງລາຍຮັບ ແລະ ຮັບປະກັນການກະຈາຍຜົນປະໂຫຍດທີ່ໝັ້ນຄົງຂອງປະຊາຊົນໃນທ້ອງຖິ່ນ ໃຫ້ຢ່າງທົ່ວເຖິງ ແລະ ເປັນທໍາ.
3. ພັດທະນາ ແລະ ສົ່ງເສີມການທ່ອງທ່ຽວໃຫ້ສອດຄ່ອງກັບຄວາມອາດສາມາດຮອງຮັບຕົວຈິງ, ສ້າງບັນດາແຫຼ່ງທ່ອງທ່ຽວໃຫ້ເຊື່ອມຈອດກັນໃນລະຫວ່າງແຂວງໄກ້ຄຽງກາຍເປັນວົງຈອນການທ່ອງທ່ຽວທາງດ້ານທໍາມະຊາດ , ວັດທະນະທ□າ ແລະ ປະຫວັດສາດ ທີ່ສາມາດດຶງດູດ, ເຊື່ອຕໍ່ກັນພາຍໃນປະເທດ ແລະ ເຊື່ອຕໍ່ກັບປະເທດໃກ້ຄຽງ ພ້ອມທັງປັບປຸງຄຸນນະພາບ ແລະ ການບໍລິການ ທີ່ແນໃສ່ການຮັກສາພາບພົດ ແລະ ຊື່ສຽງຂອງປະເທດເຮົາ.
4. ພາກລັດ ແລະ ເອກະຊົນ ຕ້ອງສຸມໃສ່ໃນການໂຄສະນາເຜີຍແຜ່ສະຖານທີ່ທ່ອງທ່ຽວ ໂດຍສະເພາະສະຖານທີ່ທ່ອງທ່ຽວທີ່ເປັນຈຸດເດັ່ນ ເພື່ອໃຫ້ທົ່ວໂລກຮັບຮູ້ຢ່າງກວ້າງຂວາງ ແລະ ດຶງດູດນັກທ່ອງທ່ຽວໃນພາກພື້ນ ແລະ ສາກົນໃຫ້ມາທ່ອງທ່ຽວໃນ ສປປ ລາວ ຫຼາຍຂຶ້ນ ເນື່ອງຈາກການໂຄສະນາ ແລະ ການຕະຫຼາດ ແມ່ນປັດໃຈສໍາຄັນທີ່ສຸດໃນການສົ່ງເສີມການທ່ອງທ່ຽວ. ສະນັ້ນ, ການໂຄສະນາການທ່ອງທ່ຽວລາວຜ່ານເວັບໄຊ້ ແລະ ລາຍການໂທລະພາບສາກົນ ຄວນໄດ້ຮັບການພິຈາລະນາຈາກລັດຖະບານ ເພື່ອດຶງດູດນັກທ່ອງທ່ຽວຈາກພາກພື້ນ ແລະ ສາກົນໃຫ້ເຂົ້າມາທ່ອງທ່ຽວຫຼາຍຂຶ້ນ.
5. ປັບປຸງຄຸນນະພາບຂອງການບໍລິການການທ່ອງທ່ຽວ ແລະ ຂະແໜງການທີ່ຕິດພັນໃຫ້ໄດ້ມາດຕະຖານ ເຊັ່ນ: ບໍລິການຂົນສົ່ງໂດຍສານ, ບໍລິການໂຮງແຮມ, ເຮືອນພັກ-ຣີສອດ, ຮ້ານອາຫານ, ສະຖານບັນເທີງຕ່າງໆດ້ວຍ

ການສະໜອງດ້ານທຶນຮອນ, ການຝຶກອົບຮົມ ເພື່ອເພີ່ມທັກສະໃຫ້ແກ່ພະນັກງານໃນຂະແໜງການດັ່ງກ່າວ, ປັບປຸງພື້ນຖານໂຄງລ່າງທັງດ້ານຈຳນວນ ແລະ ຄຸນນະພາບເພື່ອຮັບປະກັນສະຖານທີ່ທ່ອງທ່ຽວທີ່ປອດໄພ ແລະສະດວກສະບາຍ.

6. ຂະແໜງການກະສິກຳ ແລະ ຫັດຖະກຳ ຕ້ອງເອົາໃຈໃສ່ຊຸກຍູ້ໃນການຜະລິດສະບຽງອາຫານ ແລະ ເຄື່ອງທີ່ລະນຶກ ເພື່ອຕອບສະໜອງຄວາມຕ້ອງການຂອງການທ່ອງທ່ຽວໃຫ້ພຽງພໍທາງດ້ານປະລິມານ ແລະ ຄຸນນະພາບ, ພ້ອມທັງປະສານສົມທົບກັບຂະແໜງໂຍທາທິການ ແລະ ຂົນສົ່ງ ເພື່ອປັບປຸງເສັ້ນທາງ, ໄຟຟ້າ ແລະ ນ້ຳປະປາ ໃຫ້ເຂົ້າເຖິງສະຖານທີ່ທ່ອງທ່ຽວໃຫ້ມີຄວາມສະດວກປອດໄພ;

7. ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕ້ອງເອົາໃຈໃສ່ຊຸກຍູ້ໃນການຈັດສັນ ແລະ ກຳນົດຂອບເຂດສະຖານທີ່ທ່ອງທ່ຽວ, ເຂດສະຫງວນໃນການປົກປັກຮັກສາ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດໃຫ້ມີປະສິດທິພາບສູງສຸດ;

8. ບັນດາຫົວໜ່ວຍທຸລະກິດໃນຂະແໜງການທ່ອງທ່ຽວ ເປັນຕົ້ນແມ່ນ: ບໍລິສັດທ່ອງທ່ຽວ, ພາກສ່ວນບໍລິການຂົນສົ່ງໂດຍສານ, ສະຖານທີ່ພັກແຮມ, ຮ້ານອາຫານ-ກິນດື່ມ, ບໍລິການທ່ອງທ່ຽວປະເພດອື່ນໆ, ນຳໃຊ້ພະລັງງານແບບປະຢັດ ແລະ ນຳໃຊ້ຜະລິດຕະພັນທີ່ສະອາດ ແລະ ເປັນມິດກັບສິ່ງແວດລ້ອມ ເພື່ອປະກອບສ່ວນເຂົ້າໃນການປົກປັກຮັກສາສິ່ງແວດລ້ອມ ແລະ ສົ່ງເສີມການພັດທະນາແບບຍືນຍົງ, ພ້ອມທັງເອົາໃຈໃສ່ຊຸກຍູ້ໃນການສ້າງກິດຈະກຳການທ່ອງທ່ຽວທາງວັດທະນະທຳໃຫ້ມີຄວາມຫຼາກຫຼາຍ ແລະ ປະທັບໃຈແກ່ນັກທ່ອງທ່ຽວເພື່ອແກ່ຍາວເວລາ ແລະ ຄ່າໃຊ້ຈ່າຍດ້ວຍຄວາມພໍໃຈຂອງບັນດານັກທ່ອງທ່ຽວ ເພື່ອເພີ່ມມູນຄ່າທາງເສດຖະກິດ, ສ້າງວຽກເຮັດງານທຳ ແລະກິດຈະກຳສ້າງລາຍໄດ້ໃຫ້ແກ່ປະຊາຊົນ.

## ເອກະສານອ້າງອີງ


ກະຊວງແຜນການ ແລະ ການລົງທຶນ, 2015. ສັງລວມຂໍ້ມູນການພັດທະນາເສດຖະກິດ-ສັງຄົມ ໄລຍະ 40 ປີ ຂອງ ສປປ ລາວ, ນະຄອນຫຼວງວຽງຈັນ: 2015.

ADB, 2001. Participatory poverty assessment Lao PDR. Asian Development Bank report, p. 287.Anon., 2005. Organic Matters. JUly, 1(1), p. 2.

Anon., ເລກທີ.ວັນທີ. [ເຊື່ອມຕໍ່ເຄືອຂ່າຍ] Available at: https://sites.google.com/site/rm324494/home/khwam-hmay-kar-thxng-theiyw-cheing-xnuraks/cud-prasngkh-khxng-kar-thxng-theiyw-cheing-xnuraks/naewthang-kar-sng-serim-kar-theiyw-cheing-xnuraks

Anon., ເລກທີ.ວັນທີ. https://sites.google.com/site/rm324494/home/khwam-hmay-kar-thxng-theiyw-cheing-xnuraks/cud-prasngkh-khxng-kar-thxng-theiyw-cheing-xnuraks/naewthang-kar-sng-serim-kar-theiyw-cheing-xnuraks. [ເຊື່ອມຕໍ່ເຄືອຂ່າຍ].

Castella, J.-C., Thephavanh, M. & Vongkhamsao, V., 2011. Evolving relations between agriculture and forest in Viengkham District, Luang Prabang Province. Agriculture and Forestry Magazine, Issue 23, p. 22.

CPI&UNDP, 2006. National Human Development Report: International Trade and Human Development. Vientiane Capital: ເອສ.ເອນ.

FAO, 2020. Lao Climate Service for Agriculture. Vientiane Capital: Global Enviroment Facility Investing in our planet.

FAO, I., 2012. Global Organic Markey Access, Asia Regional Organic Standand. ເອສ.ເອລ.:FAO,IFOAM, UNCTAD.

IFOAM, 2021. The World of Organic Agriculture Statistics and Emerging Trends 2021. RENNES: ເອສ.ເອນ.

Lao Statistic Bureau, M. o. P. a. I., 2018. Laos statistic information service.. [ເຊື່ອມຕໍ່ເຄືອຂ່າຍ] Available at: https://www.lsb.gov.la/MoAF, 2011. Handbook of Organic Agriculture for Entrepreneurs in Lao PDR, Vientiane Capital: ເອສ.ເອນ.

MoAF, 2018. Report on the Implement of Agriculture, Forestry and Rural Development Plan, Vientiane Capital: ເອສ.ເອນ.

NIER, 2020. ບົດລາຍງານເສດຖະກິດປະຈໍາປີ 2020, ເອສ.ເອລ.: ເອສ.ເອນ.Panyyakul, V., 2009. Organic Agriculture in Lao PDR: Overview and Development Option. p. p.7.

Phimmavong, S., Ozarska, B., Midgley, S. & Keenan, R., 2009. Forest and Plantation development in Laos: history, development and impact for rural communities. ລະດັບສຽງ Volume11, pp. 501-513.

(2016-2020.ວິໄສທັດປີ2035,ແຜນຍຸດທະສາດປີ2030,ແຜນພັດທະນາແລະສົ່ງເສີມການທ່ອງທ່ຽວ5ປີ(2021-2025), ແຂວງຫຼວງນໍ້າທາ: ພະແນກຖະແຫຼງຂ່າວ,ວັດທະນະທໍາແລະທ່ອງທ່ຽວ.

ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວປະຈໍາ ປີ 2020 ແລະ ທິດທາງແຜນການປະຈໍາປີ 2021, ເມືອງຫຼວງນໍ້າທາ: ຫ້ອງການຖະແຫຼງຂ່າວ, ວັດທະນະທ□າ ແລະ ທ່ອງທ່ຽວ ເມືອງຫຼວງນໍ້າທາ.

ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານຫ້ອງການ ຖ.ວ.ທ ເມືອງປາກຊ່ອງ ໃນໄລຍະ 1 ປີ 2020 ແລະ ທິດທາງແຜນການ ຕໍ່ໜ້າ ປີ 2021., ເມືອງປາກຊ່ອງ ແຂວງຈ□າປາສັກ: ຫ້ອງການ ຖ.ວ.ທ ເມືອງປາກຊ່ອງ.

ບົດສະຫຼຸບຂອງຫ້ອງການຖະແຫຼງຂ່າວ,ວັດທະນະທໍາ ແລະ ທ່ອງທ່ຽວ ເມືອງເລົ່າງາມ ສົກປີ 2020 ແລະ ທິດທາງແຜນການ ສົກປີ 2021, ເມືອງເລົ່າງາມ: ຫ້ອງການ ຖວທ ເມືອງ.

ບົດສະຫຼຸບຫຍໍ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປີ 2020 ແລະ ແຜນພັດທະນາເສດຖະກິດ-ສັງຄົມ ປີ 2021 ຂອງແຂວງສາລະວັນ, ແຂວງສາລະວັນ: ພະແນກແຜນການ ແລະ ການລົງທຶນແຂວງສາລະວັນ.

ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປີ 2020 ແລະ ທິດທາງແຜນການປີ 2021, ເມືອງເລົ່າງາມ: ຫ້ອງການແຜນການເມືອງເລົ່າງາມ.

ການທົບທວນກອງປະຊຸມອິນຊີລາວໃນໄລຍະຜ່ານມາ ແລະ ຍຸດທະສາດກະສິກໍາອິນຊີ.ˈໃນ: ນະຄອນຫຼວງວຽງຈັນ: ເອສ.ເອນ., p. 7.

ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານຖ.ວ.ທແຂວງສາລະວັນ, 2020. ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານຖະແຫຼງຂ່າວ,ວັດທະນະທໍາແລະທ່ອງທ່ຽວສົກປີ2020ແລະທິດທາງແຜນການສົກປີ2021, ແຂວງສາລະວັນ: ພະແນກຖະແຫຼງຂ່າວ,ວັດທະນະທໍາແລະທ່ອງທ່ຽວແຂວງສາລະວັນ.

ລັດຖະບານ ສປປ ລາວ, 2020. ດໍາລັດວ່າດວ້ຍ ກຸ່ມ ແລະ ສະຫະກອນ. ການສະເໜີ ແລະ ການໃຫ້ນະໂຍບາຍສົ່ງເສີມ, 11 ພະຈິກ, p. 18.

ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາແລະສົ່ງເສີມການທ່ອງທ່ຽວ 5 ປີ (2016-2020) ວິໄສທັດ ປີ 2035, ແຜນຍຸດທະສາດ ປີ 2030, ແຜນພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ 5 ປີ (2021-2025), ແຂວງຫຼວງນໍ້າທາ: ພະແນກຖະແຫຼງຂ່າວ, ວັດທະນະທ□າ ແລະ ທ່ອງທ່ຽວ.

ວິໄສທັດຮອດປີ2030, ຍຸດທະສາດຮອດ ປີ 2025 ແລະ ແຜນພັດທະນາວຽກງານຖະແຫຼງຂ່າວ,ວັດທະນະທໍາ ແລະ ທ່ອງທ່ຽວ2016-2020, ແຂວງສາລະວັນ: ພະແນກຖະແຫຼງຂ່າວ, ວັດທະນະທ□າ ແລະ ທ່ອງທ່ຽວແຂວງສາລະວັນ.

ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາແລະສົ່ງເສີມການທ່ອງທ່ຽວ 5 ປີ (2016-2020) ວິໄສທັດປີ2035, ແຜນຍຸດທະສາດ ປີ 2030, ແຜນພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ 5 ປີ (2021-2025), ແຂວງຫຼວງນ□້າທາ: ພະແນກຖະແຫຼງຂ່າວ,ວັດທະນະທໍາແລະທ່ອງທ່ຽວ.

ແຜນການ 5 ປີ ຄັ້ງທີ IX (2020-2024) ຫ້ອງການແຜນການເມືອງປາກຊ່ອງ, 2015. ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2015-2019) ແລະ ແຜນການ 5 ປີ ຄັ້ງທີ IX (2020-2024), ເມືອງປາກຊ່ອງ, ແຂວງຈໍາປາສັກ: ຫ້ອງການແຜນການເມືອງປາກຊ່ອງ.

ສະຖາບັນຄົ້ນຄ້ວາວິທະຍາສາດ;ແລະສິ່ງແວດລ້ອມຂອງປະເທດໄທ1996.

ໂຄງການພັດທະນາກະສິກຳສະອາດ, 2019. [ເຊື່ອມຕໍ່ເຄືອຂ່າຍ] Available at: https://www.jica.go.jp/project/english/laos/026/newsletter/c8h0vm0000f8rwnv-att/newsletter_01.pdf

ໂຄງການພັດທະນາກະສິກຳສະອາດ, 2020. [ເຊື່ອມຕໍ່ເຄືອຂ່າຍ] Available at: https://www.jica.go.jp/project/english/laos/026/ newsletter/c8h0vm0000f8rwnv-att/newsletter_01.pdf

ກະຊວງແຜນການ ແລະ ການລົງທຶນ
ຖະໜົນ ສຸພານຸວົງ  ບ້ານ ສີຖານເໜືອ ເມືອງສີໂຄດຕະບອງ
ເບີໂທລະສັບ: +85621 254826